# ປື້ມແນະນຳ

## ການສຶກສາພົນລະເມືອງໂລກ
## Global Citizenship Education

ກົມຮ່ວມມືກັບຕ່າງປະເທດ
ກະຊວງສຶກສາທິການ ແລະ ກິລາ
2021

# ປື້ມແນະນຳ
# ການສຶກສາພົນລະເມືອງໂລກ

**ຮຽບຮຽງໂດຍ**


1. ກົມຮ່ວມມືກັບຕ່າງປະເທດ
   ອຈ ວຽງອາທິດ ຂາວປະເສີດ
   ອຈ ລຳພູນ ສູນດາຣາ
   ອຈ ແສງປະພາ ໂຫລານຸພາບ
   ອຈ ໂອວິລຸດ ສຸກສະຫວັດ
   ອຈ ວົງວິໄລ ສຸນທະວົງ
   ອຈ ຄຳມະນີ ໄຊຍະເຮືອງ
   ອຈ ລັດຕະນະພອນ ສີດາວັນ
   ອຈ ອິດທິດາ ຍັງນຸວົງ
2. ກົມສ້າງຄູ
   ອຈ ວົງເດືອນ ໂອໄສ
   ອຈ ບົວເພັດ ອິນທະວົງ
3. ກົມສາມັນສຶກສາ
   ອຈ ໄຊຍະເດດ ຊົງມີໄຊ
4. ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ
   ອຈ ແສງເງິນ ໄວຍາກອນ
   ອຈ ຊົ່ເນັ່ງ ຢີງເນັ່ງຊົ່ງ
   ອຈ ເມັດແກ້ວ ພົມວົງສາ
5. ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ
   ອຈ ທອງມາ ສຸລິຍະວົງສາ
6. ວິທະຍາໄລຄູດົງຄຳຊ້າງ
   ອຈ ສີພອນ ວັນນະລາດ
7. ວິທະຍາໄລຄູຫຼວງພະບາງ
   ອຈ ອານຸສິດ ມະໂນສານ
8. ວິທະຍາໄລຄູຄັງໄຂ
   ອຈ ລີວັນ ວົງດານັນທະພັນ
9. ວິທະຍາໄລສິລະປະສຶກສາ
   ອຈ ແກ້ວບັງອອນ ຈັນທະວິສຸກ
10. ວິທະຍາໄລຄູສົງອົງຕື້
    ອຈ ບຸນຈັນ ໄຊວຸດ
11. ວິທະຍາໄລຄູບ້ານເກິນ
    ອຈ ປະຢັດ ລັດຕະນາ
12. ວິທະຍາໄລພະລະສຶກສາ
    ອຈ ມົຊົ່ງ ປ່າເຈີ



**ກວດແກ້ໂດຍ**: ທ່ານ ຮສ. ປອ. ນາງ ສີລິນທອນ ສັກລໍຄຳ, ຫົວໜ້າກົມຮ່ວມມືກັບຕ່າງປະເທດ
ທ່ານ ນາງ ທອງແດງ ສົມຈັນມະວົງ, ຮອງຫົວໜ້າກົມຮ່ວມມືກັບຕ່າງປະເທດ
ທ່ານ ນາງ ແສງເງິນ ໄວຍາກອນ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ (ສວສ)

**ເຜີຍແຜ່ໂດຍ**: ຫ້ອງການເລຂາ ຄະນະກຳມາທິການແຫ່ງຊາດລາວ ເພື່ອອຸຍແນສໂກ, ກົມຮ່ວມມືກັບຕ່າງປະເທດ ກະຊວງສຶກສາທິການ ແລະ ກິລາ

**ອອກແບບ ແລະ ພິມເຂົ້າໜ້າໂດຍ**: ອຈ. ວົງວິໄລ ສຸນທະວົງ

**ສະໜັບສະໜູນໂດຍ**: ອຸຍແນສໂກ (UNESCO), ພາຍໃຕ້ໂຄງການປະກອບສ່ວນ ຫຼື Participation Programme

# ຄຳນຳ

ປື້ມແນະນຳການສຶກສາພົນລະເມືອງໂລກໄດ້ຮັບການອອກແບບ ແລະ ພັດທະນາຂຶ້ນ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການພື້ນຖານຂອງມະນຸດໃນການດຳລົງຊີວິດຢູ່ຮ່ວມກັນຢ່າງສັນຕິ ແລະ ເພື່ອສົ່ງເສີມໃຫ້ທຸກຄົນໄດ້ຮັບການສຶກສາຢ່າງເຕັມຮູບແບບ, ເທົ່າທຽມກັນ, ມີອິດສະຫຼະໃນການແລກປ່ຽນແນວຄວາມຄິດເຫັນ, ມີຄວາມມຸ່ງໝັ້ນ ເພື່ອສ້າງສັນຕິພາບສາກົນ ແລະ ຄວາມຜາສຸກຂອງມວນມະນຸດທັງໃນປັດຈຸບັນ ແລະ ອະນາຄົດ.

ຫ້ອງການເລຂາ ຄະນະກຳມາທິການແຫ່ງຊາດລາວ ເພື່ອອຸຍແນສໂກ ຈຶ່ງໄດ້ຮຽບຮຽງປື້ມແນະນຳການສຶກສາພົນລະເມືອງໂລກສະບັບນີ້ຂຶ້ນມາ ເພື່ອສະໜອງຂໍ້ມູນ, ເພີ່ມຄວາມຮູ້, ຄວາມເຂົ້າໃຈໃນຂະບວນປະຕິບັດ, ການຮຽນການສອນ, ການຝຶກອົບຮົມ ແລະ ການຄົ້ນຄວ້າອື່ນໆ ເພື່ອພັດທະນາຕົນເອງ, ໝູ່ເພື່ອນ ແລະ ທຸກໆຄົນໃນສັງຄົມໃຫ້ກາຍເປັນພົນລະເມືອງທີ່ດີຂອງໂລກ ແລະ ສາມາດດຳລົງຊີວິດຢູ່ຮ່ວມກັນຢ່າງສັນຕິ ຊຶ່ງປື້ມແນະນຳການສຶກສາພົນລະເມືອງໂລກນີ້ ໄດ້ລວມເອົາຂໍ້ມູນພື້ນຖານດ້ານທິດສະດີ ແລະ ການສອດແຊກເຂົ້າໃນການຮຽນການສອນ, ການຝຶກອົບຮົມ ເພື່ອເຮັດໃຫ້ຄູ, ນັກຮຽນ, ນັກສຶກສາ ແລະ ຜູ້ສົນໃຈໄດ້ນຳໃຊ້ເປັນເອກະສານອ້າງອີງໃນການຄົ້ນຄວ້າຂັ້ນຕໍ່ໄປ.

ເຖິງຢ່າງໃດກໍຕາມ ປື້ມແນະນຳການສຶກສາພົນລະເມືອງໂລກນີ້ ບໍ່ສາມາດຫຼີກເວັ້ນຂໍ້ຂາດຕົກບົກຜ່ອງໄດ້ ສະນັ້ນ, ຫ້ອງການເລຂາ ຄະນະກຳມາທິການແຫ່ງຊາດລາວ ເພື່ອອຸຍແນສໂກ ກົມກົມຮ່ວມມືກັບຕ່າງປະເທດຫວັງຢ່າງຍິ່ງວ່າຈະໄດ້ຄຳຄິດເຫັນ, ຂໍ້ສະເໜີ ຫຼື ຂໍ້ແນະນຳຈາກຄູ, ນັກຮຽນ, ນັກສຶກສາ ແລະ ນັກຄົ້ນຄວ້າ ເພື່ອໄປພິຈາລະນາປັບປຸງໃນໂອກາດຕໍ່ໄປ, ທຸກໆຄຳຕຳນິຕິຊົມຂອງທ່ານມີຄວາມສຳຄັນ ແລະ ເປັນການປະກອບສ່ວນເຂົ້າໃນການປັບປຸງ ແລະ ພັດທະນາປື້ມແນະນຳການສຶກສາພົນລະເມືອງໂລກນີ້ໃຫ້ມີເນື້ອໃນສົມບູນ ແລະ ມີປະສິດທິພາບສູງຂຶ້ນ.

**ຫົວໜ້າກົມຮ່ວມມືກັບຕ່າງປະເທດ**

ສີສົມທອນ ສັກລໍຄຳ

# ຄຳສັບຫຍໍ້

| | |
|---|---|
| APCEIU | : Asia-Pacific Centre of Education for International Understanding |
| | : ສູນການສຶກສາ ເພື່ອຄວາມເຂົ້າໃຈລະຫວ່າງຊາດອາຊີ-ປາຊີຟິກ |
| EFA | : Education for All |
| | : ການສຶກສາເພື່ອທຸກຄົນ |
| GCED | : Global Citizenship Education |
| | : ການສຶກສາພົນລະເມືອງໂລກ (ສພລ) |
| GDCF | : Global Digital Citizen Foundation |
| | : ມູນນິທິພົນລະເມືອງດ້ານດິຈິຕອນໂລກ |
| IBE | : International Bureau of Education |
| | : ສຳນັກງານການສຶກສາສາກົນ |
| iEARN | : International Education and Resource Network |
| | : ເຄືອຂ່າຍການສຶກສາ ແລະ ຊັບພະຍາກອນສາກົນ |
| MDGs | : United Nations Millennium Development Goals |
| | : ເປົ້າໝາຍສະຫັດສະວັດດ້ານການພັດທະນາຂອງສະຫະປະຊາຊາດ |
| Oxfam | : ອົງການອັອກຟາມ |
| SDGs | : Sustainable Development Goals |
| | : ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) |
| UN Women | : United Nations Entity for Gender Equality and the Empowerment of Women |
| | : ອົງການສະຫະປະຊາຊາດ ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງຂອງແມ່ຍິງ |
| UNCHR | : United Nations High Commissioner for Refugees |
| | : ຄະນະກຳມະການຂັ້ນສູງຂອງສະຫະປະຊາຊາດ ເພື່ອຊາວອົບພະຍົບ |
| UNDP | : United Nations Development Programme |
| | : ອົງການສະຫະປະຊາຊາດ ເພື່ອການພັດທະນາ |
| UNESCO | : United Nations Educational, Scientific and Cultural Organization |
| | : ອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ |
| UNFPA | : United Nations Population Fund |
| | : ກອງທຶນປະຊາກອນຂອງອົງການສະຫະປະຊາຊາດ |
| UNICEF | : United Nations International Children's Emergency Fund |
| | : ກອງທຶນສຸກເສີນສຳລັບເດັກສາກົນຂອງສະຫະປະຊາຊາດ |
| WB | : World Bank |
| | : ທະນາຄານໂລກ |

## ສາລະບານ


**1. ການນຳສະເໜີພາບລວມຂອງການສຶກສາພົນລະເມືອງໂລກ ........ 1**

1.1 ປະຫວັດຄວາມເປັນມາຂອງ "ການສຶກສາພົນລະເມືອງໂລກ" ........ 1

1.2 ວິໄສທັດການສຶກສາພົນລະເມືອງໂລກ ........ 2

1.3 ທ່າອ່ຽງຂອງການສຶກສາພົນລະເມືອງໂລກ ........ 2

**2. ແນວຄວາມຄິດຂອງການສຶກສາພົນລະເມືອງໂລກ ........ 3**

2.1 ການສຶກສາພົນລະເມືອງໂລກແມ່ນຫຍັງ? ........ 3

2.2 ຂອບເຂດແນວຄວາມຄິດພື້ນຖານຂອງການສຶກສາພົນລະເມືອງໂລກ ........ 4

2.3 ເປົ້າໝາຍຂອງການສຶກສາພົນລະເມືອງໂລກ ........ 5

2.4 ຜົນໄດ້ຮັບຫຼັກຈາກການຮຽນຮູ້ ........ 5

**3. ນະໂຍບາຍແຫ່ງຊາດຕໍ່ການສຶກສາພົນລະເມືອງໂລກ ........ 6**

3.1 ວິເຄາະຄວາມຕ້ອງການ ........ 6

3.2 ການປະຕິບັດການສຶກສາພົນລະເມືອງໂລກໃນ ສປປ ລາວ ........ 7

3.3 ຂັ້ນຕອນການພັດທະນາ ແລະ ນະໂຍບາຍຂອງການສຶກສາພົນລະເມືອງໂລກ ........ 7

3.4 ຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍ ........ 19

3.4.1. ຄວາມແຕກຕ່າງ ........ 19

3.4.2. ການເຄົາລົບຄວາມຫຼາກຫຼາຍ ........ 20

**4. ຫຼັກສູດການຮຽນການສອນ ກ່ຽວກັບການສຶກສາພົນລະເມືອງໂລກ ........ 21**

4.1 ການກຳນົດຈຸດປະສົງ ແລະ ຫົວຂໍ້ຂອງການຮຽນຮູ້ ........ 21

4.2 ການສອດແຊກເຂົ້າໃນລາຍວິຊາໃນຫຼັກສູດແຫ່ງຊາດຂອງປະເທດຕ່າງໆ ........ 24

**5. ການຜັນຂະຫຍາຍຫຼັກສູດການຮຽນການສອນ ກ່ຽວກັບສຶກສາພົນລະເມືອງໂລກ .. 25**

5.1 ການຈັດຕັ້ງປະຕິບັດການຮຽນການສອນ ........ 25

5.1.1 ຄວາມຮັບຮູ້ຂອງຄູຕໍ່ການສຶກສາພົນລະເມືອງໂລກ ........ 25

5.1.2 ການຈັດການຮຽນການສອນການສຶກສາພົນລະເມືອງໂລກໃນລາຍວິຊາ ........ 27

5.1.3 ການສອດແຊກເຂົ້າໃນການຮຽນການສອນຕາມລາຍວິຊາໃນຫ້ອງຮຽນ ........ 28

5.1.4 ການດຳເນີນການຮຽນການສອນ ການສຶກສາພົນລະເມືອງໂລກ ........ 29

5.1.5 ການສອດແຊກການສຶກສາພົນລະເມືອງໂລກທີ່ຄຳນຶງເຖິງບົດບາດຍິງ-ຊາຍ ........ 30

5.2 ການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ..... 30
5.2.1 ການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ..... 30
5.2.2 ຂອບເຂດການຈັດຕັ້ງປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ..... 31
5.2.2.1 ການຄຸ້ມຄອງໂຮງຮຽນ ..... 31
5.2.2.2 ການຮຽນການສອນ ..... 32
5.2.2.3 ໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກ ..... 33
5.2.2.4 ການມີສ່ວນຮ່ວມຂອງຊຸມຊົນ ..... 34
5.2.3 ຂັ້ນຕອນການຈັດຕັ້ງປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ..... 35
5.2.4 ກຳນົດວິທີການ ແລະ ຈະເຊື່ອມໂຍງເຂົ້າກັບການສຶກສາພົນລະເມືອງໂລກແນວໃດ? ..... 37
5.3 ການພັດທະນາຂີດຄວາມສາມາດໃຫ້ຄູສອນ ກ່ຽວກັບການສຶກສາພົນລະເມືອງໂລກ ..... 38
5.3.1 ການຝຶກອົບຮົມ ..... 38
5.3.2 ການແລກປ່ຽນປະສົບການ ..... 38
5.3.3 ການກຽມຄວາມພ້ອມກ່ຽວກັບ ສພລ ກ່ອນຈະດຳເນີນການສອນ ..... 38
**6 ເຄື່ອງມືການປະເມີນຜົນຈາກການຮຽນຮູ້ ກ່ຽວກັບການສຶກສາພົນລະເມືອງໂລກ ..... 40**
**6.1** ເຄື່ອງມືທີ່ໃຊ້ໃນການປະເມີນ ..... 40
**6.2** ຣູບຣິກ (Rubrics) ..... 40
6.2.1 ຈຸດປະສົງຂອງການສ້າງ ຣູບຣິກ ..... 40
6.2.2 ຕົວຢ່າງ: ເກນການໃຫ້ຄະແນນຣູບຣິກ ..... 41
**7 ເອກະສານຊ້ອນທ້າຍ ..... 42**
**7.1** ໂຄງຮ່າງຫົວຂໍ້ການຮຽນການສອນ ສພລ ໃນໂຮງຮຽນ ..... 42

# 1. ການນຳສະເໜີພາບລວມຂອງການສຶກສາພົນລະເມືອງໂລກ

## 1.1 ປະຫວັດຄວາມເປັນມາຂອງ "ການສຶກສາພົນລະເມືອງໂລກ"

ພາຍຫຼັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງ, ອົງການສະຫະປະຊາຊາດໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1945, ສານໂລກໄດ້ສ້າງຕັ້ງຂຶ້ນໃນປີ 1946 ແລະ ໄດ້ອອກຖະແຫຼງການສາກົນດ້ານສິດທິມະນຸດໃນ ປີ 1948 ເພື່ອຫຼຸດຜ່ອນການລະເມີດດ້ານສິດທິມະນຸດ, ຄວາມບໍ່ສະເໝີພາບ, ໄພຂົ່ມຂູ່ຕໍ່ສັນຕິພາບ ແລະ ຄວາມໝັ້ນຄົງໃນໂລກ.

ອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ຫຼື The United Nations Educational, Scientific and Cultural Organization (UNESCO) ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 16 ພະຈິກ 1945 ແລະ ໄດ້ບັງຄັບໃຊ້ລັດຖະທຳມະນູນໃນວັນທີ 4 ພະຈິກ 1946 ໂດຍມີ 20 ປະເທດໃຫ້ສັດຕະຍາບັນ. ລັດຖະທຳມະນູນໄດ້ຮັບການປັບປຸງໃນແຕ່ລະໄລຍະ ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ 2 ຫາ ຄັ້ງທີ 40 ໂດຍມີຈຸດປະສົງລວມເພື່ອສົ່ງເສີມໃຫ້ທຸກຄົນໄດ້ຮັບການສຶກສາຢ່າງເຕັມຮູບແບບ ແລະ ເທົ່າທຽມກັນ, ແລກປ່ຽນແນວຄວາມຄິດເຫັນ ແລະ ຄວາມຮູ້ທີ່ເປັນອິດສະຫຼະ, ມີຄວາມມຸ່ງໝັ້ນ ແລະ ຕັ້ງໃຈທີ່ຈະພັດທະນາໂດຍຜ່ານການພົວພັນວຽກງານດ້ານການສຶກສາ, ວິທະຍາສາດ ແລະ ວັດທະນະທຳຂອງປະຊາກອນໂລກ ເພື່ອສ້າງສັນຕິພາບສາກົນ ແລະ ຄວາມຜາສຸກຂອງມວນມະນຸດ ດັ່ງຄຳຂວັນທີ່ວ່າ: "ສ້າງສັນຕິພາບຢູ່ໃນຈິດໃຈຂອງມະນຸດ".

ເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວ, UNESCO ຮ່ວມກັບ UNICEF, World Bank, UNFPA, UNDP, UN Women ແລະ ອົງການ UNCHR ໄດ້ຈັດກອງປະຊຸມການສຶກສາໂລກຂຶ້ນທີ່ເມືອງ ອິນຊອນ, ສ.ເກົາຫຼີ ໃນລະຫວ່າງວັນທີ 19 - 22 ພຶດສະພາ 2015 ໂດຍການເປັນເຈົ້າພາບຂອງ ສ.ເກົາຫຼີ, ຊຶ່ງມີຜູ້ເຂົ້າຮ່ວມຈຳນວນກວ່າ 1.600 ຄົນ ຈາກ 160 ປະເທດ, ລວມມີບັນດາລັດຖະມົນຕີ 120 ທ່ານ, ບັນດາຫົວໜ້າ ແລະ ສະມາຊິກຜູ້ແທນ, ຫົວໜ້າອົງການ ແລະ ພະນັກງານຂອງອົງການຈັດຕັ້ງສອງຝ່າຍ ແລະ ຫຼາຍຝ່າຍ, ແລະ ບັນດາຕົວແທນຂອງສັງຄົມພົນລະເຮືອນ, ໜ່ວຍງານຊ່ຽວຊານດ້ານການສິດສອນ, ພາກເອກະຊົນ ແລະ ໄວໜຸ່ມ ແລະ ໄດ້ຮັບຮອງເອົາຖະແຫຼງການສາກົນກ່ຽວກັບສິດທິມະນຸດ, ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ຫຼື Sustainable Development Goals (SDGs) ແລະ ວາລະການສຶກສາ 2030. ກອງປະຊຸມດັ່ງກ່າວຍັງໄດ້ຮັບການຮັບຮອງເອົາຄຳແນະນຳຂອງອົງການອຸຍແນສໂກ ປີ 1974 ກ່ຽວກັບຄວາມເຂົ້າໃຈສາກົນ, ການຮ່ວມມື, ສັນຕິພາບ ແລະ ການສຶກສາທີ່ກ່ຽວພັນກັບສິດທິມະນຸດ ແລະ ເສລີພາບຂັ້ນພື້ນຖານ (1974 UNESCO Recommendation on International Understanding, Cooperation & Peace, and education, relating to human rights & fundamental freedoms) ແລະ ໂຄງການການສຶກສາດ້ານສິດທິມະນຸດໂລກ.

ຄຳແນະນຳຂອງອຸຍແນສໂກໄດ້ກ່າວວ່າ "ວິທີການທີ່ດີທີ່ສຸດໃນການຕໍ່ສູ້ກັບລັດທິຄວາມຮຸນແຮງ ແລະ ຫົວຮຸນແຮງແມ່ນການສຶກສາຄົນຍຸກໃໝ່ໃຫ້ຮູ້ເຖິງ ການສຶກສາພົນລະເມືອງໂລກ (ສພລ)" ຊຶ່ງນອນຢູ່ໃນຄາດໝາຍທີ 7 ຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 4 (SDG 4.7). ສພລ ສາມາດຕອບສະໜອງຕໍ່ກັບສິ່ງທ້າທາຍເຫຼົ່ານີ້ໄດ້ໂດຍການສ້າງຄວາມເຂັ້ມແຂງໃຫ້ຜູ້ຮຽນທຸກເພດ-ໄວໃຫ້ຮູ້ຄຸນຄ່າ, ທັດສະນະຄະຕິ ແລະ ພຶດຕິກຳທີ່ສະໜັບສະໜູນການເປັນພົນລະເມືອງໂລກທີ່ມີຄວາມຮັບຜິດຊອບ ເປັນຕົ້ນແມ່ນ ມີຄວາມຄິດສ້າງສັນ, ມີນະວັດຕະກຳ, ຄວາມຕັ້ງໃຈຕໍ່ການສ້າງສັນຕິພາບ, ມີສິດທິມະນຸດ ແລະ ການພັດທະນາແບບຍືນຍົງໂດຍຫຼຸດຜ່ອນການໃຊ້ຄວາມຮຸນແຮງ, ການຂ້າລ້າງຜານ, ການຂ້າລ້າງເຜົ່າພັນ, ການບໍ່ເຄົາລົບຄວາມຫຼາກຫຼາຍ, ບັນຫາໄພຂົ່ມຂູ່ ແລະ ຄວາມບໍ່ໝັ້ນຄົງຕ່າງໆທີ່ເປັນໄພຄຸກຄາມ

ຂອງໂລກ, ທັງໝົດນີ້ເພື່ອສົ່ງເສີມການເຄື່ອນໄຫວຂອງສັງຄົມໃຫ້ມີຄວາມສະຫງົບສຸກ, ມີຄວາມອົດທົນ, ມີສ່ວນຮ່ວມ, ມີຄວາມປອດໄພ ແລະ ມີຄວາມຍືນຍົງ.

ເຄື່ອງມືທີ່ເປັນມາດຕະຖານສາກົນໃນການປົກປ້ອງສິດທິມະນຸດໂດຍພື້ນຖານທີ່ຜູກພັນທາງກົດໝາຍເຊັ່ນ: ສັນຍາ, ສົນທິສັນຍາ, ຂໍ້ຕົກລົງ ແລະ ອານຸສັນຍາ, ນອກນັ້ນຍັງມີຄຳແນະນຳ ແລະ ຖະແຫຼງການຕ່າງໆ, ຊຶ່ງມີກຳລັງອຳນາດທາງດ້ານສິນທຳ ແລະ ການເມືອງທີ່ໄດ້ສ້າງເປັນແຜນງານຕາມກົດເກນສາກົນທີ່ເຂັ້ມແຂງສຳລັບສິດທິໃນການໄດ້ຮັບການສຶກສາໂດຍປາດສະຈາກການຈຳແນກ ຫຼື ແບ່ງແຍກ.[1]

### 1.2 ວິໄສທັດການສຶກສາພົນລະເມືອງໂລກ

ການສຶກສານາໆຊາດ ແລະ ການສຶກສາໂລກໄດ້ໝູນໃຊ້ຫຼາກຫຼາຍວິທີ ເພື່ອສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງຂອງໂລກ ເປັນເວລາຫຼາຍທົດສະວັດ ເຊັ່ນ: ການສຶກສາດ້ານສິດທິມະນຸດ, ວັດທະນະທຳເພື່ອສັນຕິພາບ, ການພັດທະນາແບບຍືນຍົງ, ການສຶກສາເພື່ອຄວາມເຂົ້າໃຈລະຫວ່າງຊາດ ແລະ ອື່ນໆ.

ການສຶກສາພົນລະເມືອງໂລກ ແມ່ນເນັ້ນການສຶກສາພົນລະເມືອງ ບໍ່ພຽງແຕ່ການສຶກສາທີ່ກ່ຽວຂ້ອງກັບການມີສ່ວນຮ່ວມທາງດ້ານການເມືອງເທົ່ານັ້ນແຕ່ຍັງກ່ຽວຂ້ອງກັບການເຄົາລົບຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ສິດທິມະນຸດ, ຄວາມສະເໝີພາບ, ການສົນທະນາແລກປ່ຽນແນວຄວາມຄິດ ແລະ ການມີສ່ວນຮ່ວມເພື່ອສ້າງຄວາມຮູ້, ທັກສະ, ຄຸນຄ່າ ແລະ ທັດສະນະຄະຕິຂອງຜູ້ຮຽນ ເພື່ອໃຫ້ທຸກຄົນແຂ່ງຂັນໃນການປະກອບສ່ວນໃຫ້ໂລກມີຄວາມຍຸດຕິທຳ ແລະ ມີຄວາມສະຫງົບສຸກຫຼາຍຂື້ນ ຈາກການສ້າງຄຸນຄ່າດ້ານຄວາມຮັບຮູ້, ດ້ານສັງຄົມ-ອາລົມຈິດ ແລະ ພຶດຕິກຳ ໂດຍຜ່ານ 4 ເປົ້າໝາຍຂອງການຮຽນເຊັ່ນ: ຮຽນເພື່ອຮູ້, ຮຽນເພື່ອເຮັດ, ຮຽນເພື່ອເປັນ ແລະ ຮຽນເພື່ອຢູ່ຮ່ວມກັນໂດຍສັນຕິ ດັ່ງທີ່ທ່ານ ສານວາດຕໍ ນີໂກຣ (Salvatore Nigro) ໄດ້ກ່າວໄວ້ວ່າ “ການແຂ່ງຂັນທີ່ເປັນການກະຕຸ້ນ, ການຮ່ວມມືທີ່ເຂັ້ມແຂງ ແລະ ຄວາມສາມັກຄີທີ່ເປັນເອກະພາບ ໝາຍເຖິງລະດັບຂອງບຸກຄົນທີ່ມີການສຶກສາພົນລະເມືອງໂລກ”.

### 1.3 ທ່າອ່ຽງຂອງການສຶກສາພົນລະເມືອງໂລກ

ການສຶກສາພົນລະເມືອງໂລກ ໄດ້ຮັບການສືບຕໍ່ພັດທະນາດ້ານແນວຄວາມຄິດທີ່ສາມາດສອດແຊກເຂົ້າໄດ້ທຸກວິຊາ ແລະ ທຸກຂົງເຂດຂອງການສຶກສາໂດຍເປີດກວ້າງໃນຫຼາຍມິຕິ ແລະ ສາມາດນຳໃຊ້ໄດ້ທັງນັກຮຽນໃນໂຮງຮຽນ ແລະ ນອກໂຮງຮຽນຕະຫຼອດຮອດຄົນໃນຊຸມຊົນທ້ອງຖິ່ນ, ໃນພາກພື້ນ ແລະ ສາກົນ ເພື່ອສ້າງຄວາມເຂັ້ມແຂງໃຫ້ຜູ້ຮຽນໄດ້ຮຽນຮູ້ ແລະ ມີບົດບາດຢ່າງຕັ້ງໜ້າທັງຢູ່ໃນທ້ອງຖິ່ນ, ພາກພື້ນ ແລະ ທົ່ວໂລກ ໃນການແກ້ໄຂບັນດາສິ່ງທ້າທາຍທີ່ໂລກປະເຊີນຢູ່ໃນປັດຈຸບັນ ເພື່ອສົ່ງເສີມຄວາມຍຸດຕິທຳ, ຄວາມສະຫງົບສຸກ, ຄວາມໝັ້ນຄົງ, ການດຳລົງຊີວິດທີ່ປອດໄພ ແລະ ຄວາມຍືນຍົງຂອງໂລກ.

ໃນການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ບັນດາປະເທດຕ່າງໆໄດ້ສຸມໃສ່ປະສິດທິພາບ, ປະສິດທິຜົນ ແລະ ຄວາມເທົ່າທຽມກັນຂອງລະບົບການສຶກສາໄປຄຽງຄູ່ກັບການສົ່ງເສີມດ້ານສິດທິມະນຸດ, ຄວາມສະເໝີພາບຍິງ-ຊາຍ, ການສົ່ງເສີມວັດທະນະທຳແຫ່ງສັນຕິພາບ, ການບໍ່ນຳໃຊ້ຄວາມຮຸນແຮງ, ການເປັນພົນລະເມືອງໂລກ ແລະ ການຊື່ນຊົມຄວາມຫຼາກຫຼາຍທາງດ້ານວັດທະນະທຳ. ຍິ່ງໄປກວ່ານັ້ນ, ເພື່ອຮັບປະກັນການສຶກສາທີ່ເທົ່າທຽມກັນ ແລະ ເງື່ອນໄຂສຳລັບຜົນການສຶກສາທີ່ມີປະສິດທິພາບ, ບັນດາລັດຖະບານໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການສຶກສາ ໂດຍການສ້າງ, ປັບປຸງກົນໄກຄວາມຮັບຜິດຊອບ, ຄຸ້ມຄອງທົ່ວເຖິງ ແລະ ມີປະສິດທິພາບ; ຮັບຮອງຄຸນນະພາບ; ລະບົບຂໍ້ມູນຂ່າວສານການ

[1] Framework for Action Education 2030

ຄຸ້ມຄອງການສຶກສາ; ຄວາມໂປ່ງໃສ, ຂັ້ນຕອນ ແລະ ກົນໄກການໃຊ້ທຶນທີ່ມີປະສິດທິພາບ; ການຈັດສັນການຄຸ້ມຄອງສະຖາບັນ ກໍ່ຄືການຮັບປະກັນ ເຮັດໃຫ້ຂໍ້ມູນຂ່າວສານທີ່ສາມາດເຂົ້າເຖິງໄດ້ ແລະ ທັນກັບເວລາ.

ນະວັດຕະກຳ ແລະ ICT ຈະຕ້ອງຖືກນຳໃຊ້ ເພື່ອເສີມຂະຫຍາຍລະບົບການສຶກສາໃຫ້ເຂັ້ມແຂງ, ເຜີຍແຜ່ຄວາມຮູ້, ສະໜອງການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການຮຽນຮູ້ທີ່ມີປະສິດທິພາບ ແລະ ຄຸນນະພາບ. ການເສີມສ້າງລະບົບໃຫ້ເຂັ້ມແຂງຄວນສຸມໃສ່ເຂດທີ່ມີການສຶກສາທີ່ຂະຫຍາຍຕົວຊ້າ, ມີການຮ່ວມມືກັນລະຫວ່າງປະເທດ, ພາກພື້ນ ແລະ ສາກົນ.

ເພື່ອບັນລຸເປົ້າໝາຍຂອງການພັດທະນາແບບຍືນຍົງດ້ານການສຶກສາ ຈຳເປັນຕ້ອງໄດ້ປຸກລະດົມກຳລັງແຮງຂອງສາກົນ, ພາກພື້ນ ແລະ ປະເທດ:[2]

- ຮ່ວມມືຢ່າງທົ່ວເຖິງ ແລະ ມີປະສິດທິພາບ.
- ປັບປຸງນະໂຍບາຍການສຶກສາ ແລະ ວິທີການເຮັດວຽກຮ່ວມກັນ.
- ຮັບປະກັນລະບົບການສຶກສາທີ່ເທົ່າທຽມກັນ, ທົ່ວເຖິງ ແລະ ຍົກສູງຄວາມຍຸດຕິທຳສຳລັບໝົດທຸກຄົນ.
- ລະດົມຊອກແຫຼ່ງຊັບພະຍາກອນ ເພື່ອໃຫ້ມີທຶນສະໜັບສະໜູນທີ່ພຽງພໍສຳລັບການສຶກສາ.
- ຮັບປະກັນການຕິດຕາມກວດກາ, ກວດສອບ ແລະ ທົບທວນຄືນບັນດາເປົ້າໝາຍທັງໝົດ.

ການຈັດຕັ້ງປະຕິບັດ ແມ່ນອີງໃສ່ບົດຮຽນຂອງ EFA ແລະ MDGs, ບັນດາປະເທດຕ່າງໆຄວນລົງທຶນໃສ່ ແລະ ຂະຫຍາຍຢ່າງມີນະວັດຕະກຳ, ວິທີການລົງທຶນທີ່ມີປະສິດທິພາບ ແລະ ມີໝາກຜົນ ເພື່ອເຮັດໃຫ້ທຸກຄົນສາມາດເຂົ້າເຖິງ ແລະ ສຳເລັດການສຶກສາທີ່ມີຄຸນນະພາບ ໂດຍສຸມໃສ່ກຸ່ມເປົ້າໝາຍທີ່ດ້ອຍໂອກາດໃຫ້ເຂົ້າເຖິງໄດ້ຫຼາຍທີ່ສຸດ. ອີກອັນໜຶ່ງ, ຍຸດທະສາດທີ່ສຸມໃສ່ແຕ່ລະເປົ້າໝາຍຂ້ອນຂ້າງກວ້າງ ແລະ ຄວນມີການດັດປັບໃຫ້ເໝາະສົມໂດຍອີງຕາມບູລິມະສິດ ແລະ ຄວາມແຕກຕ່າງຂອງແຕ່ລະປະເທດ.

## 2. ແນວຄວາມຄິດຂອງການສຶກສາພົນລະເມືອງໂລກ

### 2.1 ການສຶກສາພົນລະເມືອງໂລກແມ່ນຫຍັງ?

ການສຶກສາພົນລະເມືອງໂລກ ແມ່ນເຮັດໃຫ້ພວກເຮົາເຂົ້າໃຈຢ່າງເລິກເຊິ່ງວ່າ ພວກເຮົາເຊື່ອມຕໍ່ກັນໃນຖານະເປັນພົນລະເມືອງຂອງປະຊາກອນໂລກ ແລະ ສິ່ງທ້າທາຍຂອງພວກເຮົາກໍ່ຄືການເຊື່ອມຕໍ່ກັນ. ແນວຄິດຂອງການເປັນພົນລະເມືອງໄດ້ມີການວິວັດທະນາໄປຕາມການເວລາ. ອີງຕາມປະຫວັດສາດ, ການເປັນພົນລະເມືອງບໍ່ໄດ້ແຜ່ກະຈາຍໄປເຖິງທຸກຄົນ. ຕົວຢ່າງ: ຄົນ ຫຼື ເຈົ້າຂອງກຳມະສິດເທົ່ານັ້ນທີ່ຈະເປັນພົນລະເມືອງໄດ້. ສະຕະວັດທີ່ຜ່ານມາ ໄດ້ມີການເຄື່ອນໄຫວທີ່ກ້າວໄປສູ່ຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຄວາມເປັນພົນລະເມືອງ ຊຶ່ງໄດ້ຮັບອິດທິພົນຈາກການພັດທະນາທາງດ້ານສິດທິພົນລະເມືອງ, ການເມືອງ ແລະ ສັງຄົມ. ຄວາມເຂົ້າໃຈໃນປັດຈຸບັນ ກ່ຽວກັບການເປັນພົນລະເມືອງຂອງຊາດ ມີຄວາມແຕກຕ່າງກັນໃນແຕ່ລະປະເທດ ຊຶ່ງສະທ້ອນໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງສະພາບເງື່ອນໄຂທາງດ້ານການເມືອງ ແລະ ປະຫວັດສາດຢູ່ໃນບັນດາປັດໄຈອື່ນໆ.

ໂລກເຮົາມີການເພິ່ງພາອາໄສເຊິ່ງກັນ ແລະ ກັນຢ່າງຕໍ່ເນື່ອງ ໄດ້ມີຄຳຖາມເກີດຂຶ້ນ ກ່ຽວກັບການເປັນພົນລະເມືອງໂລກ ແລະ ຂອບເຂດໃນລະດັບສາກົນ. ເຖິງແມ່ນວ່າ ແນວຄິດຂອງການເປັນພົນລະເມືອງກ້າວໄປເໜືອກວ່າລະດັບປະເທດ

[2] Global Citizenship Education: Preparing learner for the challenges of the 21st century

ແຕ່ກໍບໍ່ແມ່ນເລື່ອງໃໝ່, ການປ່ຽນແປງຕ່າງໆຕາມສະພາບການຂອງໂລກ ເຊັ່ນ: ການສ້າງສົນທິສັນຍາ ແລະ ຂໍ້ຕົກລົງສາກົນ ການເຕີບໂຕຂອງອົງການຈັດຕັ້ງຕ່າງໆ, ການເຄື່ອນຍ້າຍຂ້າມຊາດຂອງພົນລະເມືອງ ພ້ອມທັງການສ້າງຂອບສາກົນກ່ຽວກັບສິດທິມະນຸດໄດ້ສົ່ງຜົນທີ່ສຳຄັນຕໍ່ການເປັນພົນລະເມືອງໂລກ. ພວກເຮົາຕ້ອງຍອມຮັບວ່າ ມີທັດສະນະຕ່າງໆທີ່ແຕກຕ່າງກັນ ກ່ຽວກັບແນວຄວາມຄິດຂອງການເປັນພົນລະເມືອງໂລກຢູ່. ຕົວຢ່າງ: ຄວາມຄິດຂອງການເປັນພົນລະເມືອງໂລກຂະຫຍາຍອອກ ແລະ ຄວາມສົມບູນແບບຂອງພົນລະເມືອງແບບດັ້ງເດີມຊຶ່ງກຳນົດໂດຍປະເທດ ຫຼື ມີການແຂ່ງຂັນໃນລະດັບໃດ.

ການເປັນພົນລະເມືອງໂລກ ໝາຍເຖິງ**ຄວາມຮູ້ສຶກຂອງການເປັນສ່ວນໜຶ່ງຂອງຊຸມຊົນໂລກ ແລະ ເປັນສ່ວນໜຶ່ງຂອງມະນຸດທີ່ຢູ່ຮ່ວມກັນ ໂດຍເນັ້ນການເພິ່ງພາອາໄສເຊິ່ງກັນ ແລະ ກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ -ສັງຄົມໃນລະດັບທ້ອງຖິ່ນ, ຊາດ ແລະ ສາກົນ**.

ຄວາມສົນໃຈທີ່ເພີ່ມຂຶ້ນຂອງການເປັນພົນລະເມືອງໂລກໄດ້ດຶງດູດຄວາມສົນໃຈຕໍ່ກັບການສຶກສາພົນລະເມືອງໃນທົ່ວໂລກ ແລະ ການມີສ່ວນຮ່ວມຕໍ່ນະໂຍບາຍ, ຫຼັກສູດ ແລະ ການຮຽນການສອນ. ການສຶກສາພົນລະເມືອງໂລກປະກອບດ້ວຍ 3 ລະດັບຂອງແນວຄິດພື້ນຖານເຊັ່ນ: ດ້ານຄວາມຮູ້, ດ້ານສັງຄົມ-ອາລົມ ແລະ ດ້ານພຶດຕິກຳ. ສິ່ງເຫຼົ່ານັ້ນ ສາມາດເປັນພື້ນຖານເພື່ອກຳນົດເປົ້າໝາຍການສຶກສາພົນລະເມືອງໂລກ, ຈຸດປະສົງຂອງການຮຽນຮູ້ ແລະ ທັກສະຕ່າງໆຂອງການຮຽນການສອນ, ລວມທັງບູລິມະສິດໃນການຕິດຕາມ ແລະ ການປະເມີນຜົນການຮຽນ.

## 2.2 ຂອບເຂດແນວຄວາມຄິດພື້ນຖານຂອງການສຶກສາພົນລະເມືອງໂລກ

ຂອບເຂດແນວຄວາມຄິດທີ່ເປັນພື້ນຖານເຫຼົ່ານີ້ປະກອບດ້ວຍ 3 ດ້ານຄື: ດ້ານຄວາມຮູ້, ດ້ານສັງຄົມ-ອາລົມ ແລະ ດ້ານພຶດຕິກຳ.

- **ດ້ານຄວາມຮູ້:**
  ຮຽນເພື່ອຮູ້, ເພື່ອເຂົ້າໃຈ, ເພື່ອຄົ້ນຄິດແບບວິເຄາະຕໍ່ບັນຫາລະດັບໂລກ, ລະດັບພາກພື້ນ, ລະດັບຊາດ, ລະດັບທ້ອງຖິ່ນ, ຄວາມເຊື່ອມຕໍ່ກັນ ແລະ ຄວາມເປັນເອກະລາດໃນລະດັບສາກົນຂອງບັນດາປະເທດ ແລະ ປະຊາກອນຕ່າງໆ.
- **ດ້ານສັງຄົມ-ອາລົມ:**
  ເພື່ອໃຫ້ມີຄວາມຮູ້ສຶກຂອງຄວາມເປັນມະນຸດ, ແບ່ງປັນຄຸນຄ່າ, ຄວາມຮັບຜິດຊອບ, ຄວາມເຫັນໃຈຄົນອື່ນ, ຄວາມສາມັກຄີ ແລະ ຄວາມເຄົາລົບຕໍ່ຄວາມແຕກຕ່າງອື່ນໆ.
- **ດ້ານພຶດຕິກຳ:**
  ເພື່ອປະຕິບັດໜ້າທີ່ການເປັນພົນລະເມືອງໂລກຢ່າງມີປະສິດທິພາບ ແລະ ມີຄວາມຮັບຜິດຊອບໃນລະດັບທ້ອງຖິ່ນ ລະດັບຊາດ ແລະ ລະດັບສາກົນ, ເພື່ອຍົກສູງສັນຕິພາບ ແລະ ຄວາມຍືນຍົງໃນໂລກ.

ການສຶກສາພົນລະເມືອງໂລກ ມີເປົ້າໝາຍສະໜອງຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ຄຸນຄ່າທີ່ຈຳເປັນໃຫ້ຜູ້ຮຽນສາມາດປະກອບສ່ວນເຂົ້າໃນການສົ່ງເສີມການຫຼຸດຜ່ອນຄວາມຮຸນແຮງ, ຄວາມບໍ່ຍຸດຕິທຳ ແລະ ສັນຕິພາບ. ການສຶກສາພົນລະເມືອງໂລກນຳໃຊ້ "**ວິທີການຫຼາຍຮູບແບບຊຶ່ງຂຶ້ນກັບແນວຄວາມຄິດ ແລະ ວິທີການທີ່ໄດ້ນຳໃຊ້ໃນຂົງເຂດວຽກງານອື່ນໆ, ໂດຍສະເພາະການສຶກສາສິດທິມະນຸດ, ການສຶກສາສັນຕິພາບ, ການສຶກສາເພື່ອການພັດທະນາແບບຍືນຍົງ ແລະ ການສຶກສາເພື່ອຄວາມເຂົ້າໃຈລະຫວ່າງຊາດ**" ແລະ ມີເປົ້າໝາຍເພື່ອສົ່ງເສີມຈຸດປະສົງອັນດຽວກັນ. ສພລ ນຳໃຊ້ທັດສະນະຂອງການຮຽນຮູ້ຕະຫຼອດຊີວິດ, ເລີ່ມຕົ້ນຈາກການສຶກສາຂອງໄວເດັກຈົນເຖິງ

ລະດັບການສຶກສາຜູ້ໃຫຍ່ ຊຶ່ງຮຽກຮ້ອງ "ວິທີການສຶກສາໃນລະບົບ ແລະ ນອກລະບົບ, ການສອດແຊກໃນຫຼັກສູດ ແລະ ນອກຫຼັກສູດ ແລະ ວິທີການແບບປະສົມປະສານກັບການມີສ່ວນຮ່ວມໃຫ້ຫຼາຍທີ່ສຸດ".

## 2.3 ເປົ້າໝາຍຂອງການສຶກສາພົນລະເມືອງໂລກ

ການສຶກສາພົນລະເມືອງໂລກມີເປົ້າໝາຍເພື່ອ:

- ພັດທະນາຄວາມເຂົ້າໃຈກ່ຽວກັບໂຄງສ້າງຂອງການບໍລິຫານລະດັບໂລກ, ສິດທິ, ຄວາມຮັບຜິດຊອບ, ສິ່ງທ້າທາຍ, ການພົວພັນລະຫວ່າງລະບົບ ແລະ ຂະບວນການບໍລິຫານໃນລະດັບໂລກ, ລະດັບຊາດ ແລະ ລະດັບທ້ອງຖິ່ນ.
- ຮັບຮູ້ຄຸນຄ່າຄວາມແຕກຕ່າງທີ່ຫຼາກຫຼາຍ ເຊັ່ນ: ວັດທະນະທຳ, ພາສາ, ສາສະໜາ, ເພດ, ຄວາມເປັນມະນຸດດ້ວຍກັນ ແລະ ພັດທະນາທັກສະໃນການດຳລົງຊີວິດຢູ່ໃນໂລກທີ່ມີຄວາມຫຼາກຫຼາຍນັບມື້ນັບເພີ່ມຂຶ້ນ.
- ພັດທະນາ ແລະ ນຳໃຊ້ທັກສະການວິເຄາະສຳລັບຄວາມຮູ້ກ່ຽວກັບໜ້າທີ່ພົນລະເມືອງ ເຊັ່ນ: ການກວດກາແບບຮອບຄອບ, ຄວາມສາມາດໃນການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ, ຄວາມຮູ້ດ້ານສື່ຕ່າງໆ, ການຄິດວິເຄາະ, ການຕັດສິນໃຈ, ການແກ້ໄຂບັນຫາ, ການເຈລະຈາ, ການສ້າງສັນຕິພາບ ແລະ ຄວາມຮັບຜິດຊອບສ່ວນບຸກຄົນ ແລະ ສັງຄົມ.
- ຮູ້ຈຳແນກຄວາມເຊື່ອ, ຄຸນຄ່າ ແລະ ອິດທິພົນຂອງສິ່ງເຫຼົ່ານັ້ນຕໍ່ການຕັດສິນໃຈທາງດ້ານການເມືອງ ແລະ ສັງຄົມ, ຮັບຮູ້ກ່ຽວກັບຄວາມຍຸດຕິທຳທາງສັງຄົມ ແລະ ພັນທະໜ້າທີ່ຂອງພົນລະເມືອງ.
- ພັດທະນາທັດສະນະຄະຕິ, ຄວາມເອົາໃຈໃສ່ ແລະ ສະແດງໃຫ້ເຫັນຄວາມເຫັນອົກເຫັນໃຈຕໍ່ຄົນອື່ນ, ຕໍ່ສິ່ງແວດລ້ອມ ແລະ ການນັບຖືຄວາມຫຼາກຫຼາຍ.
- ຮັບຮູ້ຄຸນຄ່າຂອງຄວາມເປັນທຳ, ຄວາມຍຸດຕິທຳໃນສັງຄົມ ແລະ ທັກສະໃນການວິເຄາະແບບຮອບຄອບ, ຄວາມບໍ່ສະເໝີພາບທາງເພດ, ສະຖານະພາບເສດຖະກິດ, ວັດທະນະທຳ, ສາສະໜາ, ອາຍຸ ແລະ ບັນຫາອື່ນໆ.
- ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການແກ້ໄຂບັນຫາໂລກປັດຈຸບັນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກໃນຖານະທີ່ເປັນພົນລະເມືອງຂອງໂລກ, ມີສ່ວນຮ່ວມ, ມີຄວາມຮັບຜິດຊອບ ແລະ ມີການຕອບສະໜອງ.

**ບູລິມະສິດຄວາມສະເໝີພາບລະຫວ່າງຍິງ-ຊາຍ:** ການສຶກສາພົນລະເມືອງໂລກ ມີບົດບາດສຳຄັນໃນການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ຊຶ່ງເປັນບູລິມະສິດທີ່ສຳຄັນຂອງອົງການອຸຍແນສໂກ. ການສຶກສາພົນລະເມືອງໂລກນອນຢູ່ໃນສິດທິມະນຸດ ຊຶ່ງຄວາມສະເໝີພາບລະຫວ່າງຍິງ-ຊາຍແມ່ນສ່ວນໜຶ່ງທີ່ເປັນພື້ນຖານ. ເດັກຍິງ ແລະ ເດັກຊາຍຮຽນຮູ້ກ່ຽວກັບທັດສະນະຄະຕິ, ພາລະບົດບາດ, ຄວາມຄາດຫວັງ ແລະ ພຶດຕິກຳໄປຕາມເພດ, ຢູ່ໂຮງຮຽນກໍເຊັ່ນດຽວກັນກັບຢູ່ເຮືອນ. ການສຶກສາພົນລະເມືອງໂລກ ສາມາດປົກປ້ອງຄວາມສະເໝີພາບລະຫວ່າງຍິງ-ຊາຍໂດຍຜ່ານການພັດທະນາຄວາມຮູ້, ທັກສະ, ຄຸນຄ່າ ແລະ ທັດສະນະຕ່າງໆທີ່ຍົກສູງຄຸນຄ່າຂອງແມ່ຍິງ ແລະ ຜູ້ຊາຍໃຫ້ເທົ່າທຽມກັນ ໂດຍສ້າງຄວາມນັບຖື ແລະ ເຮັດໃຫ້ໄວໜຸ່ມຕັ້ງບັນຫາຢ່າງຈະແຈ້ງກ່ຽວກັບພາລະບົດບາດ ແລະ ຄວາມຄາດຫວັງດ້ານເພດທີ່ມີຄວາມຮຸນແຮງ ຊຶ່ງເປັນໄພອັນຕະລາຍ. ສາມາດສົ່ງເສີມການບໍ່ຈຳແນກ ແລະ ການເລືອກປະຕິບັດທາງດ້ານຍິງ-ຊາຍ.

## 2.4 ຜົນໄດ້ຮັບຫຼັກຈາກການຮຽນຮູ້

ຜົນໄດ້ຮັບຂອງການຮຽນຮູ້ ອະທິບາຍເຖິງຄວາມຮູ້, ທັກສະ, ຄຸນຄ່າ, ທັດສະນະຕ່າງໆທີ່ນັກຮຽນສາມາດໄດ້ຮັບ ແລະ ສະແດງອອກຈາກຜົນຂອງການສຶກສາພົນລະເມືອງໂລກ. ສອດຄ່ອງກັບ 3 ດ້ານ (ດ້ານຄວາມຮູ້, ດ້ານສັງຄົມ-ອາລົມ, ແລະ ດ້ານພຶດຕິກຳ) ເຊິ່ງແບ່ງອອກເປັນ 3 ດ້ານຄື:

**1. ຄວາມຮູ້**

- ນັກຮຽນໄດ້ຮັບຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບັນຫາໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບໂລກ, ການເຊື່ອມໂຍງກັນ, ການພົວພັນກັນຂອງບັນດາປະເທດ, ແລະ ປະຊາກອນຕ່າງໆ.
- ນັກຮຽນໄດ້ພັດທະນາທັກສະການຄິດແບບວິເຄາະ.

**2. ດ້ານສັງຄົມ-ອາລົມ**

- ນັກຮຽນມີຄວາມຮູ້ສຶກຂອງຄວາມເປັນມະນຸດດ້ວຍກັນ, ການແບ່ງປັນຄຸນຄ່າ ແລະ ຄວາມຮັບຜິດຊອບບົນພື້ນຖານຂອງສິດທິມະນຸດ.
- ນັກຮຽນພັດທະນາທັດສະນະຂອງຄວາມເອົາໃຈໃສ່, ຄວາມສາມັກຄີ ແລະ ຄວາມເຄົາລົບຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍ.

**3. ດ້ານພຶດຕິກຳ**

- ນັກຮຽນປະພຶດຕົວຢ່າງມີປະສິດທິພາບ ແລະ ມີຄວາມຮັບຜິດຊອບໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ ເພື່ອໃຫ້ໂລກມີຄວາມສະຫງົບ ແລະ ມີຄວາມຍືນຍົງຫຼາຍຂຶ້ນ.
- ນັກຮຽນພັດທະນາກ່ຽວກັບແຮງຈູງໃຈ ແລະ ເຕັມໃຈໃນການລົງມືປະຕິບັດເມື່ອຈຳເປັນ.

## 3. ນະໂຍບາຍແຫ່ງຊາດຕໍ່ການສຶກສາພົນລະເມືອງໂລກ

### 3.1 ວິເຄາະຄວາມຕ້ອງການ

ການສຶກສາພົນລະເມືອງໂລກ ແມ່ນການສ້າງຄວາມຮູ້ສຶກຂອງການເປັນຊຸມຊົນທີ່ກວ້າງຂວາງ ແລະ ຄວາມຮູ້ສຶກຂອງການເປັນມະນຸດທົ່ວໄປ ໂດຍເນັ້ນທາງດ້ານການເມືອງ, ເສດຖະກິດ, ການເພິ່ງພາອາໄສກັນທາງດ້ານວັດທະນະທຳ - ສັງຄົມ ແລະ ການເຊື່ອມໂຍງກັນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ.

1) ການສຶກສາພົນລະເມືອງໂລກ ເນັ້ນການເຮັດໜ້າທີ່ສຳຄັນຂອງການສຶກສາທີ່ກ່ຽວຂ້ອງກັບການສ້າງພົນລະເມືອງໃນຍຸກໂລກາພິວັດ.
2) ມີຄວາມຕິດພັນກັບຄວາມຮູ້, ທັກສະ ແລະ ຄ່ານິຍົມ ຂອງການມີສ່ວນຮ່ວມຂອງພົນລະເມືອງ ແລະ ການປະກອບສ່ວນໃນການພັດທະນາສັງຄົມໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ລະດັບໂລກ.
3) ມີຄວາມກ່ຽວຂ້ອງໂດຍກົງກັບພົນລະເມືອງ, ສັງຄົມ ແລະ ໜ້າທີ່ການເມືອງ, ສຶກສາເດັກນ້ອຍ ແລະ ຊາວໜຸ່ມໃຫ້ມີຄວາມພ້ອມໃນການແກ້ໄຂບັນຫາ ແລະ ສິ່ງທ້າທາຍໃນໂລກປັດຈຸບັນ ເຊັ່ນ: ການມີວຽກເຮັດງານທຳ, ການອົບພະຍົບເຂົ້າປະເທດ, ການຍົກຍ້າຍຖິ່ນຖານ, ການເຊື່ອມໂຍງ, ການເພິ່ງພາອາໄສເຊິ່ງກັນ ແລະ ກັນ, ສາຍພົວພັນລະຫວ່າງປະເທດຮັ່ງມີ-ປະເທດທຸກຍາກ, ການພົວພັນດ້ານອຳນາດ ແລະ ອື່ນໆ.
4) ການເຂົ້າເຖິງຄວາມຍຸຕິທຳ, ອາຍຸທີ່ບັນລຸນິຕິພາວະ, ການຕັດສິນບັນຫາ, ຄວາມເປັນປະຊາທິປະໄຕ, ຂະບວນການປະຊາທິປະໄຕ, ຄວາມປອດໄພດ້ານສະບຽງອາຫານ, ການຄຸ້ມຄອງທີ່ດີ, ເສລີພາບໃນການສະແດງອອກ, ຄວາມເທົ່າທຽມດ້ານເພດ, ສິດທິມະນຸດ, ສັນຕິພາບ, ການສ້າງສັນຕິພາບ, ຄວາມຮັບຜິດຊອບໃນການຊົມໃຊ້ການບໍລິການດ້ານສາທາລະນະ, ສິດທິ (ສິດທິເດັກນ້ອຍ, ສິດທິທາງດ້ານວັດທະນາທຳ, ສິດທິມະນຸດ, ສິດທິຊົນເຜົ່າ

ດັ້ງເດີມ, ສິດທິການສຶກສາ, ສິດທິແມ່ຍິງ), ຫຼັກກົດໝາຍ, ລະບຽບການ, ຄວາມໂປ່ງໃສ, ແລະ ການເປັນຢູ່ທີ່ດີຂອງພົນລະເມືອງ.

5) ທັດສະນະ, ການປະພຶດ, ຄວາມເຊື່ອໝັ້ນ, ວັດທະນະທຳ, ຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ ເພດ, ລັກສະນະສະເພາະ (ລັກສະນະສະເພາະລວມ, ລັກສະນະສະເພາະດ້ານວັດທະນະທຳ, ເພດ, ລັກສະນະສະເພາະຂອງຊາດ, ລັກສະນະສະເພາະສ່ວນບຸກຄົນ), ການແລກປ່ຽນລະຫວ່າງວັດທະນະທຳ, ພາສາ ແລະ ສາສະໜາ.

6) ການເບິ່ງແຍງ ແລະ ເອົາໃຈໃສ່ຄົນອື່ນ, ຄວາມເຫັນອົກເຫັນໃຈ, ຄວາມເປັນທຳ, ຄວາມຊື່ສັດສຸດຈະລິດ, ຄວາມຮັກ, ຄວາມສາມັກຄີ, ຄວາມເອື້ອເຟື້ອເພື່ອແຜ່, ຄວາມເຂົ້າໃຈ, ຄວາມນັບຖື, ຄວາມສາມັກຄີ, ການຜ່ອນສັ້ນຜ່ອນຍາວ ແລະ ການເປີດປະຕູສູ່ໂລກພາຍນອກ.

### 3.2 ການປະຕິບັດການສຶກສາພົນລະເມືອງໂລກໃນ ສປປ ລາວ

ໃນປັດຈຸບັນ, ການສຶກສາພົນລະເມືອງໂລກ ສາມາດສອບສອດແຊກເຂົ້າໃນລະບົບການສຶກສາ ທຸກຊັ້ນ-ທຸກສາຍ ແລະ ທຸກວິຊາພາຍໃນໂຮງຮຽນ ແລະ ນອກໂຮງຮຽນ.

ຜູ້ວາງນະໂຍບາຍ ແລະ ນັກວາງແຜນຕ້ອງຕັດສິນໃຈວ່າ ຈະເຮັດຫຍັງ, ມີວິທີການໃດທີ່ເໝາະສົມຕາມສະພາບເງື່ອນໄຂຂອງຕົນ ເຊັ່ນ: ນະໂຍບາຍ ແລະ ລະບົບການສຶກສາ, ບູລິມະສິດໃນຫຼັກສູດ, ຊັບພະຍາກອນທີ່ມີ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງ.

ການຈັດຕັ້ງປະຕິບັດການສຶກສາພົນລະເມືອງໂລກໃນສະຖານການສຶກສາ ເປັນບູລິມະສິດໜຶ່ງທີ່ ສ້າງໂອກາດໃຫ້ຜູ້ຮຽນເຂົ້າເຖິງເນື້ອໃນຂອງຫຼັກສູດ, ສະພາບແວດລ້ອມການຮຽນ, ການປະຕິບັດການສອນ ແລະ ການປະເມີນຜົນ. ການຈັດກິດຈະກຳການຮຽນການສອນການສຶກສາພົນລະເມືອງໂລກ ມີຫຼາຍຮູບແບບເຊັ່ນ: ສອດແຊກເຂົ້າໃນວິຊາຕ່າງໆໃນທຸກຊັ້ນຮຽນ, ນຳໃຊ້ວິທີການຮຽນແບບມີສ່ວນຮ່ວມໃນວິຊາຕ່າງໆ, ກິດຈະກຳສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງໂລກ, ການປູກຈິດສຳນຶກ, ການສ້າງກຸ່ມທີ່ແນໃສ່ກິດຈະກຳ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ການສ້າງສາຍພົວພັນກັບໂຮງຮຽນແຫ່ງຕ່າງໆ.

### 3.3 ຂັ້ນຕອນການພັດທະນາ ແລະ ນະໂຍບາຍຂອງການສຶກສາພົນລະເມືອງໂລກ

ການສຶກສາພົນລະເມືອງໂລກ ມີຂັ້ນຕອນການພັດທະນາ ແລະ ຈັດຕັ້ງປະຕິບັດດັ່ງລຸ່ມນີ້:

**ຂັ້ນຕອນທີ** 1: **ການທົບທວນ ແລະ ການພັດທະນານະໂຍບາຍ**

ຫົວໃຈສຳຄັນຂອງນະໂຍບາຍ ສພລ ຄື ຄວາມສາມາດໃນການປ່ຽນແປງແນວຄວາມຄິດ ຫຼື ວິທີການສົ່ງເສີມ ແລະ ເພີ່ມພູນປະສົບການດ້ານການສຶກສາສຳລັບຜູ້ຮຽນ ແລະ ນັກການສຶກສາ. ດັ່ງນັ້ນ ຄຸນຄ່າທີ່ບົ່ງບອກເຖິງ ສພລ ເຊັ່ນ ຄວາມຍຸຕິທຳ, ຄວາມສະເໝີພາບການຢູ່ຮ່ວມກັນ ແລະ ການເຄົາລົບກັນ, ມັນໄດ້ສະທ້ອນໃຫ້ເຫັນໃນຂະບວນການພັດທະນານະໂຍບາຍ ຊຶ່ງຄວນມີການເຮັດວຽກຮ່ວມກັນຢ່າງເປີດກວ້າງ ແລະ ຄຳນຶງເຖິງຄວາມເປັນມາ ແລະ ທັດສະນະທີ່ຫຼາກຫຼາຍ. ມັນຈຶ່ງເປັນສິ່ງສຳຄັນຢ່າງຍິ່ງ ທີ່ຈະຕ້ອງມີສ່ວນຮ່ວມກັບຜູ້ທີ່ມັກຖືກກີດກັນຈາກຂະບວນການນະໂຍບາຍ ເຊັ່ນ: ຊາວໜຸ່ມ, ແມ່ຍິງຊົນເຜົ່າ, ຄົນທຸກຍາກ ແລະ ຄົນພິການ ໂດຍສະເພາະ ຊາວໜຸ່ມທີ່ຈະເປັນກຳລັງແຮງໃນການສົ່ງເສີມຄວາມຮູ້ ແລະ ໃຫ້ຄຸນຄ່າການສຶກສາພົນລະເມືອງໂລກ.

ຂັ້ນຕອນສຳຄັນຂອງການພັດທະນານະໂຍບາຍຂອງ ສພລ ຄືການທົບທວນເປົ້າໝາຍຂອງຂົງເຂດການສຶກສາແຫ່ງຊາດທີ່ມີຢູ່, ນະໂຍບາຍ ແລະ ຫຼັກສູດເພື່ອກຳນົດການເຮັດວຽກຮ່ວມກັນກັບ ສພລ, ຂະບວນການລະດັບຊາດ ແລະ ທ້ອງຖິ່ນ, ແຫຼ່ງຊັບພະຍາກອນ ແລະ ໂຄງສ້າງທີ່ມີຢູ່ ເພື່ອກຳນົດໂອກາດ ແລະ ກົນໄກໃນການສົ່ງເສີມ ສພລ. ສິ່ງສຳຄັນທີ່ຕ້ອງພິຈາລະນາໄດ້ແກ່ ຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍຂອງສະພາບແວດລ້ອມທາງດ້ານນະໂຍບາຍລະດັບຊາດທີ່ມີໃນປັດຈຸບັນ. ສະນັ້ນ, ມັນຈຶ່ງເປັນປະໂຫຍດໃນການທົບທວນນະໂຍບາຍ, ແຜນ ແລະ ຫຼັກສູດ ທີ່ພັດທະນາຂຶ້ນ ທີ່ກ່າວເຖິງ ສພລ.

ຄຳແນະນຳດ້ານນະໂຍບາຍຂອງ UNESCO ວ່າດ້ວຍການສຶກສາຮຽນຮ່ວມ ເປັນຕົວແບບທີ່ເປັນປະໂຫຍດສຳລັບການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບນະໂຍບາຍລະດັບຊາດ ເຖິງແມ່ນວ່າ ຄຳແນະນຳເຫຼົ່ານັ້ນ ຈະເນັ້ນໃສ່ແຕ່ເລື່ອງການສຶກສາຮຽນຮ່ວມ ແຕ່ຂະບວນການທົບທວນ ແລະ ພັດທະນານະໂຍບາຍກໍສາມາດປັບໃຊ້ກັບການພັດທະນານະໂຍບາຍ ສພລ ໄດ້.

**ຕາຕະລາງທີ 1 ການທົບທວນ ແລະ ພັດທະນານະໂຍບາຍ**

| ລາຍການ | ຍຸດທະສາດທີ່ແນະນຳ | ຄາດຫວັງຜົນໄດ້ຮັບ |
|---|---|---|
| ສ້າງແຜນຕາມບໍລິບົດຂອງຊາດ, ສະໜັບສະໜູນ ແລະ ສົ່ງເສີມ ສພລ | • ສ້າງຂໍ້ກຳນົດ, ສະໜັບສະໜູນຜູ້ຈັດຕັ້ງປະຕິບັດ ແລະ ຜູ້ສະໜັບສະໜູນ ສພລ.<br>• ສົ່ງເສີມຄວາມເຂົ້າໃຈກ່ຽວກັບ ສພລ ແລະ ສື່ສານເຖິງບົດບາດໃນທາງບວກທີ່ມີຕໍ່ການພັດທະນາພົນລະເມືອງຢ່າງມີຂໍ້ມູນ ແລະ ຄວາມຮັບຜິດຊອບ.<br>• ສະໜັບສະໜູນທີມງານເພື່ອສົ່ງເສີມການປ່ຽນແປງ.<br>• ວາງແຜນນະໂຍບາຍ, ແຜນການ, ແຜນງານ ແລະ ການຝຶກອົບຮົມທີ່ມີຢູ່ແລ້ວ ແລະ ກຳນົດອົງປະກອບຂອງສພລ.<br>• ກຳນົດເນື້ອໃນ ສພລ ເຂົ້າໃນຫຼັກສູດທັງໃນລະບົບ ແລະ ນອກລະບົບໂຮງຮຽນຕາມຄວາມເໝາະສົມ. | • ທີມສະໜັບສະໜູນ ແລະ ຕົວແທນທີ່ສາມາດເປັນຜູ້ນຳ ແລະ ສະໜັບສະໜູນການພັດທະນານະໂຍບາຍ ສພລ<br>• ສພລ ຖືວ່າເປັນການລົງທຶນໃນທາງບວກໃນການເປັນພົນລະເມືອງ.<br>• ມີເຫດຜົນທີ່ຈະແຈ້ງ ແລະ ໜ້າສົນໃຈສຳລັບການລວມເອົາ ສພລ ໃນນະໂຍບາຍທີ່ມີຢູ່ແລ້ວ.<br>• ວາລະການປະຊຸມດ້ານນະໂຍບາຍ ດຳເນີນການໂດຍທີມງານສະເພາະ ທີ່ໄດ້ຮັບການສະໜັບສະໜູນຈາກ ຜູ້ສະໜັບສະໜູນ ແລະ ຕົວແທນ.<br>• ຄຸນລັກສະນະຕ່າງໆຂອງ ສພລ ໄດ້ຖືກກຳນົດໄວ້ຢູ່ໃນນະໂຍບາຍ ແລະ ຫຼັກສູດຂອງສະຖານການສຶກສາຕ່າງໆ. |
| ກຳນົດຂອບເຂດສະພາບແວດລ້ອມຂອງນະໂຍບາຍ ແລະ ຂໍ້ກຳນົດລະດັບຊາດ | • ຂອບເຂດຄວາມຄິດລິເລີ່ມ ແລະ ນະໂຍບາຍໃນລະດັບຊາດ ເພື່ອລະບຸຜູ້ທີ່ສະແດງຄຳໝັ້ນສັນຍາ ແລະ ຫຼັກຖານສ່ວນໃຫຍ່ທີ່ປາກົດໃຫ້ເຫັນໃນການຈັດຕັ້ງປະຕິບັດ. | • ເກນມາດຖານຂອງວິທີປະຕິບັດທີ່ດີລະດັບສາກົນ ແລະ ຕົວຢ່າງຂອງນະໂຍບາຍ ແລະ ແຜນງານ. |

| | | |
|---|---|---|
| | • ລະບຸອົງການ ແລະ ສະຖາບັນການສຶກສາທີ່ເປັນແຫຼ່ງຂອງຄວາມຊຳນານງານ ແລະ ປະສົບການ. | |
| ປຶກສາຫາລືຜູ້ທີ່ມີສ່ວນກ່ຽວຂ້ອງ | • ສ້າງໂຄງຮ່າງການຈັດຕັ້ງບຸກຄະລາກອນທີ່ກ່ຽວຂ້ອງຫຼັກ.<br>• ອອກແບບຂະບວນການປຶກສາຫາລື ແລະ ວາງແຜນທີ່ສະທ້ອນໃຫ້ເຫັນຄວາມຕ້ອງການຂອງຜູ້ທີ່ມີສ່ວນຮ່ວມຕ່າງໆ.<br>• ກຳນົດເຄື່ອງມື ແລະ ຊັບພະຍາກອນທີ່ຈຳເປັນເພື່ອສະໜັບສະໜູນການປຶກສາຫາລືນັ້ນ.<br>• ດຳເນີນຂະບວນການປຶກສາຫາລືກັບຜູ້ທີ່ມີສ່ວນກ່ຽວຂ້ອງຫຼັກຊຶ່ງສ້າງຄວາມເປັນເຈົ້າການ ແລະ ປະສົມປະສານແນວຄວາມຄິດທີ່ຫຼາກຫຼາຍລະດັບ.<br>• ສົ່ງເສີມການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງອື່ນໆ ລວມທັງພາກສ່ວນສັງຄົມ, ສະຖາບັນການສຶກສາ, ສະມາຄົມວິຊາຊີບ, ອົງການຈັດຕັ້ງຊາວໜຸ່ມ, ຜູ້ນຳຊຸມຊົນ, ພໍ່ແມ່ຜູ້ປົກຄອງ ແລະ ສື່ມວນຊົນ.<br>• ຮັບປະກັນວ່າການປຶກສາຫາລືສະທ້ອນໃຫ້ເຫັນເຖິງຫຼັກການ ສພລ ທີ່ລວມເອົາການເຄົາລົບ, ການເປັນຄູ່ຮ່ວມ, ການສົນທະນາ, ການຮ່ວມມື ແລະ ອື່ນໆ. | • ບຸກຄົນທີ່ກ່ຽວຂ້ອງຫຼັກໄດ້ມີສ່ວນຮ່ວມ ແລະ ປຶກສາຫາລືກັນ.<br>• ບຸກຄົນທີ່ດ້ອຍໂອກາດໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລື.<br>• ທຸກຄົນມີສ່ວນຮ່ວມໃນການປຶກສາຫາລື , ຮ່ວມມື, ເຈລະຈາ, ເຮັດວຽກຮ່ວມກັນ ແລະ ສ້າງແຮງບັນດານໃຈໃນການປະຕິບັດໜ້າທີ່ວຽກງານ.<br>• ເຫດຜົນສຳລັບ ສພລ ໄດ້ຮັບການນຳໃຊ້ເຂົ້າໃນນິຕິກຳ ແລະ ນະໂຍບາຍ. |
| ພັດທະນາຈຸດປະສົງຂອງນະໂຍບາຍ ແລະ ແຜນດຳເນີນງານການອະນຸມັດນະໂຍບາຍ ແລະ ແຜນການ | • ການກຳນົດນະໂຍບາຍຕ້ອງມີຈຸດປະສົງທີ່ຊັດເຈນ ແລະ ສາມາດວັດຜົນໄດ້.<br>• ພັດທະນາແຜນດຳເນີນງານທີ່ໃຊ້ວິທີທາງແບບກວມລວມ ແລະ ມີຊັບພະຍາກອນພຽງພໍ ແລະ ຍືນຍົງ. | • ນະໂຍບາຍ ສພລ ມີຈຸດປະສົງ ແລະ ແຜນການຈັດຕັ້ງປະຕິບັດທີ່ຊັດເຈນ ແລະ ຈະແຈ້ງ. |
| ຮັບຮອງເອົານະໂຍບາຍ ແລະ ແຜນການທີ່ຖືກຕ້ອງ | • ແບ່ງປັນນະໂຍບາຍ ແລະ ແຜນການກັບຜູ້ທີ່ກ່ຽວຂ້ອງຫຼັກ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆ. | • ນະໂຍບາຍ ສພລ ໄດ້ຮັບຮອງຢ່າງເປັນທາງການ ແລະ ເປີດເຜີຍຕໍ່ສາທາລະນະ. |

| | | |
|---|---|---|
| | • ສົ່ງເສີມນະໂຍບາຍ, ລວມທັງຜ່ານຜູ້ສະໜັບສະໜູນ ແລະ ຜູ້ຈັດຕັ້ງປະຕິບັດ ສພລ.<br>• ຂໍການຮັບຮອງ ແລະ ອະນຸມັດນະໂຍບາຍ. | |

**ຂັ້ນຕອນທີ** 2: **ການທົບທວນ ແລະ ພັດທະນາຫຼັກສູດ**

ການປັບປຸງເນື້ອໃນຫຼັກສູດ ສພລ ໃຫ້ເໝາະສົມກັບສະພາບຂອງປະເທດ ແລະ ການປຶກສາຫາລືກ່ຽວກັບການພັດທະນານະໂຍບາຍ ຈະຊ່ວຍເຮັດໃຫ້ການປັບປຸງເນື້ອໃນຫຼັກສູດໃນສະຖານການສຶກສາຕ່າງໆມີຄວາມຄົບຖ້ວນ ແລະ ສົມບູນ. ຂັ້ນຕອນຫຼັກໃນການພັດທະນາຫຼັກສູດ ແມ່ນການກຳນົດ ແລະ ທົບທວນຫຼັກສູດແຫ່ງຊາດທີ່ມີຢູ່ແລ້ວ ເພື່ອເນັ້ນໃຫ້ເຫັນວ່າ ອົງປະກອບ ຫຼື ເນື້ອໃນຫຼັກຂອງ ສພລ ໄດ້ຮັບການປັບປຸງ. ຕົວຢ່າງເຊັ່ນ: ເນື້ອໃນຂອງ ສພລ ໄດ້ກຳນົດໄວ້ໃນການສຶກສາ ເພື່ອການພັດທະນາແບບຍືນຍົງ ແລະ ການສຶກສາເພື່ອສັນຕິພາບ ເພື່ອສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການມີສ່ວນຮ່ວມໂດຍຜ່ານຮູບແບບກິດຈະກຳຕ່າງໆ ເຊັ່ນ: ການຫຼິ້ນກິລາ, ສິລະປະດົນຕີ ແລະ ຜ່ານສື່ອອນລາຍຕ່າງໆ.

ອີງຕາມວາລະສານຂອງ ອົງການ UNESCO (ປີ 2015) ໄດ້ລະບຸວ່າ ຫົວຂໍ້ ແລະ ຈຸດປະສົງການຮຽນຮູ້ ສພລ ເປັນແຫຼ່ງຂໍ້ມູນທີ່ເປັນປະໂຫຍດ ສຳລັບການທົບທວນຫຼັກສູດ ແລະ ການພັດທະນາໃນລະດັບປະເທດ ເຊັ່ນດຽວກັນກັບການອະທິບາຍເຖິງຄວາມສາມາດຫຼັກຂອງ ສພລ ແລ້ວມັນຍັງລວມເຖິງປະເດັນ ແລະ ຫົວຂໍ້ທີ່ກ່ຽວຂ້ອງສຳລັບຜູ້ຮຽນທີ່ມີອາຍຸ 5-18 ປີ. ແຫຼ່ງຂໍ້ມູນທີ່ເປັນປະໂຫຍດອີກອັນໜຶ່ງ ກໍຄືຕາຕະລາງມາຕຣິດ ທີ່ພັດທະນາໂດຍ IBE ແລະ APCEIU ເຊິ່ງປະກອບດ້ວຍໝວດໝູ່ເນື້ອໃນຫຼັກສູດທີ່ແນະນຳ ສຳລັບການເປັນພົນລະເມືອງໂລກ.

ເນື້ອໃນຫຼັກສູດຂອງ ສພລ ທີ່ສອນຢູ່ໃນສະຖານການສຶກສາ ສາມາດສອດແຊກເຂົ້າໃນຫຼາຍວິຊາ ເຊັ່ນ: ວິຊາສຶກສາພົນລະເມືອງ, ຄະນິດສາດ, ສັງຄົມສາດ, ວິທະຍາສາດ,ສິ່ງແວດລ້ອມ ແລະ ອື່ນໆ ອີງຕາມລະດັບຄວາມຮັບຮູ້ຂອງຜູ້ຮຽນ.

**ຕາຕະລາງທີ** 2 **ການທົບທວນ ແລະ ພັດທະນາຫຼັກສູດ**

| ລາຍການ | ຍຸດທະສາດທີ່ແນະນຳ | ຄາດຫວັງຜົນໄດ້ຮັບ |
|---|---|---|
| ໂຄງຮ່າງຫຼັກສູດ | • ສ້າງໂຄງຮ່າງ ແລະ ທົບທວນຫຼັກສູດໃນລະບົບການສຶກສາໃນໂຮງຮຽນ, ເພື່ອກຳນົດເນື້ອໃນ ສພລ ທີ່ມີຢູ່ແລ້ວ ໂດຍຜູ້ຊ່ຽວຊານດ້ານຫຼັກສູດ ຫຼື ນັກການສຶກສາ.<br>• ສ້າງໂຄງຮ່າງຫຼັກສູດ ແລະ ກິດຈະກຳການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສທີ່ກ່ຽວພັນ ຊຶ່ງສະໜັບສະໜູນຫຼັກສູດທີ່ເປັນທາງການຂອງ ສພລ. | • ໂຄງຮ່າງຫຼັກສູດໄດ້ຮັບການວິເຄາະທີ່ສະຫຼຸບອົງປະກອບຂອງຫຼັກສູດທີ່ມີຢູ່ຂົງເຂດການຮຽນຮູ້, ຫົວຂໍ້, ຈຸດປະສົງ ແລະ ຜົນໄດ້ຮັບ, ແລະ ແນວທາງປະຕິບັດການປະເມີນຜົນທີ່ກ່ຽວຂ້ອງກັບ ສພລ.<br>• ການຮັບຮູ້ຂອງວິຊາຄູທີ່ຕ້ອງການສົ່ງຕໍ່ໃຫ້ ສພລ ໃນແຕ່ລະຂັ້ນຕອນຂອງການຮຽນຮູ້.<br>• ແຜນກິດຈະກຳຂອງຫຼັກສູດການສຶກສານອກໂຮງຮຽນ, ຫຼັກສູດທີ່ບໍ່ເປັນທາງການ ແລະ ຫຼັກສູດພິເສດທີ່ສົ່ງເສີມ ແລະ ສະໜັບສະໜູນ ສພລ. |

| | | |
|---|---|---|
| | • ກຳນົດແຜນການສອນທີ່ຈຳເປັນເພື່ອສະໜັບສະໜູນການສອນຂອງຄູທີ່ມີຄວາມສາມາດຫຼັກດ້ານ ສພລ. | |
| ການປຶກສາຫາລືກັບຜູ້ທີ່ກ່ຽວຂ້ອງຕ່າງໆ | • ປຶກສາຫາລືກັບຜູ້ທີ່ກ່ຽວຂ້ອງຫຼັກກ່ຽວກັບຂໍ້ຄົ້ນພົບ ແລະ ຂໍ້ສະເໜີແນະຂອງການສ້າງແຜນ ແລະ ການວາງແຜນຫຼັກສູດ.<br>• ສ້າງຄວາມຮ່ວມມືກັບ CSOs ທີ່ເຮັດວຽກໃນດ້ານວັດທະນະທຳ, ຄວາມສະເໝີພາບລະຫວ່າງຍິງ - ຊາຍ, ສິດທິມະນຸດ, ຄວາມຍຸຕິທຳທາງສັງຄົມ ແລະ ການສຶກສາເພື່ອການພັດທະນາແບບຍືນຍົງ, ແລະ ກັບອົງການທີ່ມີໜ້າເຊື່ອຖືໃນການສົ່ງເສີມສັນຕິພາບ, ການເຈລະຈາ ແລະ ຄວາມຍຸດຕິທຳ, ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ການສະໜັບສະໜູນການເຊື່ອມໂຍງເຂົ້າກັບ ສພລ. | • ຂໍ້ຕົກລົງ ກ່ຽວກັບຄວາມສາມາດຫຼັກຂອງ ສພລ ແລະ ຜົນການຮຽນຮູ້ ແລະ ຜົນການປຶກສາຫາລືເປັນຫຼັກຖານໃນການອອກແບບຫຼັກສູດ ແລະ ເນື້ອໃນ.<br>• ການຮ່ວມມືກັບອົງການຈັດຕັ້ງຕ່າງໆທີ່ສາມາດສະໜັບສະໜູນ ແລະ ເສີມຂະຫຍາຍການເຊື່ອມໂຍງເຂົ້າກັບ ສພລ. |
| ສ້າງຄວາມເຂັ້ມແຂງ ແລະ ພັດທະນາ ສພລ | • ມີສ່ວນຮ່ວມກັບນັກພັດທະນາຫຼັກສູດ ແລະ ສະຖາບັນສ້າງຄູໃນການປັບປຸງການສອດແຊກເນື້ອໃນ ສພລ.<br>• ພັດທະນາຄຳແນະນຳໂດຍລະອຽດ ແລະ ສະເພາະເຈາະຈົງເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດ ສພລ, ໂດຍເນັ້ນໃສ່ບົດບາດຂອງນັກການສຶກສາໃນຖານະຜູ້ອຳນວຍຄວາມສະດວກ ແລະ ຜູ້ຊ່ວຍ.<br>• ກຳນົດວິທີການທີ່ເໝາະສົມໃນການຕິດຕາມ ແລະ ປະເມີນຄວາມກ້າວໜ້າ ແລະ ຜົນໄດ້ຮັບຂອງການຮຽນຮູ້. | • ການອອກແບບຫຼັກສູດທີ່ກຳນົດຂອບເຂດ ສພລ, ຫົວຂໍ້, ຈຸດປະສົງການຮຽນຮູ້ ແລະ ຜົນໄດ້ຮັບ, ແລະ ວິທີການປະເມີນຜົນ.<br>• ຂອບເຂດການຮຽນຮູ້ຫຼັກຂອງ ສພລ ກວມເອົາຄວາມຮູ້, ສະຕິປັນຍາ, ອາລົມຄວາມຮູ້ສຶກທາງດ້ານສັງຄົມ ແລະ ການປະພຶດ ລວມຢູ່ໃນຫຼັກສູດໃນທຸກລະດັບຊັ້ນຮຽນ.<br>• ຄຳແນະນຳດ້ານວິຊາຄູທີ່ສະໜັບສະໜູນ ແລະ ຍົກສະມັດຖະພາບຫຼັກໃນການສອນ ແລະ ການຮຽນຮູ້ຂອງ ສພລ. |

| | | |
|---|---|---|
| | • ປຶກສາກັບນັກພັດທະນາປຶ້ມແບບຮຽນ ແລະ ອຸປະກອນການຮຽນອື່ນໆຕາມຄວາມຕ້ອງການ. | |
| ທົດລອງຫຼັກສູດ ຫຼື ບົດຮຽນຕົວຢ່າງ | • ທົດລອງ ແລະ ປະເມີນຕົວຢ່າງຫົວຂໍ້, ເນື້ອໃນ ແລະ ບົດຮຽນ ສພລ ບໍ່ວ່າຈະເປັນການເພີ່ມເຂົ້າໃນຫຼັກສູດທີ່ມີຢູ່ແລ້ວ, ໂດຍນຳໃຊ້ມາດຕະການວັດດ້ານຄຸນນະພາບ ກໍຄືດ້ານປະລິມານ.<br>• ປັບປຸງຕາມຄວາມຕ້ອງການ ແລະ ຕາມຄວາມຈຳເປັນ. | • ອອກແບບຫຼັກສູດ ສພລ ພ້ອມດ້ວຍຈຸດປະສົງ ແລະ ຜົນໄດ້ຮັບຂອງການຮຽນຮູ້ທີ່ຊັດເຈນ.<br>• ຜູ້ກວດກາຫຼັກສູດ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງມີຄວາມໝັ້ນໃຈພຽງພໍໃນການອອກແບບຫຼັກສູດ ແລະ ເນື້ອໃນ ສພລ ເພື່ອດຳເນີນການຈັດຕັ້ງປະຕິບັດ. |
| ແນະນຳຫຼັກສູດໃໝ່ | • ແນະນຳຫຼັກສູດ ສພລ ໂດຍຜ່ານການສະຫຼຸບ, ຝຶກອົບຮົມກ່ອນການໃຫ້ບໍລິການ ແລະ ການຮຽນຮູ້ຢ່າງມືອາຊີບ ສຳລັບນັກວາງແຜນ ແລະ ຜູ້ບໍລິຫານການສຶກສາ, ຄູຝຶກ, ຜູ້ນຳໂຮງຮຽນ, ນັກການສຶກສາ ແລະ ນັກພັດທະນາແຫຼ່ງຊັບພະຍາກອນທາງການສຶກສາ. | • ຫຼັກສູດ ສພລ ໄດ້ຮັບການຍອມຮັບ ແລະ ເຊື່ອມເຂົ້າສູ່ສະຖານການສຶກສາ.<br>• ຜູ້ມີສ່ວນຮ່ວມຫຼັກມີຄວາມພ້ອມ ແລະ ມີຄວາມສາມາດໃນການສະເໜີຫຼັກສູດ ສພລ. |
| ທົບທວນຫຼັກສູດ ແລະ ວິຊາຊີບຄູ | • ປະເມີນຜົນ ແລະ ທົບທວນຄືນການອອກແບບ ຫຼັກສູດ, ເນື້ອໃນ ແລະ ການຖ່າຍທອດຫຼັກສູດໃຫ້ເປັນລະບົບຢ່າງຕໍ່ເນື່ອງ. | • ຫຼັກສູດທີ່ມີຄຸນນະພາບເຊິ່ງສະທ້ອນເຖິງເປົ້າໝາຍ ແລະ ຫຼັກການຂອງ ສພລ ແລະ ທັນສະໄໝ ກ່ຽວຂ້ອງກັບຊີວິດ ແລະ ຄວາມຕ້ອງການຂອງຜູ້ຮຽນໃນດ້ານເນື້ອໃນຂອງການຮຽນຮູ້ ແລະ ໄລຍະການສຶກສາທີ່ແຕກຕ່າງກັນ. |

**ຂັ້ນຕອນທີ 3: ການພັດທະນາຂີດຄວາມສາມາດ**

ຜູ້ກຳນົດນະໂຍບາຍດ້ານການສຶກສາ, ຜູ້ບໍລິຫານ ແລະ ຄູອາຈານຈຳເປັນຕ້ອງເຂົ້າໃຈຫຼັກການຂອງ ສພລ ແລະ ວິທີທີ່ຈະສາມາດເສີມສ້າງຄວາມເຂັ້ມແຂງ ແລະ ເພີ່ມປະສົບການດ້ານການສຶກສາໃຫ້ແກ່ນັກການສຶກສາ ແລະ ຜູ້ຮຽນ. ຫຼັກການຂອງ ສພລ ຍັງຮຽກຮ້ອງໃຫ້ພວກເຮົາກວດກາການປະຕິບັດ, ການຮັບຮູ້, ການໃຫ້ຄຸນຄ່າ ແລະ ເບິ່ງໂລກໃນແງ່ດີ ແລະ ເຫັນວ່ານັກການສຶກສາກໍເປັນຜູ້ຮຽນຮູ້ ແລະ ເປັນພົນລະເມືອງໂລກ ຊຶ່ງໝາຍຄວາມວ່ານັກການສຶກສາກໍ່ຄວນຈະໄດ້ຮັບການແຈ້ງໃຫ້ຮູ້ກ່ຽວກັບໂລກໜ່ວຍນີ້, ມີຄວາມຮູ້ດ້ານວິພາກ, ມີຄວາມເຊື່ອມໂຍງທາງສັງຄົມ, ເຄົາລົບຄວາມຫຼາກຫຼາຍ ແລະ ມີຄວາມຮັບຜິດຊອບດ້ານຈັນຍາບັນໂດຍຜ່ານທັດສະນະ, ພຶດຕິກຳ ແລະ ຄວາມສຳພັນກັບຜູ້ຮຽນ. ນັກການສຶກສາມີບົດບາດສຳຄັນໃນການສ້າງ ແລະ ຖ່າຍທອດວັດທະນະທຳ ແລະ ຄ່ານິຍົມຂອງສະຖາບັນການສຶກສາ. ວັດທະນະທຳ ແລະ ຄ່ານິຍົມຂອງສະຖານການສຶກສາ ມີສ່ວນເຮັດໃຫ້ເກີດການຮຽນຮູ້ນອກຫຼັກສູດທີ່ເປັນທາງການ ຫຼື ບາງຄັ້ງສິ່ງທີ່ເອີ້ນວ່າ

'ຫຼັກສູດທີ່ເຊື່ອງຊ້ອນ'. ດ້ວຍເຫດນັ້ນ, ສພລ ຈະເຕີບໃຫຍ່ຂະຫຍາຍຕົວໃນສະພາບແວດລ້ອມຂອງໂຮງຮຽນບ່ອນທີ່ຜູ້ບໍລິຫານ ແລະ ຄູອາຈານຍຶດໝັ້ນກັບຄຸນຄ່າຂອງສິດທິມະນຸດ, ຄວາມຍຸດຕິທຳ, ສັນຕິພາບ, ຄວາມເຄົາລົບ ແລະ ການມີສ່ວນຮ່ວມ. ການຝຶກອົບຮົມຄູສອນ ສພລ ແລະ ສ້າງຫຼັກສູດ ສພລ ແມ່ນການສ້າງຂີດຄວາມສາມາດໃຫ້ເຂົາເຈົ້າໃນການສົ່ງເສີມຄ່ານິຍົມເຫຼົ່ານີ້ ແລະ ແກ້ໄຂກັບການເລືອກປະຕິບັດ ແລະ ຄວາມຮຸນແຮງ.

ການສ້າງຂີດຄວາມສາມາດຂອງນັກການສຶກສາ ສຳລັບ ສພລ ເປັນສິ່ງສຳຄັນທີ່ສຸດ. ການຝຶກອົບຮົມໃນຫຼັກການ ແລະ ການປະຕິບັດ ສພລ, ເຊິ່ງເປັນສ່ວນໜຶ່ງ ຂອງການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແລະ ມີຄຸນນະພາບ ອາດມີຄວາມຈຳເປັນ ສຳລັບນັກການສຶກສາຜູ້ທີ່ບໍ່ຄຸ້ນເຄີຍກັບການສຶກສາແບບປ່ຽນແປງ. ນອກຈາກນີ້ ມັນຍັງເປັນສິ່ງສຳຄັນໃນການສ້າງວັດທະນະທຳ, ການຮຽນຮູ້ແບບມືອາຊີບທີ່ມີຕົ້ນແບບມາຈາກຫຼັກການ ສພລ ເຊັ່ນ: ການເຮັດວຽກຮ່ວມກັນລະຫວ່າງເພື່ອນຮ່ວມງານ, ການສັງເກດ, ໃຫ້ຄຳປຶກສາ, ການຮຽນຮູ້ຈາກການປະຕິບັດຕົວຈິງ ແລະ ມີຄວາມຮັບຜິດຊອບຕໍ່ສັງຄົມ, ຄວາມຮູ້ສຶກຂອງຊຸມຊົນ ແລະ ການມີສ່ວນຮ່ວມຢ່າງຫ້າວຫັນຂອງຜູ້ຮຽນຢ່າງຕັ້ງໜ້າ.

ເນື່ອງຈາກ ສພລ ກ່າວເຖິງສິ່ງທີ່ທ້າທາຍໃນບາງສະພາບການຮຽນຮູ້ຢ່າງມືອາຊີບຈຶ່ງຕ້ອງສ້າງທັກສະໃນການຄິດວິເຄາະ ແລະ ປະເມີນແບບວິພາກ ລວມເຖິງສື່ໃນຮູບແບບຕ່າງໆ. ການເປີດໂອກາດໃຫ້ນັກການສຶກສາໄດ້ສຳພັດກັບວັດທະນະທຳທີ່ແຕກຕ່າງກັນໂດຍຜ່ານປະສົບການການຮຽນຮູ້ໃນທ້ອງຖິ່ນ, ໃນຊຸມຊົນທີ່ຫຼາກຫຼາຍ ຫຼື ການແລກປ່ຽນລະຫວ່າງປະເທດ ຍັງສາມາດເພີ່ມພູນຄວາມຮູ້ ແລະ ຄວາມເຂົ້າໃຈໃນບັນຫາຕ່າງໆໃນທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ; ຮູບແບບການຮຽນຮູ້ແບບມືອາຊີບນີ້ສາມາດ “ຕິດຕາມໄດ້ຢ່າງວ່ອງໄວ” ເຮັດໃຫ້ຄວາມສາມາດໃນການປ່ຽນແປງວັດທະນະທຳ ແລະ ມີຄວາມຮູ້ສຶກເປັນພົນລະເມືອງໂລກ.

**ຕາຕະລາງທີ 3 ການສ້າງຂີດຄວາມສາມາດ**

| ລາຍການ | ຍຸດທະສາດທີ່ແນະນຳ | ຄາດຫວັງຜົນໄດ້ຮັບ |
|---|---|---|
| ພັດທະນາຄວາມໝັ້ນໃຈຂອງນັກການສຶກສາ ແລະ ຄູສອນໃນ ສພລ | • ສະແດງໃຫ້ເຫັນເຖິງຜົນປະໂຫຍດ ແລະ ການປ່ຽນແປງຂອງ ສພລ ທີ່ມີຕໍ່ການຮຽນການສອນ.<br>• ໃຫ້ການສະໜັບສະໜູນ ແລະ ຄຳແນະນຳໃນການສ້າງ ແລະ ບຳລຸງຄູເພື່ອເພີ່ມຄວາມໝັ້ນໃຈ, ຂີດຄວາມສາມາດໃນການສອນ ສພລ.<br>• ເປັນການເປີດໂອກາດໃຫ້ນັກການສຶກສາ ແລະ ຄູສອນ ທັງໃນ ແລະ ນອກໂຮງຮຽນມີສ່ວນຮ່ວມໃນການຖ່າຍທອດຄວາມຮູ້ ແລະ ຝຶກອົບຮົມ ສພລ. | • ຜູ້ສອນໄດ້ນຳໃຊ້ຫຼັກການ ສພລ ເຂົ້າໃນການຮຽນການສອນ, ໃນສະຖານ ການສຶກສາ ແລະ ຊຸມຊົນຢ່າງກວ້າງຂວາງ.<br>• ການຮຽນຢູ່ໂຮງຮຽນຍັງປະກອບມີຫຼັກສູດທີ່ບໍ່ເປັນທາງການ ຫຼື ຫຼັກສູດ “ເຊື່ອງຊ້ອນ ຫຼື ຫຼັກສູດທ້ອງຖິ່ນ”.<br>• ການເຮັດວຽກຮ່ວມກັນຢ່າງຕັ້ງໜ້າໃນການຈັດການຮຽນການສອນ ສພລ ທັງໃນ ແລະ ນອກໂຮງຮຽນ. |

| | | |
|---|---|---|
| ສົ່ງເສີມການຮຽນຮູ້ ແລະ ການພັດທະນາວິຊາຊີບຢ່າງຕໍ່ເນື່ອງ | • ນຳໃຊ້ຫຼັກການ 70:20:10 ເພື່ອສະໜັບສະໜູນຄວາມຕ້ອງການໃນການຝຶກອົບຮົມ ສພລ ຂອງນັກການສຶກສາ, ເຊັ່ນ: 70% ຂອງການຮຽນຮູ້ວິຊາຊີບແມ່ນເກີດຂຶ້ນໃນໜ້າວຽກໂດຍຜ່ານການເຮັດວຽກເປັນທີມ, ສັງເກດ ແລະ ຮຽນຮູ້ຈາກຄົນອື່ນ, 20% ໂດຍຜ່ານການແນະນຳ ແລະ ການຖອດຖອນບົດຮຽນ ແລະ 10% ຈາກການຝຶກອົບຮົມ. | • ສະພາບແວດລ້ອມການຮຽນຮູ້ທີ່ມີປະສິດທິພາບ ຊຶ່ງເປັນຕົວແບບໃນການກວມລວມເອົາທຸກຄົນທີ່ເຮັດວຽກຮ່ວມກັນ ເພື່ອສົ່ງເສີມອົງການຂອງນັກການສຶກສາ ແລະ ຜູ້ຮຽນ.<br>• ຕົວແບບໃໝ່ຂອງການຮຽນຮູ້ແບບມືອາຊີບເກີດຂຶ້ນ. |
| ສ້າງຄວາມເຂັ້ມແຂງໃນການຮຽນຮູ້ວິຊາຊີບໃນຫຼັກສູດທັງໃນ ແລະ ນອກໂຮງຮຽນ | • ສົ່ງເສີມຫຼັກການ ສພລ ແລະ ການສຶກສາທີ່ປ່ຽນແປງໂດຍຜ່ານທຸກໆກິດຈະກຳຂອງການພັດທະນາວິຊາຊີບໂດຍສະເພາະການມີສ່ວນຮ່ວມຂອງນັກການສຶກສາ.<br>• ສ້າງຄວາມເຂັ້ມແຂງໃນການຝຶກອົບຮົມວິຊາຊີບໃຫ້ຜູ້ນຳທາງການສຶກສາໃນວິທີການບໍລິຫານຄຸ້ມຄອງແບບມີສ່ວນຮ່ວມ.<br>• ຮວບຮວມເອົາການຄິດວິເຄາະ ແລະ ການຮູ້ໜັງສືຢ່າງພິຈາລະນາໄຕ່ຕອງໃນການຮຽນຮູ້ທາງວິຊາຊີບ. | • ຄຸນລັກສະນະຂອງ ສພລ ເຊັ່ນ: ສິດທິມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສຶກສາເພື່ອສັນຕິພາບ, ການສຶກສາເພື່ອຄວາມຍືນຍົງດ້ານສິ່ງແວດລ້ອມ, ການແກ້ໄຂຂໍ້ຂັດແຍ່ງ, ຄວາມຫຼາກຫຼາຍດ້ານວັດທະນະທຳ ຊຶ່ງມີສ່ວນຊ່ວຍໃຫ້ສະພາບແວດລ້ອມຂອງການຮຽນຮູ້ມີຄວາມສະຫງົບສຸກຫຼາຍຂຶ້ນ.<br>• ນັກການສຶກສາມີຄວາມໝັ້ນໃຈ ແລະ ມີຄວາມສາມາດໃນການເຂົ້າເຖິງທຸກຮູບແບບຂອງສື່ ແລະ ສ້າງຄວາມເຂັ້ມແຂງໃຫ້ຜູ້ຮຽນເປັນຜູ້ບໍລິໂພກສື່ຢ່າງພິຈາລະນາໄຕ່ຕອງ. |
| ສົ່ງເສີມວິທີການຈັດການຮຽນການສອນທີ່ເອົາຜູ້ຮຽນເປັນໃຈກາງ | • ສົ່ງເສີມການມີສ່ວນຮ່ວມຂອງຜູ້ຮຽນທີ່ພັດທະນາຂີດຄວາມສາມາດໃນການນຳໃຊ້ເຕັກໂນໂລຢີຂໍ້ມູນຂ່າວສານເພື່ອການທຳງານຮ່ວມມື ແລະ ມີຄວາມຄິດວິເຄາະ.<br>• ສົ່ງເສີມໃຫ້ມີການລິເລີ່ມໃນສະຖານການສຶກສາ ແລະ ຊຸມ | • ສະພາບແວດລ້ອມການຮຽນຮູ້ທີ່ເອື້ອອຳນວຍຕໍ່ການມີສ່ວນຮ່ວມການຮຽນການສອນ ສພລ.<br>• ການເຊື່ອມໂຍງລະຫວ່າງສະຖານການສຶກສາ ແລະ ຊຸມຊົນ ໂດຍຜູ້ຮຽນຖ່າຍທອດຄວາມຮູ້, ທັດສະນະຄະຕິ ແລະ ທັກສະໃໝ່ໆໄປສູ່ການປະຕິບັດໃນຊຸມຊົນ. |

| | | |
|---|---|---|
| | ຊຶນທີ່ໃຫ້ຜູ້ຮຽນມີສ່ວນຮ່ວມໃນການປະຕິບັດກິດຈະກຳຢ່າງມີຄວາມຮັບຜິດຊອບທີ່ກໍ່ໃຫ້ເກີດຜົນປະໂຫຍດຕໍ່ສັງຄົມ ແລະ ສິ່ງແວດລ້ອມ. | |
| ຮວບຮວມການແລກປ່ຽນປະສົບການຕ່າງໆໃນການກໍ່ສ້າງ ແລະ ບຳລຸງຄູ | • ສະໜັບສະໜູນການມີສ່ວນຮ່ວມຂອງນັກການສຶກສາໃນການແລກປ່ຽນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ ຖືເປັນກິດຈະກຳການຮຽນຮູ້ທາງວິຊາຊີບ ເພື່ອເປີດໂອກາດໃຫ້ມີການເຊື່ອມໂຍງດ້ານວັດທະນະທຳ ແລະ ຊຸມຊົນທີ່ແຕກຕ່າງກັນ ລວມເຖິງບັນດາເຜົ່າທີ່ດ້ອຍໂອກາດ ແລະ ພັດທະນາຄວາມຮູ້ສຶກເປັນພົນລະເມືອງໂລກ. | • ບັນດານັກການສຶກສາເຂົ້າຮ່ວມການຝຶກອົບຮົມ ສພລ ຈັດຂຶ້ນໂດຍອົງການພາກພື້ນ ແລະ ສາກົນ (ເຊັ່ນ: APCEIU, UNESCO, UNICEF).<br>• ນັກການສຶກສາທີ່ໄດ້ເຂົ້າຮ່ວມໃນການແລກປ່ຽນ ແລະ ປະສົບການທີ່ບໍ່ຊໍ້າກັນ ເປັນການສະໜັບສະໜູນ ການເຜີຍແຜ່ ສພລ ແລະ ເປັນຜູ້ນຳກິດຈະກຳການພັດທະນາວິຊາຊີບ. |

**ຂັ້ນຕອນທີ** 4: **ການສ້າງຄວາມຮູ້, ການແບ່ງປັນ ແລະ ການເຜີຍແຜ່ຄວາມຮູ້**

ການສ້າງເຄືອຂ່າຍທັງພາຍໃນ ແລະ ຕ່າງປະເທດ ສາມາດຊ່ວຍເພີ່ມຄວາມຊັດເຈນດ້ານແນວຄິດກ່ຽວກັບ ສພລ, ສະຫນັບສະຫນູນການແລກປ່ຽນຄວາມຮູ້ ແລະ ປັບປຸງການປະຕິບັດ ສພລ, ເຊັ່ນດຽວກັນກັບການປັບປຸງຄວາມເຂົ້າໃຈ ແລະ ການຮ່ວມມືລະຫວ່າງປະເທດ.

ມີຫຼາຍອົງການຈັດຕັ້ງ ແລະ ເຄືອຂ່າຍໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບພາກພື້ນ ແລະ ສາກົນ ທີ່ໃຫ້ຄວາມສຳຄັນກັບ ສພລ.

ໃນລະດັບສາກົນ ໄດ້ແກ່ ສະພາໂລກ ສຳລັບຫຼັກສູດ ແລະ ການສອນ, ຄະນະກຳມະການດ້ານການສຶກສາ ເພື່ອສັນຕິພາບ, ເຄືອຂ່າຍການສຶກສາໂລກ, ສະມາຄົມສາກົນເພື່ອການສຶກສາວັດທະນະທຳລະຫວ່າງປະເທດ, ສະພາສິ່ງແວດລ້ອມໂລກ ແລະ ອົງການສາກົນເພື່ອການສຶກສາດ້ານສິດທິມະນຸດ. ອົງການຈັດຕັ້ງ ແລະ ເຄືອຂ່າຍເຫຼົ່ານີ້ເປັນແຫຼ່ງຄວາມຮູ້ທີ່ເປັນປະໂຫຍດ, ການຮຽນການສອນ, ແນວທາງປະຕິບັດທີ່ດີທີ່ສຸດ ແລະ ການສະໜັບສະໜູນທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ຈັດຕັ້ງປະຕິບັດ ສພລ.

ການຮວບຮວມ ແລະ ການແບ່ງປັນຜົນສຳເລັດຂອງ ສພລ ແລະ ການສ້າງໂຄງການຮ່ວມມືກັບຄູອາຈານ ແລະ ຜູ້ຮຽນໃນປະເທດອື່ນໆ ສາມາດສ້າງຄວາມສົນໃຈໃນ ສພລ ກໍຄືຄວາມເຂົ້າໃຈເຊິ່ງກັນ ແລະ ກັນ, ຄວາມເປັນຜູ້ນຳທີ່ໜຸ່ມນ້ອຍ ແລະ ເປັນພົນລະເມືອງໂລກ.

ຊາວໜຸ່ມ ສາມາດເປັນກຳລັງແຮງຂັບເຄື່ອນໃນການສົ່ງເສີມຄຸນຄ່າຂອງ ສພລ ແລະ ນຳໄປສູ່ການປະຕິບັດ. ການສ້າງຕັ້ງ ແລະ ເຂົ້າຮ່ວມເຄືອຂ່າຍຊາວໜຸ່ມ ເປັນຕົວແທນຂອງການປ່ຽນແປງ ແລະ ສະໜັບສະໜູນການເປັນ

ພົນລະເມືອງໂລກ ເປັນພື້ນຖານໃຫ້ແກ່ຄວາມສຳເລັດ ແລະ ຄວາມຍືນຍົງຂອງ ສພລ. ຕົວຢ່າງ, ມູນນິທິ Global Digital Citizen Foundation ແລະ iEARN ແມ່ນອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລທີ່ເຊື່ອມຕໍ່ກັບຊາວໜຸ່ມ ແລະ ໂຮງຮຽນຂອງພວກເຂົາດ້ວຍໂຄງການ ແລະ ເວທີສົນທະນາທີ່ສົ່ງເສີມການພັດທະນາຄວາມເປັນພົນລະເມືອງໂລກ. ສະພາອັງກິດ ແລະ ເຄືອຂ່າຍຊາວໜຸ່ມໂລກທີ່ສະໜັບສະໜູນ ໂດຍ Oxfam, UNESCO ແລະ APCEIU ຍັງເປີດໂອກາດໃຫ້ຊາວໜຸ່ມໃນທົ່ວໂລກຕິດຕໍ່ເຊື່ອມໂຍງ ແລະ ມີສ່ວນຮ່ວມກັນດ້ານນະໂຍບາຍ ແລະ ຫຼັກສູດ ສພລ.

ຮັບປະກັນໃຫ້ນັກຮຽນມີໂອກາດຕິດຕໍ່ພົວພັນ, ຮ່ວມມື ແລະ ແບ່ງປັນແນວຄວາມຄິດ ແລະ ຄວາມຮູ້ກັບມິດສະຫາຍຂອງພວກເຂົາໃນປະເທດອື່ນ, ໂດຍຜ່ານ ICT ກໍຄື ປະສົບການການຮຽນຮູ້ທີ່ເປັນໄປໄດ້, ການແລກປ່ຽນລະຫວ່າງປະເທດ ແລະ ການມີສ່ວນຮ່ວມໃນໂຄງການສາກົນ.

**ຕາຕະລາງທີ່ 4 ການສ້າງຄວາມຮູ້, ການແບ່ງປັນ ແລະ ເຜີຍແຜ່**

| ວິທີການ-ຍຸດທະສາດທີ່ແນະນຳ | | ຄາດຫວັງຜົນໄດ້ຮັບ |
|---|---|---|
| ການກຳນົດ ແລະ ການມີສ່ວນຮ່ວມກັບ ເຄືອຂ່າຍລະດັບຊາດ ແລະ ລະດັບສາກົນ | ສ້າງແຜນ ແລະ ສ້າງຄວາມເຊື່ອມໂຍງກັບເຄືອຂ່າຍ ແລະ ອົງການລະດັບຊາດ ແລະ ສາກົນທີ່ມີສ່ວນກ່ຽວຂ້ອງກັບການສຶກສາທີ່ປ່ຽນແປງ ແລະ ສະໜັບສະໜູນ ສພລ ທາງກົງ ແລະ ທາງອ້ອມ. | • ມີສ່ວນຮ່ວມຢ່າງຫ້າວຫັນໃນກິດຈະກຳການແລກປ່ຽນຄວາມຮູ້ ສພລ ໃນລະດັບຊາດ ແລະ ລະດັບສາກົນ. |
| ພັດທະນາເຄືອຂ່າຍ ແລະ ຊຸມຊົນແຫ່ງການປະຕິບັດ | • ສ້າງເຄືອຂ່າຍນັກການສຶກສາ ສພລໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ ເພື່ອແບ່ງປັນແນວຄວາມຄິດ ແລະ ສະໜັບສະໜູນການເຜີຍແຜ່ ສພລ.<br>• ກຳນົດໂອກາດທີ່ເປັນທາງການ ແລະ ບໍ່ເປັນທາງການທີ່ສາມາດໃຊ້ເປັນຊ່ອງທາງແລກປ່ຽນປະສົບການ ແລະ ແຫຼ່ງຮຽນຮູ້. | • ການຮ່ວມມືຢ່າງຫ້າວຫັນ ແລະ ສ້າງເຄືອຂ່າຍລະຫວ່າງນັກການສຶກສາທີ່ມີສ່ວນຊ່ວຍໃຫ້ການເຜີຍແຜ່ ສພລ ໃນວົງກວ້າງ ແລະ ເປັນລະບົບຫຼາຍຂື້ນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ.<br>• ການແລກປ່ຽນຄວາມຄິດ, ປະສົບການ, ແຫຼ່ງຮຽນຮູ້, ຜົນສຳເລັດ, ການປະຕິບັດທີ່ດີທີ່ສຸດ ແລະ ລວມເຖິງສິ່ງທ້າທາຍ. |
| ມີສ່ວນຮ່ວມກັບຫຼາຍ ພາກສ່ວນ ແລະ ນັກ ເຄື່ອນໄຫວ ໃນຫຼາຍລະດັບ | • ສົ່ງເສີມການຮ່ວມມື ແລະ ການສື່ສານແບບເປີດກວ້າງ ທີ່ຊຸກຍູ້ການສະໜັບສະໜູນ ສພລ ໃນເວລາດຽວກັນ ກໍຮັບຮູ້ສິ່ງທ້າທາຍໃນລະດັບທ້ອງຖິ່ນ ແລະ ລະດັບຊາດ. | • ສພລ ໄດ້ຮັບການພັດທະນາ ແລະ ສະໜັບສະໜູນຜ່ານການສົນທະນາ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທີ່ຫຼາກຫຼາຍຊຶ່ງມີຄວາມສົນໃຈ ແລະ ຄວາມຊຳນານໃນການເປັນພົນລະເມືອງໂລກ. |

| | | |
|---|---|---|
| ສະໜັບສະໜູນ ແລະ ສ້າງຄວາມຍືນຍົງໂຄງການລະດັບໂລກ ແລະ ເປັນຄູ່ຮ່ວມມື | • ພິຈາລະນາສ້າງຕັ້ງກຸ່ມຜູ້ຊ່ຽວຊານດ້ານ ICT ເພື່ອສະໜັບສະໜູນ ໂຄງການລະດັບໂລກ.<br>• ນຳໃຊ້ ICT ເພື່ອເປີດໂອກາດໃຫ້ຜູ້ຮຽນມີສ່ວນຮ່ວມໃນລະບົບອອນລາຍໃນໂຄງການຮ່ວມມືລະດັບໂລກ.<br>• ພັດທະນາການຮ່ວມມືກັບໂຮງຮຽນໃນປະເທດອື່ນໆເພື່ອອຳນວຍຄວາມສະດວກໃນການສື່ສານ, ການເຮັດວຽກຮ່ວມກັນ ແລະ ປະຕິບັດໂຄງການຮ່ວມກັນ.<br>• ຮັບປະກັນວ່ານັກການສຶກສາ ແລະ ຜູ້ຮຽນມີໂອກາດໃນການທົບທວນ, ຖອດຖອນບົດຮຽນ ແລະ ປະຕິບັດການຮ່ວມມື. | • ຜູ້ຮຽນ ແລະ ນັກການສຶກສາພົວພັນກັບເພື່ອນຂອງພວກເຂົາໃນວິທີທາງພັດທະນາ ແລະ ສົ່ງເສີມ ສພລ.<br>• ສະຖາບັນການສຶກສາ ມີສ່ວນຮ່ວມຢ່າງຕັ້ງໜ້າກັບບັນດາໂຄງການເຄືອຂ່າຍທົ່ວໂລກ ແລະ ກິດຈະກຳທີ່ມີຜົນປະໂຫຍດໂດຍກົງກັບຊາວໜຸ່ມ, ຄູອາຈານໃນສະຖານການສຶກສາ ແລະ ຊຸມຊົນ.<br>• ຕົວຢ່າງການປະຕິບັດທີ່ເປັນຕົວແບບ ສາມາດແບ່ງປັນລະຫວ່າງຊຸມຊົນແຫ່ງການຮຽນຮູ້ໃນລະດັບທ້ອງຖິ່ນ ແລະ ລະດັບໂລກ. |

**ຂັ້ນຕອນທີ** 5: **ການຕິດຕາມ ແລະ ປະເມີນຜົນ**

ເປົ້າໝາຍຂອງການຕິດຕາມ ແລະ ປະເມີນຜົນ ແມ່ນເພື່ອປັບປຸງປະສົບການການຮຽນຮູ້ ແລະ ຜົນໄດ້ຮັບຂອງຜູ້ຮຽນ. ຈຸດປະສົງຂອງການຕິດຕາມ ແລະ ປະເມີນຜົນ ແມ່ນເພື່ອໃຫ້ຄຳຄິດເຫັນທີ່ສາມາດນຳໃຊ້ເຂົ້າໃນການປັບປຸງການຮຽນການສອນ ໂດຍສະເພາະ ເພື່ອປະເມີນຜົນໄດ້ຮັບຂອງການຮຽນຮູ້ໃຫ້ສອດຄ່ອງກັບຈຸດປະສົງ. ການປະເມີນຜົນແມ່ນມີຄວາມສຳຄັນຕໍ່ການປັບປຸງຄຸນນະພາບຂອງການສຶກສາ ແລະ ປະສິດທິຜົນຂອງການຮຽນການສອນ ແລະ ຍຸດທະສາດການປະເມີນຜົນຂອງ ສພລ ຄວນປະກອບມີທັງຜູ້ຮຽນ ແລະ ຜູ້ສອນ ລວມທັງຂະບວນການ, ຜົນໄດ້ຮັບ ແລະ ສະພາບບັນຫາ.

**ຕົວຢ່າງ**: **ການປະເມີນຂອງ ສພລ**

| | |
|---|---|
| ຂະບວນການ | ຕົວຢ່າງ: ການສິດສອນ ແລະ ການລົງຝຶກປະຕິບັດຕົວຈິງ, ການມີສ່ວນຮ່ວມຂອງຜູ້ຮຽນ. |
| ຜົນໄດ້ຮັບ | ຕົວຢ່າງ: ຄວາມຮູ້ບຸກຄົນ ແລະ ກຸ່ມ, ທັກສະ, ການໃຫ້ຄຸນຄ່າ, ທັດສະນະຄະຕິ ແລະ ຜົນສຳເລັດ. |
| ສະພາບບັນຫາ | ເຊັ່ນ: ຫຼັກສູດ, ການສອນ ແລະ ແຫຼ່ງການຮຽນຮູ້, ນະໂຍບາຍຂອງສະຖານການສຶກສາ, ປະສິດທິພາບໃນການສອນ, ຄວາມຕັ້ງໃຈ ແລະ ການສະໜັບສະໜູນທາງດ້ານການບໍລິຫານ, ແຫຼ່ງຊັບພະຍາກອນ, ສະພາບແວດລ້ອມການຮຽນຮູ້ ແລະ ການພົວພັນກັບຊຸມຊົນ. |

ການປະເມີນ ສພລ ດ້ານສະຕິປັນຍາ ອາດປະກອບດ້ວຍການປະເມີນການພັດທະນາຄວາມຮູ້ກ່ຽວກັບໂລກ ແລະ ບັນຫາຂອງໂລກ ລວມທັງທັກສະໃນການຄິດວິເຄາະໃນຂອບເຂດດ້ານອາລົມ-ຄວາມຮູ້ສຶກທາງດ້ານສັງຄົມ ອາດຈະປະກອບດ້ວຍການປະເມີນຄວາມເປີດກວ້າງຕໍ່ຜູ້ຄົນທີ່ມາຈາກວັດທະນະທຳທີ່ຫຼາກຫຼາຍ, ຄວາມເຕັມໃຈທີ່ຈະຊ່ວຍເຫຼືອຄົນອື່ນ ຫຼື ຄວາມສາມາດໃນການເອົາໃຈໃສ່ ແລະ ຄວາມຮູ້ສຶກເຫັນອົກເຫັນໃຈ. ດ້ານພຶດຕິກຳປະກອບດ້ວຍການປະເມີນຈາກການສະແດງຄວາມເປັນພົນລະເມືອງໂລກທີ່ຫ້າວຫັນ, ລວມທັງ ຄວາມເປັນຈິດອາສາ, ຈຸດຢືນດ້ານສິດທິມະນຸດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການມີສ່ວນຮ່ວມໃນກິດຈະກຳຂອງພົນລະເມືອງ, ຄວາມຍຸດຕິທຳທາງສັງຄົມ ແລະ ລົບນະລົງດ້ານສິ່ງແວດລ້ອມ.

**ຕາຕະລາງທີ 5 ການຕິດຕາມ ແລະ ປະເມີນຜົນ**

| ລາຍການ | ຍຸດທະສາດທີ່ແນະນຳ | ຄາດຫວັງຜົນໄດ້ຮັບ |
|---|---|---|
| ທົບທວນໂຄງສ້າງຍຸດທະສາດການປະເມີນຜົນທີ່ມີຢູ່ | • ສ້າງມາດຕະຖານ, ເກນ ແລະ ເຄື່ອງມືປະເມີນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ ທີ່ນຳໃຊ້ໃນການປະເມີນການປ່ຽນແປງອື່ນໆທີ່ກ່ຽວຂ້ອງ ສພລ ແລະ ນະໂຍບາຍ. | • ຕົວຊີ້ບອກ, ເຄື່ອງມືການປະເມີນ, ມາດຕະການ ແລະ ຂັ້ນຕອນ ເພື່ອປະເມີນຄວາມຄືບໜ້າຂອງບຸກຄົນ ແລະ ລວມໝູ່.<br>• ເກນການປະເມີນ ແລະ ວິທີການປະເມີນ ລວມທັງການປະເມີນຜົນໄດ້ຮັບ.<br>• ນະໂຍບາຍ ສພລ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຖືກຕິດຕາມ. |
| ສ້າງຂະບວນການເກັບກຳ ແລະ ບັນທຶກຄວາມກ້າວໜ້າ ແລະ ຜົນສຳເລັດຂອງຜູ້ຮຽນທຽບໃສ່ຄວາມຄາດຫວັງຂອງຫຼັກສູດ | • ຮວບຮວມເອົາການປະເມີນ ສພລ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳການຮຽນການສອນທີ່ມີຢູ່, ພິຈາລະນາດ້ານການບໍລິຫານເພີ່ມເຕີມທີ່ກ່ຽວຂ້ອງກັບການປະເມີນຜົນ ສພລ.<br>• ສຸມໃສ່ປັບປຸງການປະເມີນຜົນໄດ້ຮັບຈາກການຮຽນຮູ້ ແລະ  ຫຼັກສູດ ແລະ ວິທີການຮຽນການສອນເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ຮຽນທຸກຄົນ.<br>• ໃຊ້ວິທີການທີ່ເໝາະສົມເພື່ອປະເມີນກິດຈະກຳການຮຽນການສອນ ສພລ. | • ວິທີການປະເມີນຜົນມີຄວາມເໝາະສົມກັບຈຸດປະສົງການຮຽນການສອນໂດຍຄຳນຶງເຖິງຄວາມຕ້ອງການ ແລະ ສິ່ງທ້າທາຍຂອງຜູ້ຮຽນທຸກຄົນ.<br>• ສະຖາບການສຶກສາ ແລະ ນັກການສຶກສາສາມາດລາຍງານໄດ້ຢ່າງຈະແຈ້ງກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ສພລ.<br>• ຄວາມຄືບໜ້າຂອງການປະເມີນໄດ້ຖືກເຜີຍແຜ່ໃຫ້ແກ່ຜູ້ສອນ ແລະ ຜູ້ຮຽນໄດ້ຮັບຮູ້. |
| ທົບທວນຄວາມຄືບໜ້າເພື່ອບັນລຸຈຸດປະສົງຂອງນະໂຍບາຍ | • ສ້າງເກນປະເມີນທີ່ຈະແຈ້ງໃນການປະເມີນຄວາມຄືບໜ້າ ເພື່ອບັນລຸຈຸດປະສົງຂອງນະໂຍບາຍ.<br>• ຊຸກຍູ້ໃຫ້ໂຮງຮຽນ, ສະຖາບັນການສຶກສາ ແລະ ນັກການສຶກສາ ຕິດຕາມຄວາມ | • ເກນການປະເມີນມີຄວາມຊັດເຈນ ເພື່ອວັດຄວາມກ້າວໜ້າຂອງສະຖາບການສຶກສາ ແລະ ນັກການສຶກສາໃຫ້ບັນລຸຈຸດປະສົງຂອງ ສພລ. |

| | | |
|---|---|---|
| | ຄືບໜ້າ ສພລ ໂດຍນຳໃຊ້ເຄື່ອງມື ແລະ ຂອບການປະເມີນຕົນເອງເພື່ອກ້າວໄປສູ່ຄວາມເປັນເລີດ.<br>• ແລກປ່ຽນຫຼັກຖານ ແລະ ເອກະສານປະເມີນການຮຽນການສອນຂອງການປະຕິບັດທີ່ດີ. | • ສະຖານການສຶກສາ, ນັກການສຶກສາ ແລະ ໜ່ວຍງານລັດມີຄວາມຄິດເຫັນ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ບັນຫາທີ່ຕ້ອງໄດ້ຮັບການແກ້ໄຂເພື່ອປັບປຸງ. |
| ເຂົ້າຮ່ວມການປະເມີນຜົນທີ່ໄດ້ຮັບການຍອມຮັບຈາກສາກົນ | • ປັບເກນການປະເມີນ ແລະ ຂະບວນການລາຍງານໃຫ້ສອດຄ່ອງກັບສະມັດຖະພາບ ແລະ ຕົວຊີ້ບອກຂອງການເປັນພົນລະເມືອງໂລກ.<br>• ເຂົ້າຮ່ວມໃນກິດຈະກຳການປະເມີນສາກົນທີ່ກ່ຽວຂ້ອງ ແລະ ເຂົ້າຮ່ວມກັບຂໍ້ລິເລີ່ມໃນລະດັບສາກົນ ແລະ ອື່ນໆ ເພື່ອໃຫ້ທັນສະໄໝດ້ວຍຫຼັກຖານ ແລະ ການປະຕິບັດທີ່ດີ. | • ການລາຍງານຄວາມຄືບໜ້າທີ່ແທດເໝາະກັບລະດັບມາດຕະຖານສາກົນ.<br>• ມີຄວາມມຸ່ງໝັ້ນທີ່ຈະເຂົ້າຮ່ວມ ຫຼື ຮຽນຮູ້ຈາກຂະບວນການສຶກສາ ແລະ ປະເມີນຜົນໃນລະດັບສາກົນ. |

## 3.4 ຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍ

### 3.4.1. ຄວາມແຕກຕ່າງ

ຄວາມແຕກຕ່າງໝາຍເຖິງຄວາມຫຼາກຫຼາຍດ້ານຖິ່ນກຳເນີດ, ເຊື້ອຊາດ, ສາສະໜາ, ພາສາ, ເພດ, ອາຍຸ, ສະພາບຮ່າງກາຍ ຫຼື ສຸຂະພາບ, ສະຖານະຂອງບຸກຄົນ, ຖານະທາງເສດຖະກິດ-ສັງຄົມ, ການສຶກສາ ຫຼື ຄວາມຄິດເຫັນທາງການເມືອງ, ບຸກຄົນໃນສັງຄົມບໍ່ມີຄວາມສະເໝີພາບກັນອາດເຮັດໃຫ້ບຸກຄົນໃນສັງຄົມມີຄວາມຂັດແຍ້ງ, ແບ່ງແຍກກັນ ເພາະທຸກຄົນມີຄວາມແຕກຕ່າງກັນໃນທາງຄວາມຄິດເຫັນ ຫຼື ອື່ນໆໄດ້ ແຕ່ຄວາມແຕກຕ່າງເຫຼົ່ານີ້ບໍ່ເປັນສາເຫດໃຫ້ບຸກຄົນຄຽດຊັງກັນ, ຖົກຖຽງກັນ, ຂັດແຍ້ງກັນ ຫຼື ທຳລາຍບຸກຄົນອື່ນໄດ້ ບຸກຄົນໃນສັງຄົມຕ້ອງມີທັດສະນະຄະຕິທີ່ດີ ມີຄວາມອົດທົນ ແລະ ເຂົ້າໃຈຕໍ່ຄວາມແຕກຕ່າງ ເຊັ່ນ:

- ຄວາມແຕກຕ່າງທາງຮ່າງກາຍບໍ່ແມ່ນອຸປະສັກໃນການຄົ້ນຫາຄວາມຝັນ.
- ຄົນເຮົາຄວນທີ່ຈະບອກຕົວເອງວ່າ: ເຮົາເຮັດຢ່າງໃດທີ່ຈະບໍ່ຕ້ອງຄືຄົນອື່ນ, ດີກວ່າເອົາແຕ່ຖາມຕົວເອງວ່າເປັນຫຍັງເຮົາຈິ່ງແຕກຕ່າງຈາກຄົນອື່ນ.
- ຈິດໃຈທີ່ເຂັ້ມແຂງ ແລະ ຕັ້ງໝັ້ນມີອຳນາດເໜືອຮ່າງກາຍທີ່ອ່ອນແອສະເໝີດັ່ງຄຳກ່າວທີ່ວ່າ "ໃຈເປັນນາຍ ກາຍເປັນບ່າວ".
- ຄົນເຮົາບໍ່ສາມາດທີ່ຈະຊະນະຄົນອື່ນໄດ້ດ້ວຍການດູຖູກຄົນອື່ນທີ່ຕໍ່າຕ້ອຍກວ່າຕົວເອງ.
- ຄົນເຮົາຈະບໍ່ແຕກຕ່າງກັນ ຖ້າຄິດວ່າເຮົາທຸກຄົນນັ້ນຄືກັນ.
- ຄວາມພະຍາຍາມສາມາດເຮັດໃຫ້ຄົນເຮົາໄປເຖິງຝັນໄດ້.

- ຄົນເຮົາສາມາດເຮັດໄດ້ທຸກຢ່າງແມ່ນແຕ່ຮ່າງກາຍຈະບໍ່ພ້ອມຂໍແຕ່ມີຈິດໃຈທີ່ຕັ້ງໝັ້ນໃນສິ່ງທີ່ຈະເຮັດ ແລະ ເຂັ້ມແຂງຕໍ່ສູ້ກັບບັນຫາ.
- ຄົນເຮົາຖ້າຄິດວ່າເຮົາເຮັດບໍ່ໄດ້ເຮົາກໍຈະເຮັດບໍ່ໄດ້ຢູ່ຢ່າງນັ້ນ.
- ຄວາມພິການບໍ່ແມ່ນບັນຫາໃຫຍ່ຂອງຊີວິດ, ຮ່າງກາຍບໍ່ແມ່ນອຸປະສັກ, ໃຈທີ່ເຂັ້ມແຂງສາມາດເອົາຊະນະບັນຫາໄດ້.
- ຄົນເຮົາຖ້າມີຄວາມພະຍາຍາມຄວນເຮັດໄດ້ທຸກສິ່ງ.
- ກຳລັງໃຈກັບຄວາມຫວັງເປັນສິ່ງມີຄ່າທີ່ເຮັດໃຫ້ຄົນເຮົາກ້າວພົ້ນຂີດຈຳກັດຂອງຕົວເອງໄດ້.
- ຄົນເຮົາບໍ່ແຕກຕ່າງກັນຖ້າຄິດວ່າບໍ່ຕ່າງກັນ.
- ຈິດໃຈເອົາຊະນະໄດ້ທຸກສິ່ງໄດ້.

### 3.4.2. ການເຄົາລົບຄວາມຫຼາກຫຼາຍ

ໃນໂລກຂອງພວກເຮົາ ມີຫຼາຍເຊື້ອຊາດ, ສາສະໜາ, ພາສາ, ເຊື້ອຊາດ, ຊົນເຜົ່າ ແລະ ການປົກຄອງທີ່ແຕກຕ່າງກັນ ແລະ ເມື່ອມີຄວາມແຕກຕ່າງ ຈຶ່ງຕ້ອງມີການເຄົາລົບເຊິ່ງກັນ ແລະ ກັນ, ຊຸກຍູ້ການນຳໃຊ້ກະຕິກາເພື່ອແກ້ບັນຫາ, ຢຶດຖືຄວາມຍຸດຕິທຳ, ໃຫ້ຄວາມສຳຄັນກັບຄວາມເປັນທຳ ແລະ ຄວາມເທົ່າທຽມກັນທາງການເມືອງ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ ໃນຖານະທີ່ເປັນມະນຸດທີ່ຢູ່ຮ່ວມກັນໂດຍບໍ່ມີການກີດກັ້ນ.

ຄຸນລັກະນະຂອງພົນລະເມືອງໃນລະບອບປະຊາທິປະໄຕມີ 6 ປະການ ດັ່ງຕໍ່ໄປນີ້:

1) ມີອິດສະຫຼະພາບ ແລະ ເພິ່ງຕົນເອງໄດ້ ບໍ່ຢູ່ພາຍໃຕ້ການຄອບງຳຂອງລະບົບອຸປະຖຳ ທັງທາງດ້ານຄວາມຄິດ, ການກະທຳ, ການຕັດສິນໃຈໃນເລື່ອງໃດໆ ດ້ວຍຕົນເອງ ບົນພື້ນຖານຄວາມຖືກຕ້ອງຕາມລະບຽບ ແລະ ກົດໝາຍ.
2) ເຄົາລົບສິດທິຜູ້ອື່ນ ບໍ່ໃຊ້ສິດທິເສລີພາບຂອງຕົນໄປລະເມີດສິດທິເສລີພາບຂອງບຸກຄົນອື່ນ ບໍ່ວ່າຈະເປັນສິດທິເສລີພາບໃນເຄຫະສະຖານ ສິດທິເສລີພາບໃນການເດີນທາງ ແລະ ການຕິດຕໍ່ສື່ສານ ສິດທິເສລີພາບໃນການນັບຖືສາສະໜາ ສິດທິເສລີພາບທາງວິຊາການ ເປັນຕົ້ນ.
3) ເຄົາລົບຄວາມແຕກຕ່າງ ມີທັກສະໃນການຟັງ ແລະ ຍອມຮັບຄວາມຄິດເຫັນທີ່ແຕກຕ່າງຈາກຕົນເອງ ຕະຫຼອດຈົນການຍອມຮັບໃນປະເພນີ ວັດທະນະທຳທີ່ແຕກຕ່າງ.
4) ເຄົາລົບຫຼັກຄວາມສະເໝີພາບ ເຄົາລົບກຽດສັກສີຄວາມເປັນມະນຸດຂອງຜູ້ອື່ນ ແລະ ມີຄວາມເທົ່າທຽມກັນເບິ່ງຄົນໄປທາງບວກຫຼາຍກວ່າລົບ ບໍ່ວ່າບຸກຄົນເຫຼົ່ານັ້ນມີສີຜິວ, ເຊື້ອຊາດ, ສາສະໜາ, ຖິ່ນກຳເນີດທີ່ຕ່າງກັບຕົນເອງກໍ່ຕາມ.
5) ເຄົາລົບກະຕິກາ, ເຄົາລົບກົດໝາຍ, ໃຊ້ກະຕິກາໃນການແກ້ບັນຫາ, ບໍ່ແມ່ນກຳລັງ ແລະ ຍອມຮັບຜົນຂອງການລະເມີດກົດໝາຍ ຢຶດຖືຄວາມຍຸດຕິທຳ ໃຫ້ຄວາມເປັນທຳກັບທຸກຝ່າຍໃນສັງຄົມ.
6) ຮັບຜິດຊອບຕໍ່ສັງຄົມ ຄິດວ່າຕົນເອງເປັນສ່ວນໜຶ່ງຂອງສັງຄົມ, ມີຄວາມກະຕືລືລົ້ນທີ່ຈະຮັບຜິດຊອບ ແລະ ຮ່ວມແກ້ໄຂບັນຫາສັງຄົມ ໂດຍເລີ່ມຕົ້ນທີ່ຕົນເອງ, ມີຊີວິດຢ່າງມີຄຸນຄ່າຕໍ່ສັງຄົມ.

ດັ່ງນັ້ນ, ການເປັນພົນລະເມືອງໂລກທີ່ດີ ຈຶ່ງຈະຕ້ອງເລີ່ມຈາກການປ່ຽນແປງທັດສະນະຄະຕິ, ຄ່ານິຍົມ, ພຶດຕິກຳຂອງຄົນ ແລະ ຄົນທີ່ເຮົາສາມາດປັບປ່ຽນໄດ້ງ່າຍທີ່ສຸດຄືຕົວເຮົາເອງ ຄົນເຮົາຕ້ອງກ້າຮຽນຮູ້ທີ່ຈະເບິ່ງຕົວເອງ ຮູ້ຈັກວິພາກວິຈານຕົວເຮົາເອງວ່າມີຈຸດແຂງ ຈຸດອ່ອນຢ່າງໃດ ອ່ານໜັງສືທີ່ກ້າວໜ້າ ໂອ້ລົມກັບຄົນທີ່ກ້າວໜ້າ ສຶກສາຈາກປະສົບການຈາກກຸ່ມຄົນທີ່ກ້າວໜ້າ ເພື່ອເຮົາຈະໄດ້ປັບປ່ຽນພຶດຕິກຳໃນສ່ວນນັ້ນຂອງເຮົາຢ່າງເຕັມທີ່ໃຫ້ກ້າວໜ້າຍິ່ງໆຂຶ້ນ.

## 4. ຫຼັກສູດການຮຽນການສອນ ກ່ຽວກັບການສຶກສາພົນລະເມືອງໂລກ

### 4.1 ການກຳນົດຈຸດປະສົງ ແລະ ຫົວຂໍ້ຂອງການຮຽນຮູ້

ເນື່ອງຈາກລະດັບການສຶກສາ ແລະ ຄວາມສາມາດຂອງນັກຮຽນແຕກຕ່າງກັນໃນແຕ່ລະປະເທດ, ກຸ່ມອາຍຸ ແລະ ລະດັບການສຶກສາທີ່ໄດ້ສະເໜີໃນນີ້ ເປັນພຽງແຕ່ຕົວຊີ້ບອກ ແລະ ສາມາດດັດແປງໄດ້ຕາມຜູ້ນຳໃຊ້ ທີ່ເຫັນວ່າ ເໝາະສົມ. ຫົວຂໍ້ ແລະ ຈຸດປະສົງຕ່າງໆຂອງການຮຽນຮູ້ໄດ້ອະທິບາຍລະອຽດ ໃນຕາຕະລາງດັ່ງລຸ່ມນີ້:

| ຫົວຂໍ້ຕ່າງໆ | ຈຸດປະສົງຂອງການຮຽນຮູ້ | | | |
|---|---|---|---|---|
| | ຊັ້ນປະຖົມ | ຊັ້ນມັດທະຍົມສຶກສາຕອນຕົ້ນ | ຊັ້ນມັດທະຍົມສຶກສາຕອນປາຍ | ການສຶກສາຊັ້ນສູງ: ອາຊີວະ, ສ້າງຄູ, ແລະ ມະຫາວິທະຍາໄລ |
| 1. ລະບົບ ແລະ ໂຄງປະກອບໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ | ອະທິບາຍກ່ຽວກັບສະພາບແວດລ້ອມໃນທ້ອງຖິ່ນ ແລະ ການພົວພັນກັບໂລກແນວໃດ, ແນະນຳແນວຄວາມຄິດຂອງການເປັນພົນລະເມືອງ. | ກຳນົດໂຄງປະກອບການຄຸ້ມຄອງ, ຂະບວນການຕັດສິນໃຈ, ສິດ ແລະ ພັນທະຂອງການເປັນພົນລະເມືອງ. | ສົນທະນາການພົວພັນລະຫວ່າງໂຄງປະກອບການຄຸ້ມຄອງຂອງຊາດ ແລະ ທ້ອງຖິ່ນແນວໃດ ແລະ ສຳນຶກຄວາມເປັນພົນລະເມືອງໂລກ. | ວິເຄາະແບບມີເຫດມີຜົນ ກ່ຽວກັບລະບົບ, ໂຄງປະກອບ ແລະ ຂະບວນການການຄຸ້ມຄອງໂລກ ແລະ ກຳນົດ ແລະ ປະເມີນຜົນສະທ້ອນສຳລັບການເປັນພົນລະເມືອງໂລກ |
| 2.ບັນຫາທີ່ມີຜົນກະທົບຕໍ່ການພົວພັນ ແລະ ສາຍພົວພັນລະຫວ່າງຊຸມຊົນໃນລະດັບທ້ອງຖິ່ນ | ຈັດລຳດັບບັນຫາລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ, ແລະ ສຶກສາສາຍພົວພັນບັນຫາເຫຼົ່ານັ້ນ | ສຶກສາສະພາບບັນຫາລວມທີ່ກໍ່ໃຫ້ເກີດຜົນກະທົບຂອງບັນຫາລະດັບຊາດ ແລະ ລະດັບທ້ອງຖິ່ນ. | ກຳນົດສາເຫດພື້ນຖານຂອງບັນຫາຕົ້ນຕໍຂອງທ້ອງຖິ່ນ, ຂອງຊາດ ແລະ ຂອງໂລກ ແລະ ພ້ອມທັງການພົວພັນປັດໃຈ | ກວດກາບັນຫາຕ່າງໆແບບຮອບຄອບ, ມີຄວາມຮັບຜິດຊອບ ແລະ ຜົນໄດ້ຮັບຈາກການຕັດສິນໃຈໃນລະດັບທ້ອງຖິ່ນ, ລະດັບ |

| | | | | |
|---|---|---|---|---|
| ລະດັບຊາດ ແລະ ລະດັບໂລກ | | | ທ້ອງຖິ່ນ ແລະ ປັດໃຈຂອງໂລກ. | ຊາດ ແລະ ລະດັບໂລກ, ສຶກສາ ແລະ ສະເໜີວິທີການແກ້ໄຂທີ່ເໝາະສົມ. |
| 3. ການຄິດແບບວິເຄາະ | ໃສ່ຊື່ແຫຼ່ງຂໍ້ມູນທີ່ແຕກຕ່າງ ແລະ ຮັບທັກສະພື້ນຖານຕ່າງໆໃນການຄົ້ນຄວ້າຂັ້ນພື້ນຖານ. | ໄຈ້ແຍກລະຫວ່າງຄວາມເປັນຈິງ/ຄວາມຄິດເຫັນ, ຄວາມເປັນຈິງ/ຈິນຕະນາການ ແລະ ຄວາມຄິດເຫັນ/ທັດສະນະຕ່າງໆ. | ອະທິບາຍແນວຄິດພື້ນຖານ ແລະ ອະທິບາຍຄວາມບໍ່ສະເໝີພາບ ແລະ ອິດທິພົນທາງອຳນາດ | ກວດກາແບບຮອບຄອບຕໍ່ຜົນກະທົບຈາກອິດທິພົນທາງອຳນາດທີ່ສະແດງອອກ, ການເຂົ້າເຖິງແຫຼ່ງຂໍ້ມູນ, ການຕັດສິນໃຈ ແລະ ການຄຸ້ມຄອງ. |
| 4. ລະດັບຄວາມແຕກຕ່າງດ້ານເອກະລັກຂອງຄວາມເປັນມະນຸດ | ຮັບຮູ້ວ່າພວກເຮົາເຊື່ອມໂຍງ ແລະ ປະຕິບັດຮ່ວມກັບໂລກພາຍນອກ ແລະ ພັດທະນາທັກສະຂອງຕົນເອງ ແລະ ສ່ວນລວມແນວໃດ. | ກວດເບິ່ງລະດັບທີ່ແຕກຕ່າງກັນທາງເອກະລັກຂອງມະນຸດ ແລະ ການມີສ່ວນຮ່ວມເພື່ອບໍລິຫານການພົວພັນກັບຄົນອື່ນ. | ໄຈ້ແຍກລະຫວ່າງເອກະລັກສ່ວນບຸກຄົນ ແລະ ສັງຄົມ ແລະ ກຸ່ມບຸກຄົນຕ່າງໆ ແລະ ປູກຝັງຄວາມຮູ້ສຶກຂອງການເປັນມະນຸດດ້ວຍກັນ. | ກວດກາຢ່າງຮອບຄອບກ່ຽວກັບລະດັບທີ່ແຕກຕ່າງກັນຂອງປະຕິກິລິຍາທີ່ມີເອກະລັກ ແລະ ດຳລົງຊີວິດຢ່າງສັນຕິກັບກຸ່ມສັງຄົມທີ່ແຕກຕ່າງກັນ. |
| 5. ຄວາມແຕກຕ່າງ ແລະ  ສາຍພົວພັນລະຫວ່າງຊຸມຊົນໃນສັງຄົມ | ສະແດງໃຫ້ເຫັນຄວາມແຕກຕ່າງ ແລະ ການເຊື່ອມຕໍ່ກັນລະຫວ່າງກຸ່ມສັງຄົມທີ່ແຕກຕ່າງກັນ. | ຄວາມແຕກຕ່າງ ແລະ ບັນທັດຖານທາງດ້ານສັງຄົມ, ວັດທະນະທຳ ແລະ ກົດໝາຍທີ່ແຕກຕ່າງກັນ. | ສະແດງຄວາມຮູ້ບຸນຄຸນ ແລະ ນັບຖືຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍ, ປູກຝັງຄວາມເຫັນອົກເຫັນໃຈ ແລະ ຄວາມສາມັກຄີຕໍ່ບຸກຄົນ ແລະ ກຸ່ມສັງຄົມອື່ນໆ. | ປະເມີນກ່ຽວກັບສາຍພົວພັນຢ່າງຮອບຄອບລະຫວ່າງກຸ່ມຄົນ, ຊຸມຊົນ ແລະ ປະເທດທີ່ແຕກຕ່າງກັນ. |
| 6. ຄວາມແຕກຕ່າງ ແລະ ການ | ໄຈ້ແຍກລະຫວ່າງຄວາມຄ້າຍຄືກັນ ແລະ ຄວາມແຕກຕ່າງ, ແລະ | ປູກຝັງສາຍພົວພັນທີ່ດີກັບບຸກຄົນ | ສົນທະນາກ່ຽວກັບຜົນປະໂຫຍດ ແລະ ສິ່ງທ້າທາຍທີ່ພົວພັນກັບ | ກຳໄດ້ ແລະ ສະແດງໃຫ້ເຫັນຄຸນຄ່າ, ທັດສະນະຄະຕິ ແລະ |

| | | | | |
|---|---|---|---|---|
| ເຄົາລົບຄວາມຫຼາກຫຼາຍ | ຮັບຮູ້ວ່າທຸກຄົນມີສິດທິ ແລະ ຄວາມຮັບຜິດຊອບຂອງຕົນເອງ. | ແລະ ກຸ່ມທີ່ແຕກຕ່າງກັນ. | ຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍ. | ທັກສະໃນການ ຄຸ້ມຄອງ ແລະ ມີສ່ວນຮ່ວມກັບກຸ່ມ<br>ແລະ ທັດສະນະຄະຕິທີ່ແຕກຕ່າງກັນ. |
| 7. ການລົງມືປະຕິບັດທີ່ສາມາດດຳເນີນການດ້ວຍຕົນເອງ ແລະ ຮ່ວມກັນ | ຄົ້ນຫາວິທີທີ່ເປັນໄປໄດ້ໃນການລົງມືປະຕິບັດ ເພື່ອພັດທະນາໂລກທີ່ພວກເຮົາອາໄສຢູ່. | ສົນທະນາກ່ຽວກັບຄວາມສຳຄັນຂອງກິດຈະກຳສ່ວນບຸກຄົນ ແລະ ກິດຈະກຳຮ່ວມກັນ, ປະກອບເຂົ້າກັນໃນວຽກງານຊຸມຊົນ. | ພິຈາລະນາວ່າບຸກຄົນ ແລະ ກຸ່ມຄົນໄດ້ປະຕິບັດໜ້າທີ່ແນວໃດກ່ຽວກັບບັນຫາຄວາມສຳຄັນໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ ແລະ ໄດ້ຮັບການແກ້ໄຂແນວໃດຕໍ່ບັນຫາຂອງທ້ອງຖິ່ນ, ຂອງຊາດ ແລະ ໂລກ. | ພັດທະນາ ແລະ ນຳໃຊ້ທັກສະໃນການມີສ່ວນຮ່ວມຂອງພົນລະເມືອງຢ່າງມີປະສິດທິພາບ. |
| 8. ພຶດຕິກຳທີ່ມີຄວາມຮັບຜິດຊອບຢ່າງມີຈະລິຍະທຳ | ພັດທະນາ ແລະ ນຳໃຊ້ທັກສະໃນການມີສ່ວນຮ່ວມຂອງພົນລະເມືອງຢ່າງມີປະສິດທິພາບ. | ເຂົ້າໃຈແນວຄວາມຄິດທີ່ຍຸດຕິທຳທາງສັງຄົມ ແລະ ຄວາມຮັບຜິດຊອບດ້ານຈະລິຍະທຳ ແລະ ຮຽນຮູ້ວິທີໃຊ້ມັນໃນຊີວິດປະຈຳວັນ. | ວິເຄາະສິ່ງທ້າທາຍ ແລະ ອຸປະສັກທີ່ກ່ຽວຂ້ອງກັບຄວາມຍຸຕິທຳທາງສັງຄົມ ແລະ ຄວາມຮັບຜິດຊອບດ້ານຈະລິຍະທຳ ແລະ ພິຈາລະນາຜົນກະທົບຕໍ່ການປະຕິບັດສ່ວນບຸກຄົນ ແລະ ສ່ວນລວມ. | ກວດກາບັນຫາຄວາມຍຸດຕິທຳໃນສັງຄົມ, ຄວາມຮັບຜິດຊອບດ້ານຈະລິຍະທຳແບບວິເຄາະ ແລະ ຕ້ານການຈຳແນກ ແລະ ຄວາມບໍ່ສະເໝີພາບ. |
| 9. ການມີສ່ວນຮ່ວມ ແລະ ປະຕິບັດຕົວຈິງ | ຮັບຮູ້ເຖິງຄວາມສຳຄັນ ແລະ ຜົນປະໂຫຍດຂອງການມີສ່ວນຮ່ວມຂອງພົນລະເມືອງ. | ຊອກໂອກາດສຳລັບການມີສ່ວນຮ່ວມ ແລະ ເລີ່ມຕົ້ນການປະຕິບັດຕົວຈິງ. | ພັດທະນາ ແລະ ນຳໃຊ້ທັກສະສຳລັບການມີສ່ວນຮ່ວມ ແລະ ການປະຕິບັດ ເພື່ອສົ່ງເສີມຄວາມດີ. | ສະເໜີກິດຈະກຳ ແລະ ກາຍເປັນຕົວແທນຂອງການປ່ຽນທາງທີ່ດີ. |

### 4.2 ການສອດແຊກເຂົ້າໃນລາຍວິຊາໃນຫຼັກສູດແຫ່ງຊາດຂອງປະເທດຕ່າງໆ

ການຈັດຕັ້ງປະຕິບັດການສຶກສາພົນລະເມືອງໂລກ ບໍ່ໄດ້ມີແຕ່ວິທີການດຽວເທົ່ານັ້ນ, ເຖິງແມ່ນວ່າປະສົບການຜ່ານມາໄດ້ສະແດງໃຫ້ເຫັນວ່າ ການຕັດສິນຕ່າງໆຂອງອຳນາດລັດໃນເລື່ອງນີ້ ປະກອບດ້ວຍປັດໄຈດ້ານສະພາບເງື່ອນໄຂເຊິ່ງມີນະໂຍບາຍ ແລະ ລະບົບການສຶກສາ, ໂຮງຮຽນ ແລະ ຫຼັກສູດ, ມີຄວາມສາມາດຂອງຄູອາຈານ ພ້ອມທັງຄວາມຕ້ອງການ ແລະ ຄວາມຫຼາກຫຼາຍຂອງຜູ້ຮຽນ ແລະ ທຸກສະພາບເງື່ອນໄຂດ້ານວັດທະນະທຳ-ສັງຄົມ, ການເມືອງ ແລະ ເສດຖະກິດ. ບັນຫາຕົ້ນຕໍທີ່ຈະຕ້ອງພິຈາລະນາ ຈະໄດ້ນຳມາສຶກສາໃນພາກນີ້.

***ປັດໄຈທີ່ສົ່ງຜົນເຮັດໃຫ້ສຳເລັດການຈັດຕັ້ງປະຕິບັດການສຶກສາພົນລະເມືອງໂລກ:***

- ເຊື່ອມສານເຂົ້າໃນນະໂຍບາຍ ພ້ອມກັບການຮັບເອົາຫຼາຍພາກສ່ວນທີ່ມີສ່ວນຮ່ວມເຂົ້າມາ.
- ໃນໄລຍະຍາວ ແລະ ຍືນຍົງ.
- ແບບກວມລວມ, ກວມເອົາບັນດາຫົວຂໍ້ຍ່ອຍຕ່າງໆຢ່າງມີລະບົບ.
- ເສີມຄວາມເຂັ້ມແຂງໃນແຕ່ລະສົກຮຽນ ແລະ ສ້າງຄ່ານິຍົມໃນທົ່ວສັງຄົມ.
- ກວມເອົາລະດັບທ້ອງຖິ່ນ, ລະດັບປະເທດ ແລະ ລະດັບໂລກ.
- ສົ່ງເສີມການຝຶກອົບຮົມນັກຮຽນຄູ ແລະ ຄູປະຈຳຢ່າງຕໍ່ເນື່ອງ.
- ພັດທະນາ ແລະ ສົ່ງເສີມການຮ່ວມມືກັບຊຸມຊົນໃນທ້ອງຖິ່ນ.
- ສາມາດຂະຫຍາຍດ້ວຍການບຳລຸງຮັກສາທີ່ມີຄຸນະພາບ.
- ຄຳຄິດເຫັນຈາກຂະບວນການຕິດຕາມ ແລະ ປະເມີນຜົນ.
- ອີງໃສ່ການເຫັນດີເຫັນພ້ອມຂອງການປະສານງານທີ່ຮັບປະກັນການຕິດຕາມໃນໄລຍະຍາວ ພ້ອມດ້ວຍເຄື່ອງມືການຕິດຕາມເປັນແຕ່ລະໄລຍະ.

ວິທີທີ່ໃຊ້ຫຼາຍທີ່ສຸດໃນການຈັດຕັ້ງປະຕິບັດການສຶກສາພົນລະເມືອງໂລກ ໃນລະບົບການສຶກສາໃນໂຮງຮຽນແມ່ນ: ວິທີແບບກວມລວມ, ວິທີສອດແຊກເຂົ້າໃນວິຊາຕ່າງໆ, ຈັດເປັນວິຊາແຍກສະເພາະຢູ່ໃນຫຼັກສູດ. ວິທີການເຫຼົ່ານີ້ສາມາດເສີມ ແລະ ສ້າງຜົນໄດ້ຮັບຫຼາຍ ໃນເວລາທີ່ປັບໃຊ້ໄປພ້ອມໆກັນ. ຜູ້ວາງນະໂຍບາຍ ແລະ ນັກວາງແຜນຕ້ອງຕັດສິນວ່າ ວິທີການໃດທີ່ເໝາະສົມສຳລັບສະພາບເງື່ອນໄຂຂອງຕົນ. ການຕັດສິນໃຈຈະໄດ້ຮັບອິດທິພົນຈາກບາງປັດໄຈ ເຊັ່ນ: ນະໂຍບາຍ ແລະ ລະບົບການສຶກສາ, ລຳດັບບູລິມະສິດໃນຫຼັກສູດ, ຊັບພະຍາກອນທີ່ມີ ຫຼື ປັດໄຈອື່ນໆ.

**ວິທີການທົ່ວໂຮງຮຽນ:** ການສຶກສາພົນລະເມືອງໂລກ ສ້າງໂອກາດໃນການປະຕິຮູບເນື້ອໃນຂອງຫຼັກສູດ, ສະພາບແວດລ້ອມການຮຽນ, ການປະຕິບັດການຮຽນການສອນ ແລະ ການປະເມີນຜົນ. ຕົວຢ່າງຂອງວິທີທົ່ວໂຮງຮຽນ ຫຼື ເອີ້ນວ່າວິທີ 'ປະຕິບັດທົ່ວໂຮງຮຽນ' ປະກອບດ້ວຍ ການນຳເອົາຜົນຂອງການສຶກສາພົນລະເມືອງໂລກສອດແຊກເຂົ້າໃນວິຊາຕ່າງໆໃນທຸກຊັ້ນຮຽນ, ນຳໃຊ້ວິທີການຮຽນແບບມີສ່ວນຮ່ວມໃນວິຊາຕ່າງໆ, ກິດຈະກຳສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງໂລກ, ການປູກຈິດສຳນຶກ, ການສ້າງກຸ່ມກິດຈະກຳ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ການສ້າງສາຍພົວພັນກັບໂຮງຮຽນແຫ່ງຕ່າງໆ.

**ວິທີການແບບກວມລວມ:** ການສຶກສາພົນລະເມືອງໂລກ ຈະສາມາດສົ່ງເສີມການປະສານສົມທົບກັນລະຫວ່າງຄູວິຊາຕ່າງໆ. ໃນບໍລິບົດນີ້, ຫົວຂໍ້ການສຶກສາພົນລະເມືອງໂລກ ສາມາດຈັບສັນເຂົ້າໃນວິຊາຕ່າງໆ. ວິທີແບບກວມລວມ ເບິ່ງຄືວ່າມີ

ບັນຫາ ແລະ ຍາກໃນການຈັດຕັ້ງປະຕິບັດ, ຖ້າບໍ່ມີຄວາມສະໝັກໃຈ ຫຼື ປະສົບການຈາກວິທີການແບບນີ້ມາກ່ອນ. ແຕ່ເຖິງຢ່າງໃດກໍຕາມ ວິທີນີ້ກໍຕອບສະໜອງຄວາມຕ້ອງການທີ່ແທ້ຈິງຂອງນັກຮຽນ, ພ້ອມທັງສົ່ງເສີມການປະສານສົມທົບລະຫວ່າງກຸ່ມອາຈານກໍຄືກຸ່ມນັກຮຽນແຕ່ລະກຸ່ມ.

**ວິທີສອດແຊກເນື້ອໃນເຂົ້າບາງວິຊາ:** ການສຶກສາພົນລະເມືອງໂລກ ສາມາດສອດແຊກເຂົ້າໃນຫຼາຍວິຊາຮຽນ ເຊັ່ນ: ສຶກສາພົນລະເມືອງ, ສຶກສາສັງຄົມ, ສຶກສາສິ່ງແວດລ້ອມ, ພູມສາດ, ປະຫວັດສາດ, ການສຶກສາສາສະໜາ, ວິທະຍາສາດ, ດົນຕີ ແລະ ສິລະປະ. ໂດຍສະເພາະແມ່ນສິລະປະແບບປະຈັກຕາ, ເພງ ແລະ ວັນນະຄະດີເຊິ່ງສາມາດສ້າງຄວາມສາມາດໃນການສະແດງອອກ, ສ້າງຄວາມຮູ້ສຶກທີ່ມີສ່ວນຮ່ວມ ແລະ ຊ່ວຍເພີ່ມຄວາມເຂົ້າໃຈ ແລະ ໃນການສົນທະນາກັບຄົນອື່ນ ທີ່ມີພື້ນຖານວັດທະນະທຳທີ່ແຕກຕ່າງກັນ. ນອກນັ້ນ, ຍັງມີບົດບາດສຳຄັນໃນການຕັ້ງບັນຫາ ແລະ ການວິເຄາະບັນຫາສັງຄົມ ແລະ ບັນຫາອື່ນໆຢ່າງລະອຽດ. ກິລາປະເພດຕ່າງໆ ຍັງເປີດໂອກາດໃຫ້ຜູ້ຮຽນພັດທະນາຄວາມເຂົ້າໃຈບັນຫາ, ການເຮັດວຽກກຸ່ມ, ຄວາມຫຼາກຫຼາຍ, ຄວາມກົມກຽວກັນໃນສັງຄົມ ແລະ ຄວາມເປັນທຳ.

**ວິຊາແຍກ ແລະ ເອກະລາດ**: ເຖິງແມ່ນວ່າຢູ່ບາງປະເທດ ລັກສະນະຂອງການຮຽນກ່ຽວກັບການສຶກສາພົນລະເມືອງໂລກຖືກແຍກສອນຕ່າງຫາກ ວິຊາທີ່ມີລັກສະນະສະເພາະຂອງການສຶກສາພົນລະເມືອງໂລກແມ່ນມີໜ້ອຍ. ຕົວຢ່າງ ຢູ່ສາທາລະນະລັດເກົາຫຼີ ເພິ່ນໄດ້ເອົາວິຊາພາກບັງຄັບທີ່ເອີ້ນວ່າ "ກິດຈະກຳທົດລອງທີ່ສ້າງສັນ" ເຂົ້າໃນຫຼັກສູດປີ 2009 ຊຶ່ງແນໃສ່ເພີ່ມທະວີການປະສານສົມທົບ, ຄວາມຄິດສ້າງສັນ ແລະ ການພັດທະນາທັດສະນະຂອງນັກຮຽນ. ແຕ່ເຖິງຢ່າງໃດກໍຕາມ, ບັນດາກິດຈະກຳທີ່ຈັດຕັ້ງປະຕິບັດ ແມ່ນເພື່ອບັນລຸເປົ້າໝາຍນີ້. ຕົວຢ່າງ: ອົງການຈັດຕັ້ງຊາວໜຸ່ມ, ອາສາສະໝັກຂອງໂຮງຮຽນ, ຊຸມຊົນ, ແລະ ການຮັກສາສິ່ງແວດລ້ອມ ຖືວ່າເປັນກິດຈະກຳທີ່ກ່ຽວຂ້ອງກັບວິທີການປະຕິບັດຮອບດ້ານຂອງໂຮງຮຽນ.

ການສຶກສາພົນລະເມືອງໂລກ ຍັງສາມາດດຳເນີນຜ່ານການສຶກສານອກໂຮງຮຽນ. ຕົວຢ່າງ ຜ່ານໂຄງການລິເລີ່ມຂອງຊາວໜຸ່ມ, ການປະສານສົມທົບກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ການຮ່ວມມືກັບສະຖາບັນການສຶກສາອື່ນໆ ແລະ ຜ່ານອິນເຕີເນັດ. ມີຄວາມເປັນໄປໄດ້ທີ່ຈະຊອກຫາຄູ່ຮ່ວມພັດທະນາລະຫວ່າງໂຮງຮຽນ ແລະ ພາກສ່ວນປະຊາສັງຄົມເຊິ່ງເຮັດວຽກຮ່ວມກັນ ກ່ຽວກັບບັນຫາຂອງໂລກ ແລະ ພາກພື້ນ, ແລະ ເປັນໄປໄດ້ທີ່ຈະຊຸກຍູ້ໃຫ້ພາກສ່ວນເຫຼົ່ານີ້ມີສ່ວນຮ່ວມກິດຈະກຳໃນໂຮງຮຽນ.

# 5. ການຜັນຂະຫຍາຍຫຼັກສູດການຮຽນການສອນ ກ່ຽວກັບສຶກສາພົນລະເມືອງໂລກ

## 5.1 ການຈັດຕັ້ງປະຕິບັດການຮຽນການສອນ

### 5.1.1 ຄວາມຮັບຮູ້ຂອງຄູຕໍ່ການສຶກສາພົນລະເມືອງໂລກ

ຄູສອນຕ້ອງຮູ້ ແລະ ເຂົ້າໃຈປະຫວັດຄວາມເປັນມາ, ຄວາມໝາຍ, ຄວາມສຳຄັນ, ວິໄສທັດ, ເປົ້າໝາຍຂອງການສຶກສາພົນລະເມືອງໂລກ ແລະ ສາມາດສອດແຊກເຂົ້າໃນການຮຽນການສອນ ຢູ່ ສປປ ລາວ ດັ່ງລຸ່ມນີ້:

**1) ຂອບເຂດເນື້ອໃນ**

- ດ້ານຄວາມຮູ້: ຄວາມຮູ້ ແລະ ຄວາມສາມາດໃນການຄົ້ນຄິດທີ່ຈຳເປັນເພື່ອຈະເຂົ້າໃຈກ່ຽວກັບສະພາບການຂອງໂລກ ແລະ ຄວາມສະຫຼັບຊັບຊ້ອນຂອງ ສພລ ໃຫ້ດີຂຶ້ນ.
- ດ້ານສັງຄົມ-ອາລົມ: ຄຸນຄ່າ, ທັດສະນະຄະຕິ ແລະ ທັກສະທາງສັງຄົມ ທີ່ຊ່ວຍໃຫ້ນັກຮຽນພັດທະນາທາງດ້ານອາລົມ, ຈິດຕະວິທະຍາ, ຮ່າງກາຍ ແລະ ເຮັດໃຫ້ພວກເຂົາສາມາດຢູ່ຮ່ວມກັນກັບຄົນອື່ນດ້ວຍ ຄວາມນັບຖື ແລະ ສັນຕິ.
- ດ້ານພຶດຕິກຳ: ການປະພຶດ, ພຶດຕິກຳ, ການປະຕິບັດຕົວຈິງ ແລະ ການມີສ່ວນຮ່ວມ.

**2) ຜົນໄດ້ຮັບ**

ການສຶກສາພົນລະເມືອງໂລກ ມີເປົ້າໝາຍສະໜອງຄວາມຮູ້, ທັກສະຕ່າງໆ, ຄຸນຄ່າ ແລະ ທັດສະນະທີ່ຈຳເປັນເພື່ອປະກອບສ່ວນເຂົ້າໃນການສົ່ງເສີມຄວາມຍຸດຕິທຳ, ສັນຕິພາບ ແລະ ຫຼຸດຜ່ອນການໃຊ້ຄວາມຮຸນແຮງ ໂດຍນຳໃຊ້ຫຼາກຫຼາຍຮູບແບບ ເຊິ່ງຂຶ້ນກັບແນວຄວາມຄິດ ແລະ ວິທີການທີ່ໄດ້ນຳໃຊ້ໃນຂົງເຂດຕ່າງໆ ເຊັ່ນ: ການສຶກສາສິດທິມະນຸດ, ການສຶກສາເພື່ອສັນຕິພາບ, ການສຶກສາເພື່ອການພັດທະນາແບບຍືນຍົງ, ການສຶກສາເພື່ອຄວາມເຂົ້າໃຈລະຫວ່າງຊາດ ແລະ ມີເປົ້າໝາຍເພື່ອສົ່ງເສີມຈຸດປະສົງດຽວກັນ. ການສຶກສາພົນລະເມືອງໂລກຍັງເປັນການນຳໃຊ້ທັດສະນະການຮຽນຮູ້ຕະຫຼອດຊີວິດເລີ່ມຕົ້ນຈາກໄວເດັກນ້ອຍສືບຕໍ່ຜ່ານທຸກລະດັບການສຶກສາ ແລະ ເຂົ້າສູ່ໄວຜູ້ໃຫຍ່ ນັບທັງວິທີການສອນໃນ ແລະ ນອກໂຮງຮຽນ, ການສອດແຊກເຂົ້າໃນກິດຈະກຳການຮຽນການສອນ ແລະ ວິທີການອື່ນໆ.

**3) ຄຸນລັກສະນະ**

ການຈັກການຮຽນການສອນ ສຶກສາພົນລະເມືອງໂລກປະກອບມີສາມຄຸນລັກສະນະ ຄື:

- **ມີຄວາມຮູ້ ແລະ ມີການຄິດແບບວິເຄາະ**
- ລະບົບ ແລະ ໂຄງສ້າງໃນລະດັບທ້ອງຖິ່ນ, ລະດັບປະເທດ ແລະ ລະດັບໂລກ.
- ບັນຫາທີ່ມີຜົນກະທົບຕໍ່ການພົວພັນກັນ ແລະ ການພົວພັນລະຫວ່າງຊຸມຊົນຕ່າງໆ ໃນລະດັບທ້ອງຖິ່ນ, ລະດັບປະເທດ ແລະ ລະດັບໂລກ.
- ແນວຄິດພື້ນຖານ ແລະ ອິດທິພົນທາງອຳນາດ.
- **ມີການຕິດພັນກັບສັງຄົມ ແລະ ມີຄວາມເຄົາລົບຕໍ່ຄວາມຫຼາກຫຼາຍ**
- ເອກະລັກທີ່ແຕກຕ່າງກັນໃນລະດັບຕ່າງໆ.
- ຄວາມແຕກຕ່າງກັນ ແລະ ສາຍພົວພັນລະຫວ່າງຊຸມຊົນຕ່າງໆ.
- ຄວາມແຕກຕ່າງ ແລະ ຄວາມເຄົາລົບນັບຖືຄວາມຫຼາກຫຼາຍ.
- **ມີຄວາມຮັບຜິດຊອບ ແລະ ມີສ່ວນຮ່ວມ**
- ການລົງມືປະຕິບັດຕ່າງໆ ສາມາດປະຕິບັດ ໂດຍບຸກຄົນ ແລະ ລວມໝູ່.
- ພຶດຕິກຳທີ່ສະແດງຄວາມຮັບຜິດຊອບໃນແງ່ຈະລິຍະທຳ.
- ມີສ່ວນຮ່ວມ ແລະ ມີການປະຕິບັດ.

**4) ຈຸດປະສົງ**

ສຳລັບຈຸດປະສົງຂອງການຮຽນຮູ້, ຫົວຂໍ້ທີ່ແທດເໝາະ ແລະ ສອດຄ່ອງກັບກຸ່ມອາຍຸ ຫຼື ລະດັບຂອງການສຶກສາທີ່ແຕກຕ່າງກັນ ຊຶ່ງໄດ້ກຳນົດດັ່ງລຸ່ມນີ້:

- ຫ້ອງກຽມປະຖົມ/ຊັ້ນປະຖົມສຶກສາ.
- ຊັ້ນມັດທະຍົມສຶກສາຕອນຕົ້ນ.
- ຊັ້ນມັດທະຍົມສຶກສາຕອນປາຍ.
- ອາຊີວະ ແລະ ການສຶກສາຊັ້ນສູງ.

**5) ນິຍາມຄຳສັບສຳຄັນ**

ຄູສອນຕ້ອງໄດ້ອະທິບາຍຄຳສັບສະເພາະດ້ານເພື່ອສ້າງແຮງຈູງໃຈ ແລະ ອຳນວຍຄວາມສະດວກໃຫ້ແກ່ການສົນທະນາ ແລະ ກິດຈະກຳຕ່າງໆ ຕົວຢ່າງເອກະສານຊ້ອນທ້າຍ.

### 5.1.2 ການຈັດການຮຽນການສອນການສຶກສາພົນລະເມືອງໂລກໃນລາຍວິຊາ

**ກ. ການຈັດການຮຽນການສອນການສຶກສາພົນລະເມືອງໂລກ**

ການຈັດການຮຽນການສອນການສຶກສາພົນລະເມືອງໂລກ ຕ້ອງເຂົ້າໃຈເນື້ອໃນຢ່າງເລິກເຊິ່ງ, ຄຳນຶງເຖິງຄວາມຮັບຮູ້ ແລະ ຄວາມຕ້ອງການຂອງຜູ້ຮຽນທີ່ແຕກຕ່າງກັນ, ຄູຄວນກຳນົດເນື້ອໃນການສອນໃຫ້ເໝາະສົມ.

- ຂະບວນການຮຽນການສອນການສຶກສາພົນລະເມືອງໂລກໃນສະຖານການສຶກສາ ແລະ ກິດຈະກຳທີ່ແຕກຕ່າງກັນ.
- ຈຸດປະສົງກິດຈະກຳການຮຽນການສອນການສຶກສາພົນລະເມືອງໂລກ ເພື່ອເຮັດໃຫ້ຜູ້ຮຽນຮູ້ສະພາບແວດລ້ອມດ້ານຕ່າງໆ ເຊັ່ນ: ຄອບຄົວ, ຊຸມຊົນ, ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ.
- ເປົ້າໝາຍຂອງການສຶກສາພົນລະເມືອງໂລກ ແມ່ນເຮັດໃຫ້ຜູ້ຮຽນເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການແກ້ໄຂບັນຫາໂລກປະຈຸບັນ ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກໃນຖານະທີ່ເປັນພົນລະເມືອງຂອງໂລກ, ມີສ່ວນຮ່ວມ, ມີຄວາມຮັບຜິດຊອບ ແລະ ມີການຕອບສະໜອງ.
- ຮູບແບບຂອງການຈັດກິດຈະກຳຮຽນການສອນອາດຈະມີຄວາມແຕກຕ່າງກັນທາງດ້ານປະສົບການການຮຽນ ລະຫວ່າງບຸກຄົນຈົນເຖິງການຮຽນເປັນກຸ່ມ ແລະ ຈາກການຮຽນແບບພື້ນຖານຈົນເຖິງການຮຽນທີ່ນຳໃຊ້ເທັກໂນໂລຊີການສື່ສານຕ່າງໆ ຄູຕ້ອງນຳໃຊ້ວິທີການສອນຫຼາກຫຼາຍຮູບແບບທີ່ກຳນົດໄວ້ໃນຂໍ້ທີ **5.1.4** ແລະ ຂໍ້ທີ **5.1.5** ໂດຍຮັບປະກັນການຮຽນຮູ້ໃນດ້ານຕ່າງໆ ແລະ ເນັ້ນໃສ່ວິທີການຈັດຕັ້ງປະຕິບັດພ້ອມທັງການນຳໃຊ້ຂໍ້ມູນທີ່ຫຼາກຫຼາຍ ເຂົ້າໃນຂະບວນການຮຽນການສອນ ຫຼື ຫົວຂໍ້ໃດໃນບົດຮຽນທີ່ເຫັນວ່າມີຄວາມເໝາະສົມ.

**ຂ. ການສອດແຊກການສຶກສາພົນລະເມືອງໂລກ ເຂົ້າໃນລາຍວິຊາ**

ເນື້ອໃນການສຶກສາພົນລະເມືອງໂລກຂອງປະເທດອ້ອມຂ້າງ ໂດຍລວມແລ້ວໄດ້ມີການສອດແຊກເຂົ້າໃນວິຊາຮຽນເຊັ່ນ: ສຶກສາພົນລະເມືອງ, ສຶກສາສັງຄົມ, ສຶກສາສິ່ງແວດລ້ອມ, ພູມສາດ, ປະຫວັດສາດ, ວິທະຍາ

ສາດ, ສາສະໜາ, ດົນຕີ ແລະ ສິລະປະ. ໂດຍສະເພາະແມ່ນສິລະປະແບບປະຈັກຕາ, ເພງ ແລະ ວັນນະຄະດີ ຊຶ່ງສາມາດສ້າງຄວາມສາມາດໃນການສະແດງອອກ, ສ້າງຄວາມຮູ້ທີ່ມີສ່ວນຮ່ວມ ແລະ ຊ່ວຍເພີ່ມຄວາມເຂົ້າໃຈ ແລະ ໃນການສົນທະນາກັບຄົນອື່ນທີ່ມີພື້ນຖານວັດທະນະທຳທີ່ແຕກຕ່າງກັນ. ນອກນັ້ນ, ມັນຍັງມີບົດບາດສຳຄັນໃນການຕັ້ງບັນຫາ ແລະ ການວິເຄາະບັນຫາສັງຄົມ ແລະ ບັນຫາອື່ນໆຢ່າງລະອຽດ. ກິລາປະເພດຕ່າງໆຍັງເປີດໂອກາດໃຫ້ນັກຮຽນພັດທະນາຄວາມເຂົ້າໃຈບັນຫາ, ການເຮັດວຽກກຸ່ມ, ຄວາມຫຼາກຫຼາຍ, ຄວາມກົມກຽວກັນໃນສັງຄົມ ແລະ ຄວາມເປັນທຳ.

### 5.1.3 ການສອດແຊກເຂົ້າໃນການຮຽນການສອນຕາມລາຍວິຊາໃນຫ້ອງຮຽນ

| ຊັ້ນຮຽນ | ປີຮຽນ | ວິຊາ/ສິດສອນ | ເນື້ອໃນ |
|---|---|---|---|
| ຫ້ອງກຽມປະຖົມ | 3 | ການສອນ/ ກິດຈະກຳ | ການປະຕິບັດຕົນເປັນສະມາຊິກທີ່ດີຂອງຄອບຄົວ, ໂຮງຮຽນ, ສັງຄົມ ແລະ ອື່ນໆ. |
| ປະຖົມສຶກສາ | 1-5 | ກົດລະບຽບ, ສິດທິຕ່າງໆ (ເດັກ, ສິດທິມະນຸດ ແລະ ບົດບາດຍິງ-ຊາຍ) | ຄວາມຮັບຜິດຊອບຕໍ່ຕົນເອງ, ຄອບຄົວ, ໂຮງຮຽນ, ຊຸມຊົນ, ປະເທດຊາດ ແລະ ຢູ່ຮ່ວມກັນໂດຍສັນຕິ. |
| ມັດທະຍົມສຶກສາຕອນຕົ້ນ | ມ. 1 | ພູມສາດ, ສຶກສາພົນລະເມືອງ | ການນັບຖືຕົນເອງ ແລະ ຄົນອື່ນ, ມີມະນຸດສຳພັນ, ການດຳລົງຊີວິດຢູ່ຮ່ວມກັນ, ການເຄົາລົບນັບຖືວັດທະນະທຳທີ່ຫຼາກຫຼາຍ ແລະ ພັນທະຂອງພົນລະເມືອງເພື່ອຄວາມສະຫງົບຢູ່ໃນສັງຄົມ-ການດຳລົງຊີວິດຂອງຄົນໃນຂົ້ວໂລກ. |
| | ມ. 2 | ພູມສາດ, ສຶກສາພົນລະເມືອງ | ການຮັກແພງມະນຸດດ້ວຍກັນ, ການເຄົາລົບນັບຖືເຊິ່ງກັນ ແລະ ກັນ, ການດຳລົງຊີວິດຢູ່ຮ່ວມກັນ, ການເຄົາລົບກົດໝາຍ ແລະ ພັນທະພື້ນຖານຂອງພົນລະເມືອງເພື່ອພັດທະນາເສດຖະກິດ, ວັດທະນະທຳ, ສັງຄົມ ຮ່ວມກັບທະວີບເອີຣົບ, ອາຟຣິກາ, ອາເມຣິກາ ແລະ ທະວີບອົດສະຕາລີ. |
| | ມ. 3 | ພູມສາດ, ສຶກສາພົນລະເມືອງ | ການຮັກແພງມະນຸດດ້ວຍກັນ, ການເຄົາລົບນັບຖືເຊິ່ງກັນ ແລະ ກັນ, ການດຳລົງຊີວິດຢູ່ຮ່ວມກັນ, ການເຄົາລົບກົດໝາຍ ແລະ ພັນທະພື້ນຖານຂອງພົນລະເມືອງເພື່ອພັດທະນາເສດຖະກິດ, ວັດທະນະທຳ, ສັງຄົມຮ່ວມກັບບັນດາປະເທດໃນທະວີບອາຊີ. |
| | ມ. 4 | ພູມສາດ, ສຶກສາພົນລະເມືອງ | ການຮັກແພງມະນຸດດ້ວຍກັນ, ການເຄົາລົບນັບຖືເຊິ່ງກັນ ແລະ ກັນ, ການດຳລົງຊີວິດຢູ່ຮ່ວມກັນ, ການເຄົາລົບກົດໝາຍ ແລະ ພັນທະພື້ນຖານຂອງພົນລະເມືອງເພື່ອພັດທະນາເສດຖະກິດ, |

| | | | |
|---|---|---|---|
| | | | ວັດທະນະທຳ, ສັງຄົມ ຮ່ວມກັບຊາວອົບພະຍົບ, ການເຄື່ອນຍ້າຍ ແລະ ການເພີ່ມຂຶ້ນຂອງປະຊາກອນ. |
| ມັດທະຍົມສຶກສາຕອນປາຍ | ມ. 5 | ພູມສາດ, ສຶກສາພົນລະເມືອງ | ໂຄງປະກອບສ້າງຂອງປະຊາກອນ, ການແຈກຢາຍ, ມະນຸດ ແລະ ສິ່ງແວດລ້ອມ, ການແກ້ໄຂບັນຫາໃນສັງຄົມໂລກ (ສິ່ງແວດລ້ອມ, ການເພີ່ມປະຊາກອນ, ພະຍາດ, ວຽກເຮັດງານທຳ...). |
| | ມ. 6 | ພູມສາດ, ສຶກສາພົນລະເມືອງ | ລັກສະນະຂອງປະຊາກອນ, ການເຄື່ອນຍ້າຍ, ການເພີ່ມຂຶ້ນ, ຄວາມແຕກຕ່າງລະຫວ່າງປະເທດທີ່ພັດທະນາ ແລະ ກຳລັງພັດທະນາ, ການແກ້ໄຂບັນຫາດ້ານການເມືອງ, ນະໂຍບາຍ ແລະ ວຽກເຮັດງານທຳ. |
| | ມ. 7 | ພູມສາດ, ສຶກສາພົນລະເມືອງ | ສິດສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ, ສິດສະເໝີພາບລະຫວ່າງບັນດາເຜົ່າ ແລະ ສາສະໜາ, ສິດປະຊາທິປະໄຕຂອງພົນລະເມືອງ… |

### 5.1.4 ການດຳເນີນການຮຽນການສອນ ການສຶກສາພົນລະເມືອງໂລກ

- **ບົດບາດ ແລະ ການສະໜັບສະໜູນຂອງຄູ**

- ຄູຄວນມີທັກສະ ແລະ ເຂົ້າໃຈກ່ຽວກັບວິທີການຈັດການຮຽນການສອນແບບເນັ້ນໃຫ້ມີການປ່ຽນແປງດ້ານພຶດຕິກຳ ພ້ອມທັງມີສ່ວນຮ່ວມຂອງຜູ້ຮຽນຕໍ່ກັບການສຶກສາພົນລະເມືອງໂລກ ແລະ ເປັນຜູ້ຊຸກຍູ້ໃຫ້ຜູ້ຮຽນພັດທະນາຄວາມຮູ້, ທັກສະ, ຄຸນຄ່າ ແລະ ສັງຄົມໃນທາງບວກ.
- ຄູສາມາດສອດແຊກ ແລະ ຖ່າຍທອດເນື້ອໃນສຶກສາພົນລະເມືອງໂລກ ຢ່າງມີປະສິດທິພາບກໍ່ຕໍ່ເມື່ອພວກເຂົາໄດ້ຮັບການສະໜັບສະໜູນ ແລະ ການມີສ່ວນຮ່ວມຂອງຜູ້ອຳນວຍການໂຮງຮຽນ, ຊຸມຊົນ ແລະ ຜູ້ປົກຄອງນັກຮຽນ.

- **ສະພາບແວດລ້ອມຂອງການຮຽນຮູ້**

- ສະພາບແວດລ້ອມການຮຽນຮູ້ທີ່ໃຫ້ຜູ້ຮຽນຮູ້ສຶກເຫັນຄຸນຄ່າຂອງການສ້າງມະນຸດສຳພັນທີ່ດີ, ເປັນກັນເອງ ການນັບຖື, ຮັກວັດທະນະທຳ ແລະ ອື່ນໆ.
- ຄູຈັດສັນສະພາບແວດລ້ອມການຮຽນຮູ້ທີ່ມີປະສິດທິຜົນ ແລະ ສາມາດນຳໃຊ້ວິທີການຮຽນການສອນຕ່າງໆ ເຊັ່ນ: ສະພາບແວດລ້ອມທີ່ກວ້າງຂວາງ, ປອດໄພ, ທົ່ວເຖິງ ແລະ ໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມ.

- ຜູ້ຮຽນສາມາດເຮັດວຽກຮ່ວມກັບຄູເພື່ອສ້າງກົດລະບຽບພື້ນຖານສຳລັບການເຮັດວຽກຮ່ວມກັນ, ສາມາດຈັດວາງຫ້ອງຮຽນ ເພື່ອເຮັດໃຫ້ນັກຮຽນເຮັດວຽກຮ່ວມກັນເປັນກຸ່ມນ້ອຍ ແລະ ສາມາດນຳໃຊ້ເຂົ້າໃນການສະແດງຜົນງານຂອງຕົນ.

- **ວິທີການຈັດການຮຽນການສອນ**

ການສຶກສາພົນລະເມືອງໂລກເປັນການສ້າງໂອກາດໃນການປະຕິຮູບເນື້ອໃນຂອງຫຼັກສູດ, ສະພາບແວດລ້ອມການຮຽນການສອນ ແລະ ການປະເມີນຜົນ ຊຶ່ງຄູສາມາດນຳໃຊ້ຫຼາຍວິທີແຕກຕ່າງກັນ ໂດຍຂຶ້ນກັບຈຸດປະສົງ, ເນື້ອໃນບົດຮຽນຂອງແຕ່ລະວິຊາ ແລະ ສະພາບຈຸດພິເສດຂອງແຕ່ລະໂຮງຮຽນດ້ວຍການສອດແຊກຄວາມຮູ້ເຂົ້າໃນວິຊາຕ່າງໆຂອງທຸກຊັ້ນຮຽນ, ຄູສາມາດໃຊ້ຫຼາຍຮູບແບບປະສົມປະສານກັນ ນຳໃຊ້ວິທີການຮຽນແບບມີສ່ວນຮ່ວມ ເພື່ອໃຫ້ການຮຽນການສອນມີປະສິດທິພາບ ແລະ ໄດ້ຮັບຜົນດີ ເຊັ່ນ: ກິດຈະກຳສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງໂລກ, ການປູກຈິດສຳນຶກ, ການມີສ່ວນຮ່ວມຂອງຊຸມຊົນ, ແບບລະດົມສະໝອງ, ຖາມ-ຕອບ, ຫຼິ້ນເກມ, ສົນທະນາເປັນກຸ່ມ, ຝຶກປະຕິບັດຕົວຈິງ, ສະແດງບົດບາດສົມມຸດ, ການໄປທັດສະນະສຶກສາ ແລະ ອື່ນໆ.

### 5.1.5 ການສອດແຊກການສຶກສາພົນລະເມືອງໂລກທີ່ຄຳນຶງເຖິງບົດບາດຍິງ-ຊາຍ

ການສຶກສາພົນລະເມືອງໂລກມີບົດບາດສຳຄັນໃນການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ເປັນໜຶ່ງໃນສອງບູລິມະສິດທີ່ສຳຄັນຂອງອົງການອຸຍແນສໂກ. ການສຶກສາພົນລະເມືອງໂລກນອນຢູ່ໃນສິດທິມະນຸດ ຊຶ່ງຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນສ່ວນໜຶ່ງທີ່ເປັນພື້ນຖານ, ເດັກຍິງ ແລະ ເດັກຊາຍໄດ້ຮຽນຮູ້ ກ່ຽວກັບທັດສະນະຄະຕິ, ພາລະບົດບາດ, ຄວາມຄາດຫວັງ ແລະ ພຶດຕິກຳໄປຕາມເພດ, ຢູ່ໂຮງຮຽນກໍເຊັ່ນດຽວກັນກັບຢູ່ເຮືອນ. ການສຶກສາພົນລະເມືອງໂລກ ສາມາດປົກປ້ອງຄວາມສະເໝີພາບຍິງ-ຊາຍ ໂດຍຜ່ານການພັດທະນາຄວາມຮູ້, ທັກສະ, ຄຸນຄ່າ ແລະ ທັດສະນະຄະຕິຕ່າງໆທີ່ຍົກສູງຄຸນຄ່າຂອງຜູ້ຍິງ ແລະ ຜູ້ຊາຍໃຫ້ເທົ່າທຽມກັນດ້ານພາລະບົດບາດ ແລະ ຄວາມຄາດຫວັງ ເພື່ອຫຼຸດຜ່ອນຄວາມຮຸນແຮງທາງເພດ ຊຶ່ງເປັນໄພອັນຕະລາຍຕໍ່ຄວາມສະຫງົບສຸກຂອງສັງຄົມ ແລະ ປະເທດຊາດ.

## 5.2 ການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ

### 5.2.1 ການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ

ໂຮງຮຽນໃນໂລກຫຼາຍແຫ່ງກຳລັງນຳໃຊ້ວິທີການປະຕິບັດກິດຈະກຳຮອບດ້ານຕໍ່ການປະຕິບັດກິດຈະກຳການສຶກສາພົນລະເມືອງໂລກ. ໃນວິທີການປະຕິບັດ, ນັກຮຽນທຸກຄົນທີ່ກຳລັງຮຽນຮູ້ ຫຼື ໄດ້ຮຽນຮູ້ຈາກການສອດແຊກເນື້ອໃນຂອງການສຶກສາພົນລະເມືອງໂລກ ເຂົ້າໃນການຮຽນການສອນ ເພື່ອສົ່ງເສີມການຈັດຕັ້ງປະຕິບັດກິດຈະກຳ ແລະ ເສີມສ້າງຄຸນຄ່າໃນການປະຕິບັດກິດຈະກຳຂອງໂຮງຮຽນ. ໃນຄວາມໝາຍອື່ນ, ນັກຮຽນທຸກຄົນ ແລະ ສະມາຊິກໂຮງຮຽນ ດຳລົງຊີວິດຢູ່ກັບສິ່ງທີ່ຮຽນຮູ້ ແລະ ຮຽນຮູ້ສິ່ງທີ່ເຂົາເຈົ້າດຳລົງຊີວິດ.

ວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ໝາຍເຖິງໂຮງຮຽນ ຫຼື ສະຖາບັນການສຶກສາໄດ້ລວມເອົາວິທີການປະຕິບັດການເປັນພົນລະເມືອງໂລກເຂົ້າໃນທຸກຮູບການຂອງໂຮງຮຽນ ຊຶ່ງປະກອບມີການຄຸ້ມຄອງໂຮງຮຽນ, ເນື້ອໃນການຮຽນການສອນ, ການຄຸ້ມຄອງໂຮງຮຽນ ແລະ ການຮ່ວມມືກັບຄູ່ຮ່ວມ

ງານ ແລະ ຊຸມຊົນພາຍນອກຢ່າງກວ້າງຂວາງ. ການມີສ່ວນຮ່ວມຢ່າງຫ້າວຫັນຂອງທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ນອກໂຮງຮຽນ ຊຶ່ງປະກອບມີຜູ້ຮຽນ, ຄູ, ຜູ້ອຳນວຍການ, ພະນັກງານໃນໂຮງຮຽນທຸກລະດັບ ແລະ ຊຸມຊົນໂຮງຮຽນທີ່ກວ້າງຂວາງເຊັ່ນ: ສະມາຊິກຄອບຄົວ ແລະ ຊຸມຊົນໃນການປະຕິບັດການເປັນພົນລະເມືອງໂລກ ເພື່ອຜົນສຳເລັດໃນການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ.

ການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ເຮັດໃຫ້ໂຮງຮຽນ ແລະ ຊຸມຊົນອ້ອມຂ້າງໄດ້ຮັບຜົນປະໂຫຍດດັ່ງນີ້:

- ຜູ້ຮຽນ ແລະ ພະນັກງານມີຄວາມຮູ້ສຶກເປັນເຈົ້າຂອງໃນໂຮງຮຽນຫຼາຍຂຶ້ນ.
- ຜູ້ຮຽນຮູ້ຄວາມໝາຍໃນການປະຕິບັດກິດຈະກຳ ແລະ ເຜີຍແຜ່ໃຫ້ຜູ້ອື່ນໆໃນການຮຽນຮູ້.
- ຄູມີໂອກາດໃໝ່ໃນການຮຽນຮູ້ແບບມືອາຊີບ.
- ໂຮງຮຽນປະສົບຜົນສຳເລັດໃນການຫຼຸດຜ່ອນຜົນກະທົບຈາກບັນຫາຂອງສັງຄົມຫຼາຍຂຶ້ນ.
- ໂຮງຮຽນມີສະພາບແວດລ້ອມໃນການຮຽນຮູ້ຮ່ວມກັນ ແລະ ຢູ່ຮ່ວມກັນໂດຍສັນຕິ.
- ໂຮງຮຽນໄດ້ຮັບການເຂົ້າເຖິງແຫຼ່ງຊັບພະຍາກອນ, ຜູ້ຊ່ຽວຊານ ແລະ ການຊ່ວຍເຫຼືອດ້ານການເງິນ.

### 5.2.2 ຂອບເຂດການຈັດຕັ້ງປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ

#### 5.2.2.1 ການຄຸ້ມຄອງໂຮງຮຽນ

ທຸກຄົນໃນໂຮງຮຽນ ມີບົດບາດ ແລະ ໜ້າທີ່ໃນການດຳເນີນງານ ເພື່ອບັນລຸເປົ້າໝາຍຂອງວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ. ເຖິງຢ່າງໃດກໍຕາມ, ການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບ ແມ່ນສິ່ງສຳຄັນ ເພື່ອເຮັດໃຫ້ວຽກງານມີປະສິທິພາບ.

ການຕັ້ງທີມງານການປະຕິບັດຕໍ່ກິດຈະກຳການສຶກສາ ພົນລະເມືອງໂລກ ກໍເປັນສິ່ງທີ່ຕ້ອງເຮັດເຊັ່ນກັນ. ບົດບາດຂອງທີມງານ ແມ່ນເພື່ອປະສານງານການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການທົບທວນຄືນແຜນປະຕິບັດວຽກງານຕໍ່ການເປັນພົນລະເມືອງໂລກຂອງໂຮງຮຽນ ເພື່ອປຶກສາຫາລືກັບຜູ້ມີສ່ວນຮ່ວມຂອງໂຮງຮຽນ. ໃນນີ້ໄຂສົກຮຽນ ຄວນມີກອງປະຊຸມປຶກສາຫາລື ວາງແຜນຈັດກິດຈະກຳທີ່ເປັນບູລິມະສິດໃນການປະຕິບັດຕະຫຼອດສົກຮຽນ ເພື່ອຕິດຕາມຄວາມຄືບໜ້າ ແລະ ເພື່ອພັດທະນາແຜນການທີ່ວາງໄວ້ຕາມຄວາມຈຳເປັນ.

ທ່ານສາມາດສ້າງທີມງານການປະຕິບັດກິດຈະກຳຂອງການສຶກສາພົນລະເມືອງໂລກທີ່ໄດ້ຮັບການສະໜັບສະໜູນຈາກຜູ້ອຳນວຍການ ແລະ ຄູ. ທີມງານ ຄວນປະກອບດ້ວຍກຸ່ມຄົນທັງພາຍໃນ ແລະ ນອກໂຮງຮຽນທີ່ແຕກຕ່າງກັນ ຊຶ່ງອາດຈະເປັນຫຸ້ນສ່ວນໃນການລິເລີ່ມການປະຕິບັດການເປັນພົນລະເມືອງໂລກຂອງໂຮງຮຽນ. ນີ້ເປັນສິ່ງສຳຄັນໃນການເຂົ້າເຖິງທັກສະ, ຄວາມຮູ້ ແລະ ທັດສະນະທີ່ແຕກຕ່າງກັນໃນທີມງານ. ເມື່ອເວລາສ້າງຕັ້ງທີມງານ, ຄວນພິຈາລະນາ ສິ່ງດັ່ງຕໍ່ໄປນີ້:

- ເອົາຕົວແທນນັກຮຽນ ທີ່ມີປະຫວັດຄວາມເປັນມາທີ່ຫຼາກຫຼາຍ ແລະ ມາຈາກກຸ່ມອາຍຸ/ຊັ້ນຮຽນທີ່ແຕກຕ່າງກັນ. ອະທິບາຍຂອບເຂດທີ່ນັກຮຽນສາມາດເຮັດໄດ້, ຂໍ້ຈຳກັດ ແລະ ການໃຫ້ອຳນາດໃນການຕັດສິນບັນຫາ. ສິ່ງນີ້ຈະຊ່ວຍຫຼີກລ່ຽງ ຄວາມເຂົ້າໃຈຜິດຂອງນັກຮຽນຕໍ່ຄວາມຄິດເຫັນຂອງເຂົາເຈົ້າ ທີ່ບໍ່ໄດ້ຮັບຈັດເຂົ້າໃນພາກປະຕິບັດ.

- ຊອກຫາຕົວແທນຈາກທຸກພາກສ່ວນໃນໂຮງຮຽນ: ຜູ້ອໍານວຍການ, ຄູ, ຜູ້ຮັກສາຄວາມປອດໄພ, ພະນັກງານບໍລິຫານ, ພະນັກງານຊ່ວຍວຽກ ແລະ ຄອບຄົວ.
- ເຊີນບຸກຄົນ ແລະ ອົງການຕ່າງໆ ໃນຊຸມຊົນທ້ອງຖິ່ນຂອງທ່ານ ຊຶ່ງອາດຈະໄດ້ຮັບຜົນຈາກໂຄງການຂອງໂຮງຮຽນ ແລະ ອາດຈະໃຫ້ຄໍາແນະນໍາດ້ານວິຊາການທີ່ຊໍານິຊໍານານ ແລະ ໃຫ້ການສະໜັບສະໜູນອື່ນໆ ໃນການລິເລີ່ມໃນອະນາຄົດ. ສິ່ງເຫຼົ່ານີ້ ອາດລວມເອົາຫ້ອງການທີ່ກ່ຽວກັບພົນລະເມືອງ, ໂຮງຮຽນໃກ້ຄຽງ, ຫົວໜ່ວຍທຸລະກິດ ແລະ ຜູ້ແທນຈາກອໍານາດການປົກຄອງທ້ອງຖິ່ນ.
- ຮັບປະກັນການເຂົ້າຮ່ວມ ແລະ ການເປັນຜູ້ນໍາຂອງທຸກຄົນຢ່າງເທົ່າທຽມກັນ.
- ຖ້າເປັນໄປໄດ້, ສະມາຊິກຂອງທີມງານປະຕິບັດກິດຈະກໍາການສຶກສາພົນລະເມືອງໂລກ ຄວນໄດ້ຮັບການເລືອກຕັ້ງ ເພາະວ່າພວກເຂົາສາມາດເວົ້າ ແລະ ດໍາເນີນການໃນນາມເປັນຕົວແທນຂອງກຸ່ມໃນການປຶກສາຫາລື ແລະ ການປຸກລະດົມ.

### 5.2.2.2 ການຮຽນການສອນ

ເມື່ອກ່າວເຖິງເລື່ອງການສຶກສາພົນລະເມືອງໂລກ, ມັນເປັນເລື່ອງທີ່ສະຫຼັບສັບຊ້ອນ. ບັນຫາສິ່ງແວດລ້ອມ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ຈັນຍາບັນ, ການເມືອງ, ວິທະຍາສາດ, ເຕັກໂນໂລຊີ ທັງໝົດນີ້ ເຂົ້າມາມີບົດບາດຫຼາຍຂຶ້ນ. ດ້ວຍເຫດຜົນນີ້, ໂຮງຮຽນ ຄວນເອົາການປະຕິບັດຕໍ່ການເປັນພົນລະເມືອງທີ່ດີ ເຂົ້າໃນທຸກວິຊາຮຽນ, ບໍ່ແມ່ນພຽງແຕ່ວິຊາວິທະຍາສາດ ແລະ ວິຊາສັງຄົມເທົ່ານັ້ນ.

ທ່ານບໍ່ຈໍາເປັນຕ້ອງມີວິຊາພິເສດ ເພື່ອສອນກ່ຽວກັບການສຶກສາພົນລະເມືອງໂລກໃນໂຮງຮຽນ, ເຖິງແມ່ນວ່າວິຊາເຫຼົ່ານັ້ນຈະເໝາະສົມທີ່ສຸດກໍຕາມ ທ່ານສາມາດສອດແຊກເອົາເນື້ອໃນການສຶກສາພົນລະເມືອງໂລກເຂົ້າໃນວິຊາຮຽນອື່ນໆໄດ້. ຕົວຢ່າງ, ທ່ານສາມາດ:

- ໃຫ້ນັກຮຽນຮຽນຮ່ວມກັນລະຫວ່າງຊົນຊາດ, ຊົນເຜົ່າ ແລະ ວັດທະນະທໍາທີ່ແຕກຕ່າງກັນໃນວິຊາວິທະຍາສາດ.
- ສ້າງແຜ່ນໂຄສະນາ (ໂປສເຕີ) ກ່ຽວກັບຜົນກະທົບຂອງການປ່ຽນແປງຂອງສະພາບດິນຟ້າອາກາດໃນວິຊາສິລະປະ.
- ຝຶກທັກສະການສື່ສານ ທີ່ພວກເຂົາຕ້ອງກ້າເວົ້າອອກມາກ່ຽວກັບບັນຫາຕ່າງໆທີ່ມີຜົນກະທົບຕໍ່ການດໍາລົງຊີວິດໃນວິຊາພາສາຕ່າງປະເທດ.
- ໃຫ້ນັກຮຽນສ້າງແຜນແນວຄວາມຄິດທີ່ສະແດງໃຫ້ເຫັນການເຊື່ອມໂຍງລະຫວ່າງ ພົນລະເມືອງ ແລະ ບັນຫາທາງສັງຄົມ, ສິ່ງແວດລ້ອມ ແລະ ເສດຖະກິດ.
- ໃຫ້ນັກຮຽນຂຽນບົດບັນທຶກກ່ຽວກັບຄວາມຮູ້ສຶກຂອງການເປັນສ່ວນໜຶ່ງໃນກິດຈະກໍາຂອງການສຶກສາພົນລະເມືອງໂລກ.

**ສິ່ງທີ່ຄວນພິຈາລະນາ**

1) ການຮຽນຮູ້ກ່ຽວກັບການປະຕິບັດສອນໃຫ້ຜູ້ຮຽນມີຄວາມຮູ້ ແລະ ທັກສະຕ່າງໆທີ່ພວກເຂົາຈໍາເປັນຕ້ອງມີ ເພື່ອຈະປະສົບຜົນສໍາເລັດ. ຕົວຢ່າງ: ໃຫ້ນັກຮຽນສຶກສາເຖິງຄວາມພະຍາຍາມໃນ

ອະດີດ ເພື່ອສ້າງການປ່ຽນແປງໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບໂລກ. ໃຫ້ນັກຮຽນຝຶກທັກສະຕ່າງໆທີ່ຈຳເປັນ ເພື່ອລົງມືປະຕິບັດ ເຊັ່ນ: ການສ້າງຄວາມເປັນເອກະສັນ, ການຟັງຢ່າງກະຕືລືລົ້ນ, ການໃຫ້ສະໜັບສະໜູນ, ການເຫັນອົກເຫັນໃຈກັນ...

2) ການຮຽນຮູ້ຜ່ານການປະຕິບັດໃຫ້ນັກຮຽນຄັດເລືອກ, ວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳການສຶກສາພົນລະເມືອງໂລກໃນໂຮງຮຽນ. ນັກຮຽນດຳເນີນກິດຈະກຳໄດ້ໃນລະຫວ່າງການຮຽນຢູ່ໃນຫ້ອງຮຽນ ຫຼື ໃນລະຫວ່າງກິດຈະກຳນອກຫຼັກສູດ. ອີກວິທີໜຶ່ງ, ເປົ້າໝາຍ ແມ່ນເພື່ອໃຫ້ສິດອຳນາດແກ່ນັກຮຽນ ໃນການນຳໃຊ້ການຮຽນຮູ້ຂອງພວກເຂົາ ເປັນພື້ນຖານເພື່ອເຮັດໃຫ້ເກີດການປ່ຽນແປງການດຳລົງຊີວິດ, ໂຮງຮຽນ ແລະ ຊຸມຊົນ. ດັ່ງນັ້ນ, ມັນບໍ່ສຳຄັນປານໃດວ່າເປົ້າໝາຍນັ້ນຈະບັນລຸ ຫຼື ບໍ່, ສິ່ງທີ່ສຳຄັນກວ່ານັ້ນ ກິດຈະກຳຕ້ອງມາຈາກແນວຄວາມຄິດຂອງນັກຮຽນ ແລະ ກິດຈະກຳເຫຼົ່ານີ້ຊ່ວຍໃຫ້ນັກຮຽນໄດ້ພັດທະນາທັກສະ ແລະ ແກ້ໄຂບັນຫາໃນການປະຕິບັດ.

3) ການຮຽນຮູ້ຈາກການປະຕິບັດໃຫ້ນັກຮຽນຖອດຖອນບົດຮຽນກ່ຽວກັບສິ່ງທີ່ເຂົາເຈົ້າໄດ້ບັນລຸ, ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ແລະ ສິ່ງທີ່ຈະເຮັດໃນຄັ້ງຕໍ່ໄປ.

**ສິ່ງທີ່ຄວນເອົາໃຈໃສ່**:

ບາງທັດສະນະຄະຕິທີ່ນັກຮຽນຄວນມີ ເມື່ອປະຕິບັດກິດຈະກຳການສຶກສາ ພົນລະເມືອງໂລກ:

- ວິໄສທັດຂອງທ້ອງຖິ່ນ ແລະ ຂອງໂລກ.
- ວິໄສທັດດ້ານບົດບາດຍິງ-ຊາຍ.
- ວິໄສທັດໃນອະດີດ, ປັດຈຸບັນ ແລະ ອະນາຄົດ.
- ວິໄສທັດດ້ານຄວາມຮູ້ສຶກ, ດ້ານຄຸນຄ່າ ແລະ ດ້ານຄວາມຈິງ.
- ວິໄສທັດດ້ານມະນຸດ ແລະ ບໍ່ແມ່ນມະນຸດ.
- ວິໄສທັດຂອງບຸກຄົນ, ກຸ່ມ ແລະ ປະເທດທີ່ມີອຳນາດ ແລະ ບໍ່ມີອຳນາດ.

#### 5.2.2.3 ໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກ

ໂຮງຮຽນເປັນສະຖານທີ່ເອື້ອອຳນວຍໃນການປະຕິບັດກິດຈະກຳຂອງນັກຮຽນ ແລະ ເປັນບ່ອນທີ່ນັກຮຽນເຮັດກິດຈະກຳການສຶກສາພົນລະເມືອງໂລກໄດ້ຫຼາຍທີ່ສຸດ. ວິທີການທີ່ເຮັດໃຫ້ໂຮງຮຽນ ແລະ ສະພາບແວດລ້ອມທີ່ດີຂອງໂຮງຮຽນ ແມ່ນຜ່ານການປະຕິບັດກິດຈະກຳການເປັນພົນລະເມືອງໂລກ ເພື່ອຫຼຸດຜ່ອນການໃຊ້ຄວາມຮຸນແຮງ ແລະ ການຈຳແນກ ຫຼື ເລືອກປະຕິບັດ ເຊັ່ນ: ການຮຽນຮ່ວມ, ການແລກປ່ຽນວັດທະນະທຳຂອງທ້ອງຖິ່ນ, ການເຄົາລົບນັບຖືເຊິ່ງກັນ ແລະ ກັນ, ການຊ່ວຍເຫຼືອກັນ ແລະ ອື່ນໆ. ການສ້າງສະພາບແວດລ້ອມສຳລັບການຮຽນມີຄວາມສຳຄັນ ແລະ ໂຮງຮຽນຂອງທ່ານສາມາດພັດທະນາເປັນໂຮງຮຽນຕົວແບບດ້ານຄວາມສາມັກຄີ, ເຄົາລົບນັບຖືວັດທະນະທຳທີ່ຫຼາກຫຼາຍ ແລະ ດຳລົງຊີວິດຢູ່ຮ່ວມກັນໂດຍສັນຕິ.

#### 5.2.2.4 ການມີສ່ວນຮ່ວມຂອງຊຸມຊົນ

ໂຮງຮຽນຫຼາຍແຫ່ງ ສາມາດຊ່ວຍຫຼຸດຜ່ອນການໃຊ້ຄວາມຮຸນແຮງໃນສັງຄົມໄດ້. ໂຮງຮຽນຫຼາຍແຫ່ງກໍບໍ່ສາມາດດຳເນີນການໄດ້ໂດຍພຽງລຳພັງ ແລະ ໄດ້ຮຽກຮ້ອງການຮ່ວມມືຈາກພາຍນອກ. ນີ້ແມ່ນສາເຫດທີ່ໂຮງຮຽນຂອງທ່ານ ຄວນພິຈາລະນາພັດທະນາການຮ່ວມມືຢ່າງໃກ້ຊິດກັບຊຸມຊົນ.

ການເຊື່ອມໂຍງກັບຊຸມຊົນ ຍັງສາມາດພັດທະນາການຮຽນຮູ້ຂອງນັກຮຽນໄດ້. ປະສົບການການຮຽນຮູ້ນອກຫ້ອງຮຽນຈະຊ່ວຍໃຫ້ນັກຮຽນກາຍເປັນຄົນທີ່ຕິດພັນກັບຊຸມຊົນ. ການຮ່ວມມືກັບຊຸມຊົນຈະຊ່ວຍໃຫ້ທ່ານສາມາດກຳນົດທາງເລືອກໃນການຮຽນຈາກຮູ້ທ້ອງຖິ່ນທີ່ເໝາະສົມກັບຫ້ອງຮຽນຂອງທ່ານ ເຊັ່ນ:

- ໃຊ້ພື້ນທີ່ຂອງໂຮງຮຽນເປັນຫ້ອງທົດລອງ ເພື່ອການຮຽນຮູ້ ເປີດໂອກາດໃຫ້ນັກຮຽນໄດ້ເຫັນ, ສ້າງສັນ ແລະ ມ່ວນຊື່ນກັບລະບົບທີ່ເຮັດໃຫ້ໂຮງຮຽນມີຄວາມສັນຕິ, ຕົວຢ່າງ: ນັກຮຽນ ອາດສັງເກດການຮຽນຮູ້ຮ່ວມກັນຂອງບັນດາຊົນເຜົ່າ, ກຸ່ມເພດ ແລະ ພາສາທີ່ແຕກຕ່າງກັນ.
- ໃຊ້ການຮຽນຮູ້ນອກຫ້ອງຮຽນ ນຳພານັກຮຽນລົງພື້ນທີ່ໃກ້ຄຽງ. ນັກຮຽນ ສາມາດວັດແທກຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ສຳພາດສະມາຊິກຂອງຊຸມຊົນ ກ່ຽວກັບສິ່ງທີ່ພວກເຂົາມັກ ແລະ ບໍ່ມັກ ໃນພື້ນທີ່ ຫຼື ທົດສອບ ແລະ ຮຽນຮູ້ກ່ຽວກັບຊຸມຊົນອ້ອມຂ້າງໂຮງຮຽນ.
- ຈັດທັດສະນະສຶກສາທ້ອງຖິ່ນ ນຳພານັກຮຽນໄປຮຽນຮູ້ ກ່ຽວກັບວັດທະນະທຳຂອງຊົນເຜົ່າ ແລະ ວິຖີການດຳລົງຊີວິດ ເຊັ່ນ: ຮີດຄອງຂອງຊົນເຜົ່າ, ການເຮັດໄຮ່, ນາ, ສວນ ແລະ ອື່ນໆ. ການຢ້ຽມຢາມສະຖານທີ່ເຫຼົ່ານີ້ ຊ່ວຍໃຫ້ນັກຮຽນຕິດພັນກັບບົດຮຽນໃນຊີວິດຈິງ ເພື່ອໃຫ້ນັກຮຽນໄດ້ຮຽນຮູ້ ເພື່ອຢູ່ຮ່ວມກັນໂດຍສັນຕິ.
- ໃຫ້ນັກຮຽນໄດ້ຮຽນຮູ້ຜ່ານປະສົບການ ນັກຮຽນສາມາດຫາປະສົບການຜ່ານການເຮັດວຽກແຕ່ລະມື້ກັບໜ່ວຍທຸລະກິດທ້ອງຖິ່ນ ແລະ ອົງການຕ່າງໆ ໂດຍການເປັນສ່ວນໜຶ່ງໃນການສຶກສາແບບມີສ່ວນຮ່ວມ ແລະ ໂຄງການການຮຽນຮູ້ຜ່ານການບໍລິການຊຸມຊົນ.
- ລົງມືປະຕິບັດ ໃຫ້ນັກຮຽນອອກແບບ ແລະ ລົງມືປະຕິບັດກິດຈະກຳໃດໜຶ່ງບົນພື້ນຖານຄວາມຕ້ອງການໃນຊີວິດຕົວຈິງ. ຄອບຄົວ ແລະ ສະມາຊິກຂອງຊຸມຊົນ ສາມາດເປັນພັນທະມິດໃນການແບ່ງປັນຄວາມຮູ້, ທັກສະ, ເວລາ ແລະ ຊັບພະຍາກອນຕ່າງໆ.

**ຈົ່ງພິຈາລະນາສິ່ງນີ້**:

ຊຸມຊົນຕ່າງໆ ສາມາດຮ່ວມມືກັບໂຮງຮຽນ ເຊັ່ນ:

- ຄອບຄົວ.
- ໂຮງຮຽນແຫ່ງອື່ນໆ.
- ອົງການຈັດຕັ້ງຂອງລັດ, ສະມາຄົມ, ຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ແລະ ອື່ນໆ.
- ສື່ຕ່າງໆ (ໜັງສືພິມທ້ອງຖິ່ນ, ສະຖານີວິທະຍຸ, ສື່ສັງຄົມ ແລະ ອື່ນໆ).
- ປັນຍາຊົນ ແລະ ນັກຄົ້ນຄວ້າ.
- ກຸ່ມອະນຸລັກສິ່ງແວດລ້ອມທ້ອງຖິ່ນ.
- ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ.

### 5.2.3 ຂັ້ນຕອນການຈັດຕັ້ງປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ

ໂຮງຮຽນຂອງທ່ານ ອາດຈະໄດ້ເຮັດກິດຈະກຳການສຶກສາພົນລະເມືອງໂລກມາແລ້ວ, ນັກຮຽນອາດຈະຮຽນຮູ້ ເພື່ອຢູ່ຮ່ວມກັນ ແລະ ໂຮງຮຽນໄດ້ເຜີຍແຜ່ການສຶກສາຮຽນຮ່ວມ ເພື່ອຮຽນວັດທະນະທຳທີ່ຫຼາກຫຼາຍ ແລະ ຫຼຸດຜ່ອນການໃຊ້ຄວາມຮຸນແຮງໃນໂຮງຮຽນ. ໂຮງຮຽນຍັງມີພັນທະໃນການພັດທະນາກິດຈະກຳຢ່າງຕໍ່ເນື່ອງ ໂດຍຜ່ານການວາງແຜນ, ການປະຕິບັດ ແລະ ການຖອດຖອນບົດຮຽນ ເພື່ອກຳນົດວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນຕໍ່ການສຶກສາພົນລະເມືອງໂລກ.

**ຂັ້ນຕອນທີ່ສຳຄັນໃນການປະຕິບັດກິດຈະກຳການສຶກສາພົນລະເມືອງໂລກໃນໂຮງຮຽນ** ແມ່ນການເຮັດວຽກເປັນທີມ ເພື່ອເຮັດໃຫ້ກິດຈະກຳສຳເລັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້. ສິ່ງສຳຄັນທີ່ຈະນຳໄປສູ່ວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນແມ່ນການວາງແຜນ, ການປະຕິບັດ ແລະ ການຖອດຖອນບົດຮຽນຄືນຢ່າງຮອບຄອບ.

| | | |
|---|---|---|
| **ການວາງແຜນ** | ☐ | **ປະເມີນຕົນເອງ**<br>ການປະເມີນສະພາບທົ່ວໄປຂອງໂຮງຮຽນ ເພື່ອໃຫ້ເຫັນສະພາບການດຳເນີນການຂອງໂຮງຮຽນໃນປັດຈຸບັນ ກ່ຽວກັບພົນລະເມືອງໂລກ. ການປະເມີນນີ້ ຊ່ວຍກຳນົດບັນດາບຸລິມະສິດຕ່າງໆ, ຕັ້ງເປົ້າໝາຍ ແລະ ປະເມີນຄວາມສຳເລັດ. |
| | ☐ | **ພັດທະນາແຜນການປະຕິບັດກິດຈະກຳ**<br>ແຜນປະຕິບັດກິດຈະກຳ ຄວນກວມເອົາຈຸດປະສົງ ແລະ ບຸລິມະສິດຕ່າງໆຂອງໂຮງຮຽນເຂົ້ານຳ, ລວມທັງໜ້າວຽກສະເພາະ, ຄາດຄະເນຜົນໄດ້ຮັບ ແລະ ຂອບວຽກ. ຄວນກວມເອົາ 4 ຂອບເຂດຂອງວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນຕໍ່ການສຶກສາພົນລະເມືອງໂລກ ຊຶ່ງປະກອບມີ ການຄຸ້ມຄອງໂຮງຮຽນ, ການຮຽນການສອນ, ໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກ ແລະ ການມີສ່ວນຮ່ວມຂອງຊຸມຊົນ. |
| | ☐ | **ສ້າງຄວາມເຂົ້າໃຈກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບ**<br>ສ້າງພາລະບົດບາດ ແລະ ອະນຸກຳມະການ, ໃຫ້ຄວາມໃສ່ໃຈຕໍ່ກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ, ເປັນສິ່ງສຳຄັນໃນການແບ່ງປັນວຽກງານ ແລະ ໃຫ້ໂອກາດທຸກຄົນໄດ້ເຂົ້າຮ່ວມ. ຈັດຕັ້ງທີມງານການປະຕິບັດກິດຈະກຳກ່ຽວກັບການເປັນພົນລະເມືອງໂລກໃນໂຮງຮຽນ ພ້ອມກັບພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ຊັດເຈນ ຊຶ່ງຈະຊ່ວຍປະສານງານໃນການພັດທະນາ, ການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນໃນການພັດທະນາໃນຕໍ່ໜ້າ. |

| | | |
|---|---|---|
| **ການລົງມືປະຕິບັດ** | ☐ | **ຈັດຕັ້ງປະຕິບັດ ແຜນປະຕິບັດງານຂອງໂຮງຮຽນ**<br>ແຜນປະຕິບັດງານ ຄວນຈັດຕັ້ງປະຕິບັດໃນ 4 ຂອບເຂດຂອງວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນຕໍ່ການສຶກສາພົນລະເມືອງໂລກ. ສິ່ງສຳຄັນທີ່ທຸກຄົນໃນໂຮງຮຽນຕ້ອງມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນປະຕິບັດງານນີ້. |
| | ☐ | **ເກັບກຳຂໍ້ມູນ ໃນຂະນະທີ່ກຳລັງຈັດຕັ້ງປະຕິບັດແຜນປະຕິບັດງານ**<br>ທ່ານຕ້ອງເກັບກຳຂໍ້ມູນຫຼາຍໆຮູບແບບ ເພື່ອເບິ່ງລະບົບການປ່ຽນແປງແບບລົງເລິກ ແລະ ແບບກວ້າງໆ. ໃນແຟ້ມການປະເມີນຂອງທ່ານອາດກວມເອົາ:<br>➢ ຂໍ້ມູນທີ່ເກັບກຳມາ ກ່ຽວກັບການຮຽນຮູ້ຮ່ວມກັນຂອງນັກຮຽນ.<br>➢ ຂໍ້ມູນດ້ານປະລິມານຂອງເຫດການທີ່ເກີດຂຶ້ນທີ່ໂຮງຮຽນທີ່ໄດ້ເກັບກຳ.<br>➢ ຂໍ້ມູນດ້ານຄຸນນະພາບ ເຊັ່ນ: ຕົວຢ່າງວຽກງານຂອງນັກຮຽນ, ບົດສອນ, ການສັງເກດຂອງຄູ, ຮູບພາບ, ຈົດໝາຍຂ່າວຂອງໂຮງຮຽນ, ບົດບັນທຶກການປະຊຸມຂອງທີມງານການປະຕິບັດຕໍ່ພົນລະເມືອງໂລກ ແລະ ແຜນປະຕິບັດງານ. |
| **ການຖອດຖອນບົດຮຽນ ແລະ ການທົບທວນຄືນ** | ☐ | **ໃຊ້ເວລາ ໃນການຖອດຖອນບົດຮຽນ ແລະ ທວນຄືນກ່ຽວກັບເປົ້າໝາຍ, ຍຸດທະສາດ ແລະ ຜົນສຳເລັດ.**<br>ຕັ້ງເປົ້າໝາຍ ເພື່ອໃຫ້ບັນລຸການປະຕິບັດກິດຈະກຳຂອງການສຶກສາພົນລະເມືອງໂລກ, ໃຊ້ເວລາທົບທວນຄືນ ຫຼື ປ່ຽນເປົ້າໝາຍ, ການປະຕິບັດ ແລະ ວິທີການໃນການປະຕິບັດ. |
| | ☐ | **ແບ່ງປັນ ແລະ ສະເຫຼີມສະຫຼອງຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້**<br>ການເຜີຍແຜ່ຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້ ທັງພາຍໃນ ແລະ ພາຍນອກຊຸມຊົນໂຮງຮຽນ ສ້າງຄວາມຮັບຜິດຊອບໃຫ້ແກ່ພາກສ່ວນອ້ອມຂ້າງກ່ຽວກັບການປະຕິບັດກິດຈະກຳການການເປັນພົນລະເມືອງໂລກ. ສະເຫຼີມສະຫຼອງຜົນສຳເລັດຂອງໂຮງຮຽນຕໍ່ສາທາລະນະຕາມຄວາມເໝາະສົມ ເພື່ອສ້າງແຮງຈູງໃຈ ແລະ ເຮັດໃຫ້ໂຄງການມີຄວາມຍືນຍົງ. ໃນໂລກ, ໂຮງຮຽນຕ່າງໆໄດ້ຄົ້ນພົບວິທີທີ່ສ້າງສັນໃນການແບ່ງປັນຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້, ຊຶ່ງລວມມີ:<br>➢ ການນຳໃຊ້ຂໍ້ມູນທີ່ເກັບກຳໄດ້ ເພື່ອສອດແຊກເຂົ້າໃນຫຼັກສູດ (ຕົວຢ່າງ: ນັກຮຽນ ສ້າງເສັ້ນສະແດງທີ່ອະທິບາຍການປ່ຽນແປງໃນການຮຽນຮູ້ເພື່ອຢູ່ຮ່ວມກັນ).<br>➢ ຕິດໂປສເຕີຕ່າງໆ ບ່ອນທີ່ສະດຸດຕາໃນໂຮງຮຽນ ກ່ຽວກັບສັນຕິພາບ.<br>➢ ແບ່ງປັນວິທີທີ່ດີໃຫ້ຄອບຄົວໃນການແນະນຳການປະຕິບັດບັດກ່ຽວກັບຄວາມຍືນຍົງໃຫ້ສະມາຊິກໃນຄອບຄົວ.<br>➢ ໃຫ້ນັກຮຽນເປັນຜູ້ນຳພາການທ່ຽວຊົມໂຄງການການປະຕິບັດຕໍ່ການສຶກສາ ພົນລະເມືອງໂລກໃນໂຮງຮຽນ ແກ່ຜູ້ທີ່ມາຢ້ຽມຢາມ.<br>➢ ນຳສະເໜີຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້ໃນກອງປະຊຸມຕ່າງໆ ແລະ ໃນບົດລາຍງານວິຊາການ.<br>➢ ສະໝັກໂຄງການ ເພື່ອຊີງລາງວັນລະດັບຊາດ ຫຼື ສາກົນ. |

### 5.2.4 ກຳນົດວິທີການ ແລະ ຈະເຊື່ອມໂຍງເຂົ້າກັບການສຶກສາພົນລະເມືອງໂລກແນວໃດ?

ພິຈາລະນາຕົວຢ່າງເຫຼົ່ານີ້ ສະມາຊິກຕ່າງໆຂອງຊຸມຊົນໂຮງຮຽນ ສາມາດມີສ່ວນຮ່ວມໃນໂຄງການປະຕິບັດຕໍ່ການເປັນພົນລະເມືອງໂລກແນວໃດ, ພາລະບົດບາດໃດທີ່ອາດຈະປະຕິບັດໄດ້ດີໃນໂຮງຮຽນຂອງທ່ານ? ທ່ານສາມາດຄິດຫາວິທີທາງໃຫ້ນັກຮຽນ, ພະນັກງານ ແລະ ສະມາຊິກຄອບຄົວຢູ່ໃນໂຮງຮຽນຂອງທ່ານມີສ່ວນຮ່ວມໄດ້ບໍ່?

| ສະມາຊິກຂອງໂຮງຮຽນ | ພາລະບົດບາດທີ່ອາດເປັນໄປໄດ້ |
|---|---|
| ນັກຮຽນ | ➢ ການວາງແຜນ ແລະ ການນຳພາເຮັດໂຄງການປະຕິບັດຕໍ່ການເປັນພົນລະເມືອງໂລກໃນຫ້ອງຮຽນ ຫຼື ເປັນສ່ວນໜຶ່ງຂອງສະໂມສອນຕ່າງໆ (Clubs).<br>➢ ດຳເນີນການປະເມີນ (ເຊັ່ນ: ການປະພຶດຂອງນັກຮຽນ) ເພື່ອປະເມີນຄວາມກ້າວໜ້າໃນການເປັນໂຮງຮຽນທີ່ຍືນຍົງ.<br>➢ ໃຫ້ຄຳປຶກສາກັບນັກຮຽນ ທີ່ຫາກໍໄດ້ຮຽນຮູ້ວິທີການເຂົ້າຮ່ວມການປະຕິບັດຕໍ່ການເປັນພົນລະເມືອງໂລກ. |
| ຄູ | ➢ ສອນສອດແຊກເຂົ້າໃນບົດຮຽນທີ່ຊ່ວຍໃຫ້ນັກຮຽນພັດທະນາຄວາມຮູ້ ກ່ຽວກັບການສຶກສາພົນລະເມືອງໂລກ, ມີທັກສະໃນການກວດສອບສິ່ງຕ່າງໆທີ່ເປັນໄປໄດ້ໃນການປະຕິບັດ ແລະການແກ້ໄຂບັນຫາໃນການປະຕິບັດຮ່ວມກັບຄົນອື່ນໆ.<br>➢ ຊຸກຍູ້ໃຫ້ທຸກຄົນໃນໂຮງຮຽນ ເຂົ້າຮ່ວມການລິເລີ່ມຂອງໂຮງຮຽນທີ່ກ່ຽວຂ້ອງກັບການສຶກສາພົນລະເມືອງໂລກ.<br>➢ ສະໜັບສະໜູນຄວາມຄາດຫວັງ ເພື່ອສ້າງສັນຕິພາບໃນມືຂອງມະນຸດ. |
| ຜູ້ອຳນວຍການ ແລະ ຜູ້ບໍລິຫານ | ➢ ການສະໜັບສະໜູນວິໄສທັດ ແລະ ຄຸນຄ່າຂອງໂຮງຮຽນໃນການປະຕິບັດກິດຈະກຳການສຶກສາພົນລະເມືອງໂລກ.<br>➢ ສະໜັບສະໜູນຄູ ແລະ ພະນັກງານຜູ້ອື່ນໆໂດຍຕອບສະໜອງດ້ານຊັບພະຍາກອນ, ການພັດທະນາອາຊີບ ແລະ ໃຫ້ເວລາແກ່ພວກເຂົາຕາມທີ່ຕ້ອງການ ເພື່ອນຳພາເຮັດກິດຈະກຳການສຶກສາພົນລະເມືອງໂລກຢ່າງມີປະສິດທິພາບ.<br>➢ ພິຈາລະນາຄວາມຮູ້, ປະສົບການ ແລະ ຄຸນຄ່າທີ່ກ່ຽວຂ້ອງກັບການປະຕິບັດຕໍ່ການເປັນພົນລະເມືອງໂລກ ແລະ ຄວາມສະເໝີພາບ ເມື່ອເວລາຕັດສິນໃຈກ່ຽວກັບການຈ້າງຄູ ແລະພະນັກງານໃໝ່. |
| ຜູ້ຄຸ້ມຄອງ ແລະ ຜູ້ປະກອບການ | ➢ ແນະນຳການປ່ຽນແປງການມືອະຄະຕິ ແລະ ການບໍ່ເຄົາລົບໃຫ້ກຽດຜູ້ອື່ນ.<br>➢ ໃຫ້ຮຽນຮູ້ການເຄົາລົບ ແລະ ນັບຖືວັດທະນະທຳທີ່ແຕກຕ່າງ.<br>➢ ສ້າງສະພາບແວດລ້ອມໃຫ້ມີຄວາມສະຫງົບ, ມີລະບຽບ ແລະ ຊ່ວຍເຫຼືອກັນໄດ້. |

| | |
|---|---|
| ສະມາຊິກໃນຄອບຄົວ | ➢ ຮັບເອົາການຕິຊົມ, ເຄົາລົບ, ນັບຖືແນວຄວາມຄິດ ແລະ ຊ່ວຍເຫຼືອກັນ.<br>➢ ເປັນອາສາສະໝັກໃນໂຮງຮຽນໃນການໂຄສະນາເຜີຍແຜ່ການສຶກສາ ພົນລະເມືອງໂລກ. |
| ສະມາຊິກຊຸມຊົນທ້ອງຖິ່ນ ແລະ ອົງການຈັດຕັ້ງ | ➢ ກຳນົດບັນຫາການພັດທະນາແບບຍືນຍົງພາຍໃນທ້ອງຖິ່ນ ທີ່ໂຮງຮຽນສາມາດແກ້ໄຂບັນຫາໄດ້ ແລະ ສາມາດຫຼຸດຜ່ອນຄວາມຮຸນແຮງໃນຊຸມຊົນ.<br>➢ ແລກປ່ຽນຄວາມຮູ້ດ້ານວິຊາການກ່ຽວກັບການຮຽນຮູ້ ເພື່ອຢູ່ຮ່ວມກັນ.<br>➢ ໃຫ້ນັກຮຽນລົງພາກສະໜາມຕົວຈິງ ຮຽນຮູ້ສະພາບການທີ່ແທ້ຈິງຂອງໂລກ ເພື່ອການຮຽນຮູ້ກ່ຽວກັບພົນລະເມືອງຂອງໂລກ. |

## 5.3 ການພັດທະນາຂີດຄວາມສາມາດໃຫ້ຄູສອນ ກ່ຽວກັບການສຶກສາພົນລະເມືອງໂລກ

### 5.3.1 ການຝຶກອົບຮົມ

- ເຂົ້າຮ່ວມ ຫຼື ຈັດກອງປະຊຸມທາງໄກ (online) ກັບພາກສ່ວນທີ່ກ່ຽວຂ້ອງ.
- ເຂົ້າຮ່ວມ ຫຼື ຈັດກອງປະຊຸມເຜີຍແຜ່ໃຫ້ຜູ້ບໍລິຫານການສຶກສາຂັ້ນຕ່າງໆ ແລະ ຄູສອນ.
- ສ້າງຄູຝຶກຂັ້ນຂັ້ນຕ່າງໆ.

### 5.3.2 ການແລກປ່ຽນປະສົບການ

- ເຂົ້າຮ່ວມການແລກປ່ຽນປະສົບການຮຽນການສອນ ແລະ ກິດຈະກຳໃນສະຖານການສຶກສາທັງພາຍໃນ ແລະ ຕ່າງປະເທດ.

### 5.3.3 ການກຽມຄວາມພ້ອມກ່ຽວກັບ ສພລ ກ່ອນຈະດຳເນີນການສອນ

ການກຽມຄວາມພ້ອມກ່ອນການສອນ ສພລ ມີຄວາມຈຳເປັນໃນການສ້າງຄວາມເຂົ້າໃຈ 7 ເນື້ອໃນດ້ານການຮຽນຮູ້ ສພລ ເພື່ອແຕ່ງບົດສອນ ແລະ ພັດທະນາສື່ການສອນໃຫ້ມີຄວາມສອດຄ່ອງຕາມແຕ່ລະດ້ານ ເຊັ່ນ:

1. ມິຕິຕ່າງໆຂອງ ສພລ: ດ້ານຄວາມຮູ້, ດ້ານສັງຄົມ-ອາລົມ ແລະ ດ້ານພຶດຕິກຳ (ລາຍລະອຽດ ໄດ້ອະທິບາຍໃນຂໍ້ທີ 2).

2. ຜົນໄດ້ຮັບຈາກການຮຽນຮູ້ ສພລ: ອະທິບາຍໃຫ້ຈະແຈ້ງເຖິງຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ຄ່ານິຍົມທີ່ຜູ້ຮຽນຈະໄດ້ຮັບ ແລະ ທີ່ຈະສະແດງອອກຈາກຜົນຂອງການສຶກສາ ພົນລະເມືອງໂລກທີ່ສອດຄ່ອງກັບ 3 ມິຕິຂອງ ສພລ (ລາຍລະອຽດ ໄດ້ອະທິບາຍໃນຂໍ້ທີ 2).

3. ຄຸນລັກສະນະຂອງພົນລະເມືອງໂລກ: ສ້າງຄວາມເຂົ້າໃຈກ່ຽວກັບຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍທາງດ້ານໂຄງສ້າງ, ການຄຸ້ມຄອງ, ການເມືອງ, ປະຫວັດສາດ, ເສດຖະກິດ, ວັດທະນະທຳ, ສິດ ແລະ ໜ້າທີ່ຂອງພົນລະເມືອງໃນໂລກ, ເຂົ້າໃຈຄວາມເປັນເອກະລັກ, ສາຍພົວພັນ ແລະ ຄວາມເປັນເຈົ້າຂອງດ້ານຄຸນຄ່າ ແລະ ຄວາມເປັນມະນຸດດ້ວຍກັນ ເພື່ອຢູ່ຮ່ວມກັນໂດຍສັນຕິ (ລາຍລະອຽດ ໄດ້ອະທິບາຍໃນຂໍ້ທີ 3).

4. ສ້າງຄວາມເຂົ້າໃຈຄຸນລັກສະນະໃນແຕ່ລະມິຕິຂອງ ສພລ ເຊັ່ນ: ຄວາມຮູ້ ແລະ ການຄິດວິເຄາະ, ການພົວພັນທາງສັງຄົມ ແລະ ການເຄົາລົບຕໍ່ຄວາມຫຼາກຫຼາຍ, ຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມ (ລາຍລະອຽດໄດ້ອະທິບາຍໃນຂໍ້ທີ 5).

5. ຈຸດປະສົງ: ການຮຽນຮູ້ ສພລ ແມ່ນອີງໃສ່ 4 ຈຸດປະສົງຂອງການຮຽນຮູ້ ເຊັ່ນ: ຮຽນເພື່ອຮູ້, ຮຽນເພື່ອເຮັດ, ຮຽນເພື່ອເປັນ ແລະ ຮຽນເພື່ອຢູ່ຮ່ວມກັນໂດຍສັນຕິ ແລະ ແຕ່ລະຫົວຂໍ້ຂອງການຮຽນຮູ້ແມ່ນໃຫ້ມີຄວາມສອດຄ່ອງກັບກຸ່ມອາຍຸ ຫຼື ລະດັບການສຶກສາທີ່ແຕກຕ່າງກັນ ເຊັ່ນ:
   - ກຸ່ມອາຍຸລະຫ່ວາງ 5-9 ປີ.
   - ກຸ່ມອາຍຸລະຫວ່າງ 9-12 ປີ.
   - ກຸ່ມອາຍຸລະຫວ່າງ 12-15 ປີ.
   - ກຸ່ມອາຍຸ 15-18 ປີຂຶ້ນໄປ.

6. ການນຳໃຊ້ຄຳສັບຕ່າງໆຂອງ ສພລ ສຳລັບແຕ່ລະກຸ່ມອາຍຸ:

| **ກຸ່ມອາຍຸລະຫວ່າງ 5-9 ປີ** | **ກຸ່ມອາຍຸລະຫວ່າງ 9-12 ປີ** |
|---|---|
| - ຮຽນຮູ້ການພົວພັນ, ການພັດທະນາຕົນເອງ, ການປະຕິບັດຕົນເອງຕໍ່ຜູ້ອື່ນ ແລະ ສ່ວນລວມ.<br>- ສະແດງໃຫ້ເຫັນຄວາມແຕກຕ່າງ ແລະ ການພົວພັນລະຫວ່າງກຸ່ມຄົນໃນສັງຄົມທີ່ແຕກຕ່າງກັນ.<br>- ຈຳແນກຄວາມຄືກັນ ແລະ ຄວາມແຕກຕ່າງ ແລະ ຮັບຮູ້ວ່າທຸກຄົນມີສິດ ແລະ ຄວາມຮັບຜິດຊອບເທົ່າທຽມກັນ. | - ຮຽນຮູ້ຄວາມແຕກຕ່າງທາງດ້ານເອກະລັກ ແລະ ຮຽນຮູ້ເພື່ອຢູ່ຮ່ວມກັນ.<br>- ສົມທຽບຄວາມແຕກຕ່າງລະຫວ່າງມາດຖານດ້ານສັງຄົມ, ວັດທະນະທຳ ແລະ ຄວາມຍຸຕິທຳ.<br>- ປູກຝັງສາຍພົວພັນທີ່ດີກັບບຸກຄົນ ແລະ ກຸ່ມຄົນທີ່ມີຄວາມແຕກຕ່າງ. |
| **ກຸ່ມອາຍຸລະຫວ່າງ 12-15 ປີ** | **ກຸ່ມອາຍຸ 15-18 ປີຂຶ້ນໄປ** |
| - ຮຽນຮູ້ການໄຈ້ແຍກລະຫວ່າງເອກະລັກ ສ່ວນບຸກຄົນ, ສັງຄົມ ແລະ ປູກຈິດສຳນຶກ ຂອງຄວາມເປັນມະນຸດດ້ວຍກັນ.<br>- ສະແດງຄວາມເຄົາລົບຄວາມແຕກຕ່າງ, ຄວາມຫຼາກຫຼາຍ, ປູກຝັງຄວາມເຫັນອົກ ເຫັນໃຈ ແລະ ຄວາມສາມັກຄີຕໍ່ຄົນອື່ນໃນສັງຄົມ.<br>- ສົນທະນາກ່ຽວກັບຜົນປະໂຫຍດ ແລະ ສິ່ງທ້າທາຍໃນການພົວພັນກັບຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍ. | - ຮຽນຮູ້ວິທີການພົວພັນໃນລະດັບຕ່າງໆດ້ານເອກະລັກ ແລະ ການດຳລົງຊີວິດກັບກຸ່ມຄົນທີ່ແຕກຕ່າງກັນ.<br>- ປະເມີນສາຍພົວພັນລະຫວ່າງກຸ່ມຄົນ, ຊຸມຊົນ ແລະ ປະເທດຕ່າງໆຢ່າງຮອບຄອບ.<br>- ຮຽນຮູ້, ນຳໃຊ້ຄຸນຄ່າ ແລະ ຄ່ານິຍົມໃນການມີສ່ວນຮ່ວມກັບກຸ່ມຄົນໃນສັງຄົມ ແລະ ໃນໂລກ. |

# 6 ເຄື່ອງມືການປະເມີນຜົນຈາກການຮຽນຮູ້ ກ່ຽວກັບການສຶກສາພົນລະເມືອງໂລກ

## 6.1 ເຄື່ອງມືທີ່ໃຊ້ໃນການປະເມີນ

| ວິທີການປະເມີນ | ເຄື່ອງມືທີ່ໃຊ້ໃນການປະເມີນ |
|---|---|
| ການສັງເກດ | ແບບສັງເກດ ເຊິ່ງມີລັກສະນະມາດຕາວັດແບບຕ່າງໆເຊັ່ນ<br>- ແບບກວດສອບລາຍການ (Check list).<br>- ປະເມີນຕາມລະດັບ (Rating Scale).<br>- ແບບບັນທຶກ. |
| ການສຳພາດ | - ຮູບແບບສຳພາດຕາມຄຳຖາມ.<br>- ຄຳຖາມເຈາະຈີ້ມ. |
| ການທົດສອບພາກປະຕິບັດ | ແບບທົດສອບພາກປະຕິບັດ |
| ການໃຊ້ແຟ້ມສະສົມຜົນງານ | ແບບປະເມີນ ເຊິ່ງມີເກນການໃຫ້ຄະແນນແບບຮູບຣິກ (Scoring Rubrics) |

## 6.2 ຮູບຣິກ (Rubrics)

ແມ່ນເຄື່ອງມືການໃຫ້ຄະແນນ (Scoring tool) ທີ່ເກີດຈາກການຮ່ວມກັນລະຫວ່າງເກນການໃຫ້ຄະແນນ (Scoring Criteria) ແລະ ລະດັບຄະແນນ (Rating Scale) ເພື່ອສະແດງໃຫ້ເຫັນຄວາມແຕກຕ່າງຂອງຜົນງານ ຫຼື ປະສິດທິພາບ (Proficiency) ຂອງວຽກງານ ສຳລັບເປັນແນວທາງທີ່ຈະນຳໄປໃຊ້ ໃນການປະເມີນຜົນງານຂອງນັກຮຽນຕໍ່ໄປ ເຊິ່ງການປະເມີນຜົນງານຂອງນັກຮຽນຈະມີ 2 ລັກສະນະຄື: ຜົນງານທີ່ໄດ້ຈາກການຮ່ວມກິດຈະກຳ ແລະ ວິທີການປະຕິບັດກິດຈະກຳທີ່ນັກຮຽນໃຊ້. ການນຳໃຊ້ເກນຮູບຣິກ ຈະປະເມີນໃນລັກສະນະໃດ ຂຶ້ນຢູ່ກັບຈຸດປະສົງໃນການຮຽນຮູ້ອາດຈະປະເມີນລັກສະນະໃດໜຶ່ງ ຫຼື ປະເມີນທັງສອງລັກສະນະກໍໄດ້.

### 6.2.1 ຈຸດປະສົງຂອງການສ້າງ ຮູບຣິກ

1. ເພື່ອປະເມີນຂະບວນການ (Process) ປະເມີນການຮຽນຮູ້ຂອງນັກຮຽນ, ເປັນບຸກຄົນ ຫຼື ເປັນທີມ ຊຶ່ງອາດຈະເປັນການປະເມີນການນຳສະເໜີປາກເປົ່າ, ການອະທິບາຍ, ການສາທິດ ແລະ ອື່ນໆ.
2. ເພື່ອຄວາມຊັດເຈນໃນການປະເມີນຜົນຜະລິດ ຫຼື ຜົນງານທີ່ນັກຮຽນສາມາດປະດິດຂຶ້ນ ເຊັ່ນ: ປະເມີນແຟ້ມສະສົມຜົນງານ, ລາຍງານການວິໄຈ, ເທດສະການ, ຜົນງານສິລະປະ ແລະ ອື່ນໆ.

### 6.2.2 ຕົວຢ່າງ: ເກນການໃຫ້ຄະແນນຣູບຣິກ

| **ລາຍການປະເມີນ** | **ຄຳອະທິບາຍຄຸນນະພາບ** | | | |
|---|---|---|---|---|
| | **ດີຫຼາຍ** (4) | **ດີ** (3) | **ພໍໃຊ້** (2) | **ປັບປຸງ** (1) |
| ຄວາມເຂົ້າໃຈຕໍ່ການສຶກສາພົນລະເມືອງໂລກ (ສພລ) | ນັກຮຽນໄດ້ມີການວິເຄາະສະພາບການດຳລົງຊີວິດໃນສັງຄົມ, ມີຄວາມຮັບຮູ້, ມີຄວາມເຫັນອົກເຫັນໃຈ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້ຢ່າງເໝາະສົມ. | ນັກຮຽນສາມາດວິເຄາະສະພາບການດຳລົງຊີວິດໃນສັງຄົມໄດ້, ມີຄວາມເຫັນອົກເຫັນໃຈ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້. | ນັກຮຽນຮັບຮູ້ສະພາບການດຳລົງຊີວິດໃນສັງຄົມອ້ອມຂ້າງຕົນເອງ, ມີຄວາມເຫັນອົກເຫັນໃຈ ແລະ ຊ່ວຍເຫຼືອໃນບາງຄັ້ງ. | ນັກຮຽນຮັບຮູ້ ສະພາບການດຳລົງຊີວິດໃນສັງຄົມອ້ອມຂ້າງຕົນເອງ, ມີຄວາມເຫັນໃຈແຕ່ບໍ່ສະແດງອອກ. |

# 7 ເອກະສານຊ້ອນທ້າຍ

## 7.1 ໂຄງຮ່າງຫົວຂໍ້ການຮຽນການສອນ ສພລ ໃນໂຮງຮຽນ

| ຫົວຂໍ້ | ໃຊ້ເວລາ | ຈຸດປະສົງ | ຄາດຫວັງຜົນໄດ້ຮັບ | ເນື້ອໃນ | ວິທີການສອນ | ສື່ການສອນ | ເອກະສານອ້າງອີງ |
|---|---|---|---|---|---|---|---|
| ແນະນຳພາບລວມຂອງການສຶກສາພົນລະເມືອງໂລກ | | ເພື່ອໃຫ້ຜູ້ຮຽນສາມາດ:<br>- ຮັບຮູ້ກິດຈະກຳຕ່າງໆຂອງອຸຍແນສໂກໃນການສົ່ງເສີມສັນຕິພາບ, ປະຫວັດຄວາມເປັນມາຂອງການສຶກສາພົນລະເມືອງໂລກ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.<br>- ຮັບຮູ້ວິໄສທັດຂອງການສຶກສາພົນລະເມືອງໂລກ.<br>- ຮັບຮູ້ແນວໂນ້ມຂອງການສຶກສາພົນລະເມືອງໂລກໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ. | ຜູ້ຮຽນສາມາດ:<br>- ຮັບຮູ້ວຽກງານຂອງອຸຍແນສໂກຫຼາຍຂຶ້ນ.<br>- ຮັບຮູ້ຄວາມໝາຍ ແລະ ຄວາມສຳຄັນຂອງ ສພລ.<br>- ສາມາດປະກອບສ່ວນ ແລະ ສົ່ງເສີມວຽກງານຕ່າງໆ ເພື່ອສັນຕິພາບ ແລະ ຄວາມສະຫງົບສຸກ.<br>- ມີຄວາມເຄົາລົບ ແລະ ນັບຖືວັດທະນະທຳທີ່ຫຼາກຫຼາຍ. | ຫົວຂໍ້ນີ້ ຈະໄດ້ຮຽນຮູ້ກ່ຽວກັບວຽກງານທີ່ສຳຄັນຂອງອຸຍແນສໂກໃນການສົ່ງເສີມສັນຕິພາບ, ຄວາມເປັນມາ, ວິໄສທັດ ແລະ ແນວໂນ້ມຂອງ ສພລ. | ດຳເນີນກິດຈະກຳການສອດແຊກເຂົ້າໃນການຮຽນການສອນ ດ້ວຍການອະທິບາຍ, ລະດົມສະໝອງ, ສົນທະນາ, ເບິ່ງວິດີໂອປະຕິບັດກິດຈະກຳບຸກຄົນ, ກິດຈະກຳກຸ່ມ ແລະ ຂຽນບົດລາຍງານ. | ເອກະສານປະກອບການສອນ, ສີ່ທີ່ທັນສະໄໝ, ເຈ້ຍ A4, ເຈ້ຍແຜ່ນໃຫຍ່, ບິກເຟີດ, ສະກ໋ອດ | ປື້ມ:<br>- Framework for Action Education 2030<br>- Global Citizenship Education: Preparing learner for the challenges of the 21st century |
| ແນວຄວາມຄິດຂອງການສຶກສາພົນລະເມືອງໂລກ | | ເພື່ອໃຫ້ຜູ້ຮຽນສາມາດ:<br>- ເຂົ້າໃຈກັບບັນຫາໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບໂລກ, ການເຊື່ອມໂຍງ, ການພົວພັນຂອງບັນດາປະເທດ ແລະ ປະຊາກອນ. | ຜູ້ຮຽນສາມາດ:<br>- ຮູ້ ແລະ ເຂົ້າໃຈກັບບັນຫາສະພາບແວດລ້ອມ, ຂະບວນການຕັດສິນໃຈ, ສິດ ແລະ ພັນທະຂອງ | ຫົວຂໍ້ນີ້ຈະໄດ້ຮຽນຮູ້ກ່ຽວກັບຄວາມໝາຍ, ຄວາມສຳຄັນ, ເປົ້າໝາຍ, ຂອບເຂດແນວຄວາມຄິດພື້ນຖານກ່ຽວກັບການ | ນຳສະເໜີເນື້ອໃນຫຍໍ້ກ່ຽວກັບແນວຄວາມຄິດຂອງ ສພລ (ຄວາມຮູ້ຄວາມເຂົ້າໃຈ, ສັງຄົມ-ອາລົມ, ພຶດຕິກຳ), ແບ່ງກຸ່ມຜູ້ຮຽນສົນທະນາກ່ຽວກັບຄວາມຮູ້ຄວາມ | ປື້ມຊຸດເຄື່ອງມື (GCED), ເອກະສານຄູ່ມື, ເຈ້ຍຂຽນ, ເຄື່ອງສາຍ LCD, ເຈ້ຍແຜ່ນໃຫຍ່, | ປື້ມ:<br>- UNESCO (2015) Global Citizenship Education: Topics and learning objectives.<br>- UNESCO (2018). CED a guide for trainers. |

| | | | | | | | |
|---|---|---|---|---|---|---|---|
| | | - ຮັບຮູ້ຄວາມເປັນມະນຸດດ້ວຍກັນ, ສາມັກຄີ, ຄວາມເຄົາລົບຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍ, ການແບ່ງປັນຄຸນຄ່າ, ແລະ ຄວາມຮັບຜິດຊອບບົນພື້ນຖານຂອງສິດທິມະນຸດ.<br>- ຮູ້ຈັກການປະພຶດຕົວດີ, ມີຄວາມຮັບຜິດຊອບໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບສາກົນ, ມີຄວາມສະຫງົບ, ສ້າງແຮງຈູງໃຈ ແລະ ເຕັມໃຈໃນການລົງມືປະຕິບັດ. | ການເປັນພົນລະເມືອງ, ການເຊື່ອມໂຍງ, ການພົວພັນລະຫວ່າງປະຊາກອນຂອງບັນດາປະເທດທີ່ມີຄວາມແຕກຕ່າງກັນທາງເອກະລັກຂອງມະນຸດ.<br>- ຮັບຮູ້ຄຸນຄ່າຂອງຄວາມເປັນມະນຸດດ້ວຍກັນ, ມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ສັງຄົມ, ເຄົາລົບຄວາມແຕກຕ່າງທາງດ້ານວັດທະນະທຳ, ເສດຖະກິດ-ສັງຄົມ, ເຊື້ອຊາດ, ພາສາ, ສາສະໜາທີ່ຫຼາກຫຼາຍ.<br>- ຮຽນຮູ້ຈັກການປະພຶດຕົວດີ, ຮັກຄວາມສະຫງົບ, ຄວາມສາມັກຄີ, ເຂົ້າໃຈໃນການຄົ້ນຫາວິທີປະຕິບັດ ແລະ ມີສ່ວນຮ່ວມໃນການປົກປ້ອງ ແລະ ພັດທະນາໂລກປະຈຸບັນ. | ສຶກສາພົນລະເມືອງໂລກ. | ເຂົ້າໃຈ, ສັງຄົມ-ອາລົມ, ພຶດຕິກຳ, ຕັ້ງຄຳຖາມທີ່ໄດ້ກະກຽມມາ ກ່ຽວກັບຄວາມຮູ້ຄວາມເຂົ້າໃຈ, ສັງຄົມ-ອາລົມ, ພຶດຕິກຳ) ໃຫ້ຜູ້ຮຽນແຕ່ລະກຸ່ມໄດ້ຄົ້ນຄວ້າ ແລະ ຕອບຄຳຖາມ, ໃຫ້ຜູ້ຮຽນທັງໝົດໄດ້ແລກປ່ຽນຄວາມຄິດກ່ຽວກັບຄຳຖາມ(ເລີ່ມຈາກຜູ້ເປັນອາສາຕອບ), ສະຫຼຸບບົດຮຽນ ແລະ ມອບວຽກບ້ານໃຫ້ຜູ້ຮຽນໄດ້ຄົ້ນຄວ້າຕໍ່ໄປ. | ຮູບພາບປະກອບ, ແລະ ອິນເຕີເນັດ. | |

| | | | | | | | |
|---|---|---|---|---|---|---|---|
| ວິເຄາະຄວາມຕ້ອງການ ແລະ ວິທີການໃນປະຈຸບັນ ກ່ຽວກັບການສຶກສາພົນລະເມືອງໂລກ | | ເພື່ອໃຫ້ຜູ້ຮຽນສາມາດ: ຮູ້ເຖິງການສ້າງຄວາມຮູ້ສຶກຂອງຜູ້ຮຽນໃຫ້ມີແນວຄິດໃນການເປັນຊຸມຊົນທີ່ກວ້າງຂວາງ, ມີຄວາມຍຸດຕິທຳ, ສາມັກຄີ ນັບຖືຮັກແພງ, ການເພິ່ງພາອາໄສ - ແລກປ່ຽນເຊິ່ງກັນ ແລະ ກັນ, ນຳໃຊ້ວິທີການຮຽນແບບມີສ່ວນຮ່ວມໃນວິຊາຕ່າງໆ. | ຜູ້ຮຽນສາມາດ:<br>- ປະຕິບັດຕົນໃຫ້ເປັນພົນລະເມືອງທີ່ດີຂອງສັງຄົມ.<br>- ສ້າງສາຍພົວພັນທີ່ດີຕໍ່ກັນ, ຮັກຄວາມສະຫງົບສັນຕິພາບ. | - ທັກສະ ແລະ ຄ່ານິຍົມຂອງການມີສ່ວນຮ່ວມຂອງພົນລະເມືອງ ແລະ ການປະກອບສ່ວນໃນການພັດທະນາສັງຄົມໃນລະດັບທ້ອງຖິ່ນ ແລະ ທົ່ວໂລກ.<br>- ສັນຕິພາບ, ການເພິ່ງພາອາໄສ-ແລກປ່ຽນເຊິ່ງກັນ ແລະ ກັນ<br>- ການນຳໃຊ້ວິທີການຮຽນແບບມີສ່ວນຮ່ວມໃນວິຊາຕ່າງໆ | ການດຳເນີນການສອນໃນຂໍ້ນີ້ ແມ່ນການສອນສອດແຊກເຂົ້າໃນການຮຽນການສອນວິຊາອື່ນທີ່ເຫັນວ່າເໝາະສົມ ໂດຍໃຊ້ວິທີການສອນແບບອະທິບາຍ ຫຼື ບັນຍາຍ ແລະ ການສົນທະນາ, ໃຫ້ນັກຮຽນເບິ່ງຮູບພາບ ຫຼື ວິດີໂອທີ່ກ່ຽວຂ້ອງກັບເນື້ອໃນບົດຮຽນ ແລະ ສະຫຼຸບເນື້ອໃນ ສຳຄັນເພື່ອໃຫ້ເຫັນໄດ້ຄວາມສາມັກຄີປອງດອງ, ການສົ່ງເສີມວັດທະນະທຳແຫ່ງສັນຕິພາບ, ການສອດແຊກການສຶກສາພົນລະເມືອງໂລກເຂົ້າໃນການຮຽນການສອນໃນລາຍວິຊາທີ່ເຫັນວ່າ ມີຄວາມເໝາະສົມ. | - ເອກະສານການສອນທີ່ກ່ຽວຂ້ອງ<br>- ຮູບພາບ ຫຼື ເຄື່ອງສາຍວິດີໂອ ທີ່ກ່ຽວຂ້ອງ<br>- ເຈ້ຍແຜ່ນໃຫຍ່, ບິກເຟີດ | ປຶ້ມ:<br>- ສຶກສາພົນລະເມືອງໂລກ: ຫົວຂໍ້ ແລະ ຈຸດປະສົງຂອງການຮຽນຮູ້<br>- TOPICS AND LEARNING OBJECTIVES |
| ຂັ້ນຕອນການພັດທະນາ ແລະ ການຈັດຕັ້ງປະຕິບັດນະໂຍບາຍການສຶກສາ | | ເພື່ອໃຫ້ຜູ້ຮຽນຮູ້ ແລະ ເຂົ້າໃຈຂັ້ນຕອນການພັດທະນາ ແລະ ການຈັດຕັ້ງປະຕິບັດນະໂຍບາຍການສຶກສາ ແລະ ສາມດນຳໄປປະຕິບັດໃນຕົວຈິງໄດ້ | - ເມື່ອຜູ້ຮຽນໄດ້ຜ່ານການຮຽນໃນບົດນີ້ແລ້ວຈະເກີດການຮຽນຮູ້ປະການສຳຄັນດັ່ງນີ້:<br>- ຮູ້ປັບໃຊ້ຂັ້ນຕອນການພັດທະນາ ແລະ ການຈັດຕັ້ງປະຕິບັດນະໂຍບາຍໃນລະດັບ | ເນື້ອໃນຫຍໍ້ກ່ຽວກັບຂັ້ນຕອນການພັດທະນາ ແລະ ການຈັດຕັ້ງປະຕິບັດນະໂຍບາຍຂອງຊາດທີ່ມີຕໍ່ກັບການສຶກສາພົນລະເມືອງໂລກ ເຊັ່ນ: ການທົບທວນ ແລະ ການ | ວິທີການສອນທີ່ໃຊ້ໃນບົດນີ້ ແມ່ນປະສົມປະສານດ້ວຍຫຼາຍເຕັກນິກ ແລະ ວິທີການ ເຊັ່ນ: ການບັນລະຍາຍ, ໃຊ້ການຕັ້ງຄຳຖາມ, ການສົນທະນາແລກປ່ຽນຄວາມຄິດ | ໃຊ້ຮູບພາບ, ເອກະສານທີ່ມີເນື້ອໃນກ່ຽວຂ້ອງ, ໃບກິດຈະກຳ (ກຸ່ມ ແລະ ບຸກຄົນ), ບົດນຳສະເໜີເປັນຟາຍ ພາວເວີພອຍ ປະກອບ | ປຶ້ມ:<br>- Global_Citizenship_Education: A Guide_for_policy_makers<br>- Ref: IBE/2018/OP/CD/07, INTERNATIONAL BUREAU OF EDUCATION, Training Tools for Curriculum Development: A RESOURCE PACK FOR GLOBAL CITIZENSHIP EDUCATION (GCED). |

| | | | | | | | |
|---|---|---|---|---|---|---|---|
| | | | ການຮຽນການສອນຂອງຄົນ. | ພັດທະນານະໂຍບາຍ, ການທົບທວນ ແລະ ພັດທະນາຫຼັກສູດ, ການສ້າງຂີດຄວາມສາມາດ, ການສ້າງຄວາມຮູ້, ການແບ່ງປັນ ແລະ ເຜີຍແຜ່ຄວາມຮູ້ ແລະ ການຕິດຕາມ ແລະ ປະເມີນຜົນ. | ເຫັນຊຶ່ງກັນ ແລະ ກັນ, ນຳໃຊ້ກິດຈະກຳກຸ່ມ ໃນການມອບໝາຍວຽກ. | ການບັນຍາຍ ແລະ ວີດີໂອປະກອບການສອນ. | |
| ຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍ | | ເພື່ອໃຫ້ຜູ້ຮຽນ ຮູ້ຈຳແນກເຖິງຄວາມແຕກຕ່າງຂອງຄົນຢູ່ໃນສັງຄົມບໍ່ແມ່ນສິ່ງທີ່ຈະມາຕັດສິນໃຫ້ຄົນເຮົາໃຫ້ມີຄວາມແບ່ງແຍກກັນ, ທຸກຄົນບໍ່ຄືກັນແຕ່ກໍ່ສາມາດເຮັດໃຫ້ບັນລຸຈຸດປະສົງດຽວກັນໄດ້ ຖ້າເຮົາມີຄວາມເຄົາລົບເຊິ່ງກັນ ແລະ ກັນ. | ຜູ້ຮຽນສາມາດຈຳແນກຄວາມແຕກຕ່າງດ້ານຖິ່ນກຳເນີດ, ເຊື້ອຊາດ, ພາສາ, ເພດ, ອາຍຸ ສະພາບທາງກາຍ ຫຼື ສຸຂະພາບ ສະຖານະຂອງບຸກຄົນ ຖານະທາງເສດຖະກິດ ຫຼື ສັງຄົມ ຄວາມເຊື່ອທາງສາສະໜາ ການສຶກສາອົບຮົມ ຫຼື ຄວາມຄິດເຫັນທາງການເມືອງ ຄວາມແຕກຕ່າງຂອງບຸກຄົນເຫຼົ່ານີ້ຕ້ອງບໍ່ເຮັດໃຫ້ສັງຄົມແຕກແຍກ. | - ຄວາມແຕກຕ່າງບໍ່ສາມາດຕັດສິນຄວາມສະເໝີພາບໄດ້.<br>- ການເຄົາລົບຄວາມແຕກຕ່າງແມ່ນຈະນຳມາເຖິງຄວາມສະເໝີພາບທີ່ແທ້ຈິງ ແລະ ສາມາດເຮັດບັນລຸຈຸດປະສົງດຽວກັນໄດ້. | ວິທີການສອນໃນຂໍ້ນີ້ໃຫ້ອະທິບາຍຂໍ້ດີ ແລະ ນຳໃຊ້ຫຼັກການຂອງຄວາມແຕກຕ່າງ ແລະ ການເຄົາລົບຄວາມຫຼາກຫຼາຍເພື່ອການພັດທະນາວິຊາຊີບ ໂດຍຜ່ານກິດຈະກຳນ້ອຍໆ ແລະ ຄົ້ນຄວ້າ. | - ຮູບພາບ<br>- ເອກະສານທີ່ມີເນື້ອໃນກ່ຽວຂ້ອງ | - Ref: IBE/2018/OP/CD/07, INTERNATIONAL BUREAU OF EDUCATION, Training Tools for Curriculum Development: A RESOURCE PACK FOR GLOBAL CITIZENSHIP EDUCATION (GCED). pp. 216-217<br>- Siriporn Kraisomsart; Yurawat Klaimongkol, Ph.D. ; 2015 ; DEVELOPMENT OF CITIZENSHIP CHARACTERISTICS RESPECTING TO THE DIFFERENCES OF SIXTH GRADE STUDENTS BY USING PROJECT BASED LEARNING; http://www.edu.chula.ac.th/ojed |
| ຫຼັກສູດການຮຽນການສອນກ່ຽວກັບການສຶກສາພົນລະເມືອງໂລກ | | ເພື່ອໃຫ້ຜູ້ຮຽນສາມາດເຂົ້າໃຈການກຳນົດຈຸດປະສົງ ແລະ ຫົວຂໍ້ການສອດແຊກເນື້ອໃນການຮຽນຮູ້ ສພລ ຕາມລາຍວິຊາທຸກຂັ້ນທຸກສາຍ. | ຜູ້ຮຽນໃນກຸ່ມເປົ້າໝາຍສາມາດນຳໃຊ້ 9 ຫົວຂໍ້ຂອງການຮຽນຮູ້ ສພລ ເຂົ້າໃນຮູບແບບຈຸດປະສົງຕາມຫົວຂໍ້. | - | - ຕັ້ງຄຳຖາມສົນທະນາເປັນບຸກຄົນ, ຈັດເປັນຄູ່, ເປັນກຸ່ມສົນທະນາ ແລະ ລາຍງານ.<br>- ສະຫຼຸບ ແລະ ສັງລວມ | - ປື້ມອ່ານກ່ຽວກັບການສຶກສາພົນລະເມືອງໂລກ<br>- ເຄື່ອງ LCD 1 ຊຸດ, ຄອມພິວເຕີ. | - UNESCO.(2015).Global Citizenship Education: Topics and learning objectives.<br>- UNESCO. (2018). GCED a guide for trainers. |

| | | | | | | | |
|---|---|---|---|---|---|---|---|
| | | | | | | - ສະກອດ, ເຈັ້ຍແຜ່ນໃຫຍ່ ແລະ ເຝີດ.<br>- ຮູບພາບ, ບັດຄຳຖາມ, ໂພສເຕີ. | |
| ການຈັດຕັ້ງປະຕິບັດການຮຽນ-ການສອນ | | ເພື່ອໃຫ້ຜູ້ຮຽນສາມາດ:<br>- ຮູ້ ແລະ ເຂົ້າໃຈເນື້ອໃນຂອງ GCE<br>- ຈັດການຮຽນ-ການສອນກ່ຽວກັບ GCED<br>- ເຂົ້າໃຈວິທີການສອດແຊກ GCED ເຂົ້າໃນການຮຽນ-ການສອນລາຍວິຊາ ແລະ ຄຳນຶງເຖິງບົດບາດຍິງ-ຊາຍ | - ຜູ້ຮຽນເຂົ້າໃຈ ແລະ ສາມາດນຳເອົາເນື້ອໃນຂອງ GCED ໄປຈັດຕັ້ງປະຕິບັດໃນການຮຽນການສອນ.<br>- ມີຄວາມພ້ອມໃນການຈັດການຮຽນການສອນກ່ຽວກັບ ສພລ.<br>- ນຳໃຊ້ວິທີການສອດແຊກ ສພລ ເຂົ້າໃນການຮຽນການສອນລາຍວິຊາ ແລະ ຄຳນຶງເຖິງບົດບາດຍິງ-ຊາຍ. | - ການຈັດຕັ້ງປະຕິບັດການຮຽນ-ການສອນ ແລະ ການສອດແຊກ ສພລ ເຂົ້າໃນລາຍວິຊາ<br>- ການສອດແຊກ ສພລ ທີ່ຄຳນຶງເຖິງບົດບາດຍິງ-ຊາຍ | - ໃຊ້ຫຼາຍວິທີແຕກຕ່າງກັນ ໂດຍຂຶ້ນກັບແຕ່ລະຈຸດປະສົງ, ເນື້ອໃນບົດຮຽນຂອງແຕ່ລະລາຍວິຊາ.<br>- ໃຊ້ຫຼາຍຮູບແບບປະສົມປະສານກັນໂດຍນຳໃຊ້ວິທີການຮຽນແບບມີສ່ວນຮ່ວມ, ການປູກຈິດສຳນຶກ, ແບບລະດົມສະໝອງ, ຖາມ-ຕອບ, ແບບອະທິບາຍ, ຫຼິ້ນເກມ, ສົນທະນາເປັນກຸ່ມ, ຝຶກປະຕິບັດຕົວຈິງ, ບົດບາດສົມມຸດ ແລະ ໄປທັດສະນະສຶກສາ. | - ສື່ສິ່ງພິມ, ເອກະສານຊຸດເຄື່ອງມື, ວີດີໂອ, ຮູບພາບ, Internet, LCD ແລະ ອື່ນໆ. | - Training Tools for Curriculum Development, A RESOURCE PACK FOR GLOBAL CITIZENSHIP EDUCATION (GCED ໜ້າທີ 21-26)<br>- Training Tools for Curriculum Development: A RESOURCE PACK FOR GLOBAL CITIZENSHIP EDUCATION (GCED ໜ້າທີ 115-116) |
| ການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ | | ເພື່ອເຮັດໃຫ້ຄູສາມາດ:<br>- ຮູ້ ແລະ ເຂົ້າໃຈເນື້ອໃນຂອງການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ;<br>- ຈັດການຮຽນ-ການສອນກ່ຽວກັບ ສພລ ໂດຍຜ່ານ 4 ຂອບເຂດຂອງການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ. | - ຜູ້ຮຽນເຂົ້າໃຈ ແລະ ສາມາດນຳເອົາເນື້ອໃນຂອງ ສພລ ໄປຈັດຕັ້ງປະຕິບັດໃນການຮຽນການສອນ<br>- ມີຄວາມພ້ອມໃນການຈັດການຮຽນການສອນກ່ຽວກັບ ສພລ. | - ວິທີການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ, 4 ຂອບເຂດຂອງກິດຈະກຳ, ຂັ້ນຕອນການປະຕິບັດກິດຈະກຳ ແລະ ການເຊື່ອມໂຍງກັບ ສພລ. | - ນຳໃຊ້ຫຼາຍວິທີແຕກຕ່າງກັນ ໂດຍຂຶ້ນກັບຈຸດປະສົງ, ເນື້ອໃນບົດຮຽນຂອງແຕ່ລະລາຍວິຊາ.<br>- ສາມາດໃຊ້ຫຼາຍຮູບແບບປະສົມປະສານກັນໂດຍນຳໃຊ້ວິທີການຮຽນແບບມີສ່ວນຮ່ວມ, ການ | ສື່ສິ່ງພິມ, ເອກະສານຊຸດເຄື່ອງມື, ວີດີໂອ, ຮູບພາບ, Internet, LCD ແລະ ອື່ນໆ ທີ່ກ່ຽວຂ້ອງກັບ ສພລ. | - ປຶ້ມຄູ່ມືການປະຕິບັດກິດຈະກຳຮອບດ້ານໃນໂຮງຮຽນ ສະບັບພາສາລາວ |

| | | | | | | | |
|---|---|---|---|---|---|---|---|
| | | - ປະຕິບັດກິດຈະກຳ ສພລ ພາຍໃນໂຮງຮຽນໄດ້ຢ່າງມີປະສິດທິພາບ. | - ນຳໃຊ້ວິທີການສອດແຊກ ສພລ ເຂົ້າໃນການຮຽນການສອນລາຍວິຊາ ແລະ ຄຳນຶງເຖິງບົດບາດຍິງ-ຊາຍ. | | ປູກຈິດສຳນຶກ, ແບບລະດົມສະໝອງ, ຖາມ-ຕອບ, ແບບອະທິບາຍ, ຫຼິ້ນເກມ, ສົນທະນາເປັນກຸ່ມ, ຝຶກປະຕິບັດຕົວຈິງ, ບົດບາດສົມມຸດ ແລະ ທັດສະນະສຶກສາ. | | |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 362 /ສສກ
ນະຄອນຫຼວງວຽງຈັນ, ວັນທີ ໒ ກຸມພາ 2022

## ຂໍ້ຕົກລົງ
### ວ່າດ້ວຍການຮັບຮອງ ແລະ ອະນຸມັດນຳໃຊ້ປື້ມແນະນຳ ການສຶກສາພົນລະເມືອງໂລກ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18/11/2021;
- ອີງຕາມ ໜັງສືສະເໜີຂອງກົມຮ່ວມມືກັບຕ່າງປະເທດສະບັບເລກທີ 159/ຮມ, ລົງວັນທີ 25 ມັງກອນ 2022

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

ມາດຕາ 01 ຮັບຮອງ ແລະ ອະນຸມັດນຳໃຊ້ປື້ມແນະນຳການສຶກສາພົນລະເມືອງໂລກ ເປັນເອກະສານອ່ານເສີມ ແລະ ເຊື່ອມສານເຂົ້າໃນການຈັດການຮຽນການສອນທີ່ມີເນື້ອໃນກ່ຽວຂ້ອງກັບການສຶກສາພົນລະເມືອງໂລກ ໃນທຸກຊັ້ນ, ທຸກສາຍ ທັງພາຍໃນໂຮງຮຽນ ແລະ ນອກໂຮງຮຽນ.

ມາດຕາ 02 ມອບໃຫ້ວິທະຍາໄລຄູທຸກໆແຫ່ງເຜີຍແຜ່ປື້ມແນະນຳການສຶກສາພົນລະເມືອງໂລກໃນເວັບໄຊທ໌ ແລະ ສື່ອອນລາຍຕ່າງໆຂອງຕົນຕາມຄວາມເໝາະສົມ.

ມາດຕາ 03 ໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ, ກົມຮ່ວມມືກັບຕ່າງປະເທດ, ກົມສ້າງຄູ, ວິທະຍາໄລຄູທົ່ວປະເທດ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຕາມໜ້າທີ່ຂອງໃຜລາວ.

ມາດຕາ 04 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

<u>ບ່ອນສົ່ງ:</u>

| | |
|---|---|
| - ຫ້ອງການກະຊວງສຶກສາທິການ ແລະ ກິລາ | 1 ສະບັບ |
| - ກົມຈັດຕັ້ງ ແລະ ພະນັກງານ | 1 ສະບັບ |
| - ກົມສ້າງຄູ | 1 ສະບັບ |
| - ກົມຮ່ວມມືກັບຕ່າງປະເທດ | 1 ສະບັບ |
| - ວິທະຍາໄລຄູ ແຫ່ງລະ | 1 ສະບັບ |
| - ເກັບມ້ຽນ | 1 ສະບັບ |